ສະຖາບັນຄົ້ນຄ້ວາສິລະປະວັນນະຄະດີແຫ່ງຊາດ



# ໂຮມນິທານ ພື້ນເມືອງ


ໂຮມນິທານ
ພື້ນເມືອງ

ຈັດພິມໂດຍ

ສະຖາບັນຄົ້ນຄວ້າສິລະປະວັນນະຄະດີແຫ່ງຊາດ

ເລກຂຶ້ນທະບຽນ ໐໐໑/ພ.ຈ.ຫນ

ເລກທີພິມຈຳຫນ່າຍ ໐໐໐໑/ພ.ຈ.ຫນ

ຈຳນວນພິມ ໔.໐໐໐ ເຫຼັ້ມ

ວຽງຈັນ 1986

ສະຫງວນລິຂະສິດ

ອອກແບບປົກ ຄຳວິຈິດ
ປະດັບປະດາ ສູລິຍັນ ສີແສງລັດ
ພູວົງ ສູລິຍະ
ຮູບປະກອບ ສົງກະລີ
ສະແດງແບບປົກ ເຢຍທາວ

<u>ຄຳນຳ</u>

ໂດຍທົ່ວໄປແລ້ວ ໃຜໆກໍຍອມຮັບວ່າ ນິທານພື້ນບ້ານພື້ນເມືອງ ຫຼືນິທານປາກເປົ່າ ທີ່ເລົ່າສືບກັນມາຕາມກາງບ້ານຮ້ານຊ່ອງ ແຕ່ຄົນຮຸ່ນໜຶ່ງຫາຮຸ່ນໜຶ່ງນັ້ນ ມີຄວາມສຳຄັນເທົ່າໆກັບບູຮານວັດຖຸ ປະເພນີຫຼືຮີດຄອງຕ່າງໆ ທີ່ສືບທອດກັນມາ - ເພື່ອຊ່ອຍໃຫ້ພວກເຮົາເຫັນຄວາມເປັນມາທີ່ແທ້ຈິງ ຂອງສັງຄົມໃນອະດີດຕະການ, ມັນແຊກສອດເຂົ້າໃນທຸກໆວິທະຍາສາດສັງຄົມ ຈະແມ່ນປະຫວັດສາດ ສັງຄົມວິທະຍາ ຊົນເຜົ່າວິທະຍາ ວັດທະນະທຳວິທະຍາ ຫຼື ວັນນະຄະດີ ແລະ ອື່ນໆກໍເຊັ່ນກັນ ແຕ່ຜ່ານມາ ນັກຄົ້ນຄວ້າທາງດ້ານວິທະຍາສາດສັງຄົມພວກເຮົາບໍ່ທັນ ໄດ້ໃຫ້ຄວາມເອົາໃຈໃສ່ພຽງພໍໃນການເກັບກຳ ແລະ ສະສົມວັນນະກຳຍິບຍ່ອຍ ດ້ານນີ້ເທົ່າໃດ ເຊິ່ງເຫດຜົນຂອງມັນກໍມາຈາກຫຼາຍປະການດ້ວຍກັນ ໃນນັ້ນອັນຕົ້ນຕໍແມ່ນຍ້ອນວົງການຜູ້ປົກຄອງໃນສັງຄົມທີ່ມີຊົນຊັ້ນບໍ່ໃຫ້ຄວາມສົ່ງເສີມ ການທີ່ເປັນ ເຊັ່ນນັ້ນ ກໍເພາະວ່າ ນິທານພື້ນເມືອງຫຼືນິທານປາກເປົ່າຂອງເຜົ່າຕ່າງໆນັ້ນ ສ່ວນຫຼວງຫຼາຍ ແມ່ນພະຫຼິດຕະພັນຊົນຊັ້ນສາມັນ ຜູ້ອອກແຮງງານຢູ່ໃຕ້ການກົດຂີ່ ໜີບເຕັງ ມັນຈຶ່ງສະທ້ອນໃຫ້ເຫັນການຕໍ່ສູ້ລະຫວ່າງຊົນຊັ້ນແດ່ ລະຫວ່າງຄວາມເປັນທຳ ແລະ ຄວາມອະທຳແດ່ ການຕໍ່ສູ້ກັບທຳມະຊາດແດ່ ຫຼື ສະທ້ອນໃຫ້ເຫັນແບບວິທີແກ້ໄຂບັນຫາ ຫຼື ປາກົດການໃດໜຶ່ງ ຂອງທຳມະຊາດ ແລະ ສັງຄົມໃນຍຸກນັ້ນໆ ຊີວິດຕົວຈິງ ໄດ້ຢັ້ງຢືນຢ່າງຈະແຈ້ງແລ້ວວ່າ ໃນສັງຄົມທີ່ມີຊົນຊັ້ນນັ້ນ ມີ ໒ ປະເພດວັນນະຄະດີ ຄື ປະເພດ ວັນນະຄະດີ ທີ່ຮັບໃຊ້ຊົນຊັ້ນເທິງ ຫຼື ຊົນຊັ້ນປົກຄອງນັ້ນ ຖືວ່າ ແມ່ນວັນນະຄະດີ "ຊັ້ນສູງ" ແລະ ວັນນະຄະດີ ພື້ນບ້ານຂອງມວນຊົນ ຜູ້ອອກແຮງງານ ແລະ ຜູ້ຖືກກົດຂີ່ ເຊິ່ງມັກຖືກຢຸບຢອບໃຫ້ເປັນວັນນະຄະດີຊັ້ນຕ່ຳ ວັນນະຄະດີທີ່ຮັບໃຊ້ຊົນຊັ້ນເທິງ ຫຼື ທີ່ເອີ້ນວ່າ ວັນນະຄະດີຊັ້ນສູງນັ້ນ ໂດຍທົ່ວໄປແລ້ວ ມັກເຊີດຊູບົດບາດຄວາມຍິ່ງໃຫຍ່ ຄວາມສັກສິດ ລິດເດດ ຂອງອະພິຊົນ ສັກດີນາ

ອະພິນິຫານອັນມາຈາກອິດທິພົນຂອງສາສະໜາ ຈິດນິຍົມ ສ່ວນວັນນະຄະດີ ທີ່ຖືວ່າຊັ້ນຕ່ຳນັ້ນ ແມ່ນວັນນະຄະດີພື້ນບ້ານຂອງມວນຊົນ ສະແດງອອກເຖິງ ຄວາມໄຝ່ຝັນແຝງດ້ານລັກສະນະອະພິນິຫານ ແລະ ສຽດສີ ເຍາະເຍີ້ຍ ຊົນຊັ້ນປົກຄອງຢູ່ໃນຕົວ

ໂດຍອີງຕາມແນວທາງ "ປົກປັກຮັກສາ ແລະ ຂະຫຍາຍວັດທະນະທຳຂອງເຜົ່າຊົນ", ສະຖາບັນຄົ້ນຄວ້າສິລະປະ ແລະ ວັນນະຄະດີແຫ່ງຊາດ ຈຶ່ງເຫັນວ່າ ພາລະໜ້າທີ່ຮີບດ່ວນອັນໜຶ່ງຂອງຕົນ ທີ່ຕ້ອງປະຕິບັດໃນທັນທີກໍແມ່ນ ການລົງຊອກຄົ້ນ ເກັບກຳສະສົມ ເອົານິທານພື້ນເມືອງ ຈາກການເລົ່າຂອງ ຜູ້ເຖົ້າ ຜູ້ແກ່ຊົນຊາດ ຊາດເຜົ່າຕ່າງໆ ໃນທົ່ວປະເທດໃຫ້ໄດ້ຫຼາຍ ແລະ ໄວທີ່ສຸດເທົ່າທີ່ ຈະໄວໄດ້ ທັງນີ້ເພື່ອຫລີກເວັ້ນຈາກການຕົກຫຼຸເຮ່ຍເສຍຫາຍ ເພາະບໍ່ດັ່ງນັ້ນຈະເປັນດັ່ງນັກປາດບາງທ່ານເຄີຍເວົ້າປຽບທຽບໄວ້ຢ່າງເລິກເຊິ່ງວ່າ : ຜູ້ເຖົ້າຄົນໜຶ່ງລ່ວງລັບໄປກໍ່ຊ່ຳກັບວ່າຫ້ອງສະໝຸດຫ້ອງໜຶ່ງສາບສູນໄປ

ແນ່ນອນວ່າ ບາດກ້າວທຳອິດຂອງສະຖາບັນ ໃນການປະຕິບັດພາລະອັນມີຄວາມໝາຍສຳຄັນຢ່າງໜຶ່ງ ທາງດ້ານວັດທະນະທຳນີ້ ຄົງບໍ່ສາມາດຫຼີກ ລ່ຽງຈາກຂໍ້ຂາດຕົກບົກພ່ອງ ຊຶ່ງເກີດຈາກຂໍ້ຫຍຸ້ງຍາກ ອັດຕະວິໄສ ແລະ ພາວະວິໄສໄດ້ ເຊັ່ນຕົວຢ່າງ ຂອບເຂດການຄົ້ນຄວ້າເກັບກຳຈຳກັດ ຂາດບົດຮຽນ ໃນການຊອກຄົ້ນສືບສາວຫາ "ບໍ່" ວັນນະກຳທ້ອງຖິ່ນ ການຄັດຈ້ອນໄຈ້ແຍກນິທານ ພື້ນເມືອງປາກເປົ່າ ກັບນິທານສາດສະໜາ ເທບນິຍາຍ ນິທານແອ່ມປະຫວັດສາດ ນິທານອີສີບຕ່າງປະເທດ ຍັງເຮັດບໍ່ໄດ້ດີລະອຽດເທົ່າທີ່ຄວນ ອີງໃສ່ການປະກອບຄວາມເຫັນການຮ່ວມມືຈາກຜູ້ມີບົດຮຽນຫຼາຍໆດ້ານ ພວກເຮົາຫວັງວ່າ ຈະສາມາດແກ້ໄຂປັບປຸງຈຸດອ່ອນຕ່າງໆເຫຼົ່ານີ້ໃຫ້ດີຂຶ້ນກວ່າເກົ່າໃນໂອກາດຕໍ່ໄປ ຈາກຄວາມຊົງຈຳຂອງຜູ້ເລົ່າປະກອບໃສ່ແວວປະເສີດ ມີວາທະສິນ ໃນການເລົ່າຂອງຜູ້ ອາຈຸໂສເຈົ້າຂອງເລື່ອງໃນແຕ່ລະທ້ອງຖິ່ນ ສົມທົບກັບ ຈິນຕະນາການຂອງຜູ້ຂຽນ (ຟັງແລວນຳມາຂຽນ) ນິທານ ໑໐ ກວ່າເລື່ອງ ທີ່ຈັດພິມອອກໃນຄັ້ງນີ້ ຈຶ່ງມີສີສັນລີລາແຕກຕ່າງກັນຢ່າງເຫັນໄດ້ຄັກ ແຕ່ເບິ່ງໃນດ້ານທາດແທ້ເນື້ອໃນແລ້ວ ສ່ວນຫຼວງ - ຫຼາຍ ກໍຖືວ່າເປັນເລື່ອງທີ່ມີປະໂຫຍດ ມີແນວຄິດສ້າງສັນ ໃຫ້ສາລະຄວາມຮູ້ ສຶກສາອົບຮົມໄດ້ດີສົມຄວນ ສ່ວນນິທານສັດ ຈຳນວນໜຶ່ງນັ້ນ ກໍເຫັນວ່າ ມີລັກສະນະເປັນນິທານສາກົນ ສົມບູນແບບ ຄືມີເປົ້າໝາຍສະເພາະ ເພື່ອອະທິບາຍ ປາກົດ

ການທາງດ້ານທຳມະຊາດ ບົນຂໍ້ສົມມຸດຖານໃດໜຶ່ງເທົ່ານັ້ນ, ຢ່າງໃດກໍຕາມ ລີລາຂອງເລື່ອງ ຫຼື ຂອດຂັດແຍ່ງໃນບາງບົດນັ້ນ ກໍຍັງເຂີນເບົາ ບໍ່ສົມເຫດ ສົມຜົນຢ່າງສົມບູນຢ່າງຂາດຂັ້ນເທື່ອ ແຕ່ເພື່ອຮັກສາໄວ້ເຊິ່ງທາດແທ້ທຳມະຊາດ ນິທານປາກເປົ່າ ແລະ ເພື່ອໃຫ້ນັກຄົ້ນຄວ້າ ນັກສຶກສາ ໄດ້ມີໂອກາດສຳຜັດກັບວັດຖຸ ດິບພື້ນຖານແທ້ໆ ໂດຍຕົນເອງ ຜູ້ຂຽນແຕ່ລະຄົນຈຶ່ງບໍ່ພະຍາຍາມປຸງແຕ່ງສາງຂອດຂັດແຍ່ງໃຫ້ຈັດເຈນຂຶ້ນຕື່ມ

ແລະ ເນື່ອງຈາກວ່າ ນິທານສິບກວ່າເລື່ອງນີ້ ເປັນຜົນງານຂອງນັກຄົ້ນຄວ້າ ນັກວັນນະຄະດີ ຫຼາຍຄົນ ລີລາ ສິລະປະການຂຽນ (ເລົ່າ) ຈຶ່ງຍ່ອມມີອັນແຕກຕ່າງກັນເປັນທຳມະດາ ແລະ ທາງສະຖາບັນ ເຫັນວ່າ ຍິ່ງ ການສະເໜີນິທານມີຫຼາຍຮູບການ ຫຼາຍສຳນວນ ມັນກໍຍິ່ງຈະສ້າງບັນຍາກາດໃໝ່ຂຶ້ນເລື້ອຍ ໆ ໃຫ້ແກ່ຜູ້ອ່ານ ທັງເປັນໂອກາດອັນດີ ເພື່ອອຸທິດສະໜາມທົດລອງໃຫ້ແກ່ ຜູ້ທົດສອບປາຍປາກກາໃໝ່ ໝາຍຄວາມວ່າ ທາງສະຖາບັນພວກເຮົາບໍ່ໄດ້ຜູກຂາດ ຕັດສິນວ່າ ສຳນວນໃດ ຮູບການຂຽນແບບໃດ ດີເດັ່ນ ໜ້າຈັບໃຈກວ່າໝູ່ ເພາະ - ການຕັດສິນໃດໆ ແມ່ນຂຶ້ນກັບມະຫາຊົນ ທ່ານຜູ້ອ່ານເທົ່ານັ້ນ

ຢ່າງໃດກໍດີ ປຶ້ມຫົວນີ້ ແມ່ນຜົນງານທຳອິດຂອງຊຸດນິທານປາກເປົ່າລາວເຮົາເຜົ່າຕ່າງໆ ທີ່ນອນຢູ່ທິດທາງ "ສະສົມ ແລະ ປົກປັກຮັກສາມໍລະດົກ ທາງວັດທະນະທຳ" ທີ່ທາງພະແໜກວັນນະຄະດີ ຂອງສະຖາບັນຄົ້ນຄວ້າສິລະປະ ວັນນະຄະດີແຫ່ງຊາດພວກເຮົາ ກຳລັງຊຸ້ມຂຽວປະຕິບັດຢູ່ ຄາດວ່າ ຈາກບົດຮຽນ ທີ່ພວກເຮົາໄດ້ຮັບໃນການຈັດພິມປຶ້ມຫົວນີ້ແລ້ວໃນອະນາຄົດອັນບໍ່ດົນ ພວກເຮົາຈະໄດ້ ພິມຫົວໃໝ່ ໜ້າຈັບໃຈກວ່ານີ້ອອກມາສູ່ສາຍຕາຂອງທ່ານນັກຄົ້ນຄວ້າ ແລະ ນັກອ່ານທັງຫຼາຍຕໍ່ໆໄປ ກິດຈະການຂອງພວກເຮົາ ຈະດຳເນີນໄປໄດ້ດີນັ້ນ ແນ່ນອນບໍ່ສາມາດປາສະຈາກການໃຫ້ຄວາມຮ່ວມມືປະກອບສ່ວນຢ່າງເສຍສະຫຼະ ຈາກ ອຳນາດການປົກຄອງທ້ອງຖິ່ນຕ່າງໆ ຈາກຄະນະກຳມະການຊົນເຜົ່າ ຄູອາຈານ ນັກຮຽນ

ນັກສຶກສາ ພະນັກງານ ລັດຖະກອນ ຂັ້ນຕ່າງໆ ແລະ ຜູ້ຈິງຄຸນວຸດທິອາວຸໂສຂອງເຜົ່າຕ່າງໆໃນທົ່ວປະເທດ ທີ່ປາຖະໜາປົກປັກຮັກສາ ແລະ ສະສົມມໍລະດົກ ຂອງພວກເຮົາທາງດ້ານນີ້ໄວ້ໃຫ້ຍືນຍົງຕະຫຼອດການ

ສະຖາບັນຄົ້ນຄ້ວາ ສິລະປະ
ວັນນະຄະດີແຫ່ງຊາດ.



# ທ້າວມຸຕົງ ແລະ ນາງແກ້ວໜາະ

ແຕ່ກີ້ແຕ່ກ່ອນ ຍັງມີຊາຍຄົນໜຶ່ງຊື່ວ່າ ມຸຕົງ. ມຸຕົງມັກແຄນມາແຕ່ນ້ອຍໆພຸ້ນ ລາວຊອກຮຽນນຳນັກເປົ່າແຄນຢູ່ໃນບ້ານ ແລະອາຈານທາງດົນຕີ ທີ່ຢູ່ກວງໄກ ຈາກນັ້ນ ລາວກໍກາຍເປັນນັກເປົ່າແຄນທີ່ມີຊື່ສຽງໂດ່ງດັງ ໃນບ້ານຜູ່ໜຶ່ງ ມຸຕົງສາມາດເປົ່າໄດ້ທັງໝົດຮອດສິບສອງບົດ ແຕ່ລະບົດແຕກອອກ ເປັນສິບສອງຈັງຫວະຕ່າງກັນ ທ້າວບໍ່ພຽງແຕ່ຈື່ຈຳໄດ້ຫຼາຍບົດຫຼາຍຈັງຫວະ ເທົ່ານັ້ນ ຫາກຍັງສາມາດສະແດງລວດລາຍທີ່ມີສິລະປະຄ່ອງແຄ່ວອີກດ້ວຍ

ມຸຕົງ ສາມາດຢືນຂາດຽວຢູ່ເທິງຕໍ່ໄມ້ ເປົ່າແຄນແລະປິ້ນໂຕໄປຕາມ ຈັງຫວະຢ່າງໜ້າອັດສະຈັນ ຊາວບ້ານຍັງຊ່ຳລືອີກວ່າ ລາວສາມາດຢືນຂາດຽວເປົ່າແຄນເທິງໜ້າແປ້ນທີ່ໂຮຍດ້ວຍຂີ້ເຖົ່າບາງໆ ປີ້ນອ້ອມຕົວຂອງຕົນເອງ ຢ່າງແນບນຽນວ່ອງໄວປະສານກັບສຽງເພງ ແນມເບິ່ງຄ້າຍກັບໝາກຄ່າງທີ່ກຳລັງຫັນຈ້ນງູຢູ່ ແລະ ຈົນເຖິງຂັ້ນວ່າ ຫຼັງຈາກມຸຕົງເປົ່າແລ້ວ ຫຼຽວເບິ່ງຮອຍຕີນທີ່ລາວປະໄວ້ເທິງໜ້າແປ້ນມີຂີ້ເຖົ່າໂຮຍນັ້ນ ເຫັນມີແຕ່ຮອຍດຽວ ສະແດງວ່າຕະຫຼອດ ໄລຍະເປົ່າແຄນ ພ້ອມທັງສະແດງລວດລາຍສິລະປະແຕ່ກົກເຖິງປາຍ ມຸຕົງບໍ່ໄດ້ປ່ຽນຕີນຈັກເທື່ອເລີຍ ສິ່ງທີ່ໜ້າອັດສະຈັນໄປກວ່ານັ້ນອີກ ແມ່ນລາວສາມາດຢືນຂາ ດຽວ_

ເທິງແປ້ນນ້ອຍໆ ກ່າຍເທິງຫມັ້ນກ້ຳຮອນກູ້ກຳລັງຝຶກແຮງໆ ແລ້ວເປົ່າແຄນໄດ້ຢ່າງສະຫວ່າງຜ່າເພີຍ ແລະ ບໍ່ຜິດຈັງຫວະຈັກຫນ້ອຍເລີຍ

ມໍ່ໃຫຍ່ຂຶ້ນເປັນບ່າວຊອ່ມ ພໍ່ແມ່ກໍ່ລົ້ມຫາຍຕາຍຈາກ ທ້າວຈຳຕ້ອງດຳລົງຊີວິດກຳພອຍຢ່າງທຸກຈົນໃນຕູບນ້ອຍເປ່ເພຢູ່ແຄມບ້ານ

ໃນປີນັ້ນ ປະຊາຊົນໃນບ້ານໄດ້ຮັດບຸນໃຫຍ່ ເພື່ອເສັງຄັດເລືອກຜູ້ມີ ວິຊາສິລະປະສາດຕ່າງໆ ຢູ່ໃນເຂດ ບັນຍາກາດໃນບຸນຄຶກຄື້ນເປັນພິເສດ ມີທັງ ອາຫານແຊບຫຼາຍຢ່າງ ເຊິ່ງຮັດມາຈາກຊີ້ນໄກ່ ຫມູ ງົວ ຄວາຍ ເຂົ້າໂພດສາລີ ມີທັງເຫຼົ້າຫອມຫວານນາງຊະນິດ ໃນຊຸມນີ້ດັ່ງກ່າວ ຊາວບ້ານທັງຫຼາຍນຸ່ງເຄື່ອງ ເອ້ຍ້ອງພາກັນໄປບຸນ ສ່ວນນູຕົງບໍ່ໄປໃສ່ນຳເພິ່ນ ທ້າວເອົາຂີ້ຫມິ່ນຫມໍ້ທາຫນ້າໃຫ້ດຳມອມແມມ ແລະ ນຸ່ງເສື້ອຂາດຫຼຽນທີ່ສຸດ ແລ້ວນັ່ງເຫຼົ້າລູກຫນ້າຢູ່ຫນ້າເຮືອນ ພວກຜູ້ສາວບ້ານໃກ້ໄກພາກັນຍ່າງຜ່ານເຮືອນນູຕົງ ເພື່ອໄປທ່ຽວບຸນ

ສາວອີເປີເຢີ ຫນຶ່ງໃນສາວງາມເດັ່ນຂອງບ້ານກໍ່ໄປບຸນ ເມື່ອນາງ ຍ່າງກາຍມາ ນູຕົງເຫັນກໍ່ຮ້ອງໃສ່ :

– ໂອ່ ! ເຈົ້າຜູ້ເພດງາມເອີ້ຍ ໄດ້ໄປບຸນແລ້ວ ເອົາຂອງກິນແຊບໆ ມາຕ້ອນນ້ອຍແດ່ເດີ້ ສ່ວນຂ້ອຍເອງບໍ່ມີເຄື່ອງງາມນຸ່ງ ບໍ່ໄດ້ໄປນຳເພິ່ນແລ້ວ

ໄດ້ຍິນແລ້ວ ສາວອີເປີເຢີ ຟ້າວຕອບກະທັ່ງກະແທກໃສ່ວ່າ :

– ເຮີຍ ! ຂີ້ຮາຍຄືມຶງນັ້ນ ມີແຕ່ຜີຫັ້ນແລ້ວຊິເອົາຂອງກິນມາໃຫ້.

ອີເປີເຢີທັງເວົ້າທັງຍ່າງຟຶດຟັດກາຍບ້ານນູຕົງໄປ ຕໍ່ມາສາວອີເປີເຢີນ້ອຍກໍ່ຍ່າງຜ່ານມາ ນູຕົງກໍ່ເອີ້ນໃສ່ເຫມືອນທີ່ເອີ້ນໃສ່ອີເປີເຢີໃຫຍ່ ສາວອີເປີເຢີ ນ້ອຍກໍ່ຕອບຄືກັນກັບອີເປີເຢີ ທັງຮອດບໍ່ງວາກຫນ້າມາເບິ່ງນູຕົງຊ້ຳ

ນາງກຳພ້າເກົ້າເນາະຍ່າງຜ່ານມາ ນູຕົງກໍ່ຮ້ອງໃສ່ຄືກັນກັບຮ້ອງໃສ່ ສອງນາງ ແຕ່ນາງເກົ້າເນາະພັດຕອບເປັນສຽງນອນໆວ່າ :

– ເຈົ້າ ອ້າຍໄປບໍ່ໄດ້ ນ້ອງໄປມີຫຍັງກໍ່ຈະເອົາມາຕ້ອນດອກ

ຮອດຕອນແລງ ນາງເກົ້າເນາະກໍ່ກັບມາແຕ່ບຸນ ນາງເອົາທັ່ງຊີ້ນ ຕັບ ແລະເຄື່ອງໃນຄວາຍຕົ້ມມາຕ້ອນນູຕົງຕາມຄຳທ້າວສັ່ງຂໍ

ມື້ຕໍ່ມາ ທັງສາມນາງຍ່າງໄປບຸນຜ່ານເຮືອນນູຕົງອີກ ນູຕົງກໍ່ຮ້ອງໃສ່ ຄືມື້ຜ່ານມາ ແຕ່ລາວກໍ່ຖືກອີເປີເຢີ ແລະ ອີເປີເຢີນ້ອຍຫມິ່ນປະຫມາດຄືເກົ່າ ມີແຕ່

ນາງເກົ້າເນາະພູດຮອດຕອນວ່າ ຈະເອົາເຂົ້າຫນົມເຂົ້າຕົ້ມມາຕ້ອນທ້າວ

ເມື່ອສາມນາງຍ່າງໄປຫວິດ ນູຕົງຟ້າວໄປອາບນ້ຳ ຮຸກສີຫນ້າຕາໃຫ້ ສະອາດ ແລ້ວນຸ່ງສົ້ງເສື້ອທີ່ແມ່ຕ່ຳໃຫ້ແຕ່ງພູນແລ້ວຈຶ່ງໄປບຸນ ຢູ່ໃນບຸນລີວົງພູນຜູ້ບ່າວທັງຫຼາຍຕ່າງກໍສະແດງຄວາມສາມາດທາງດ້ານສິລະປະຂອງຕົນໃຫ້ ຊາວບ້ານເບິ່ງ ສ່ວນນູຕົງສະແດງລາຍການເປົ່າແຄນ ສຽງແຄນຂອງນູຕົງໄດ້ດຶງດູດຈິດໃຈຂອງຊາວບ້ານຢ່າງຫຼວງຫຼາຍ ສຽງແຄນຂຶ້ນລົງເປັນຈັງຫວະສົມທົບກັບອາດຫວ່ຽວໂຕໄປມາຂອງນູຕົງ ເຮັດໃຫ້ສາວອີເຢີເຢີ ແລະ ອີເຢີເຢີນ້ອຍຕິດໃຈທີ່ສຸດ

ຫຼັງຈາກສຽງແຄນນູຕົງສຸດລົງ ສອງສາວກໍຟ້າວແຫຍເຂົ້າມາຫາ ເຮັດທ່າທາງອໍເຊາະແຊະແຊະໃສ່ທ້າວ ຫວັງຢາກໃຫ້ທ້າວຮັບເອົາຕົນໄປເປັນເມຍ ແຕ່ນູຕົງເວົ້າຈະແຈ້ງກັບສອງນາງວ່າ :

- ຂ້ອຍມາຫຼິ້ນບຸນເພື່ອເປົ່າແຄນ ບໍ່ແມ່ນມາຊອກເມຍ

ເຖິງທ້າວຈະເວົ້າແນວນັ້ນກໍຕາມ ແຕ່ສອງສາວກໍຍັງບໍ່ຍອມຍ່າງຫນີຈາກ - ທ້າວຈັກກ້າວເລີຍ ນູຕົງຈຶ່ງຈຳເປັນຫາວິທີອອກຕ່າງ ລາວເວົ້າກັບພວກເຂົາວ່າ :

- ເປົ່າແຄນເມື່ອຍຫຼາຍ ຂ້ອຍຫິວນ້ຳ ຂໍເພິ່ງພວກນາງທັງສອງໄປຕັກນ້ຳມາສູ່ກິນແດ່

ໃນຂະນະທີ່ນາງທັງສອງໄປຕັກນ້ຳນັ້ນ ນູຕົງກໍຟ້າວລັກແລ່ນຫນີ ເມືອເຮືອນຂອງຕົນ ແລ້ວທາຫມິ້ນຫມໍ້ ນຸ່ງສົ້ງເສື້ອຂາດນັ່ງເຫຼົາລູກຫມາຢູ່ບ່ອນເກົ່າ ເມື່ອອີເຢີເຢີແລະອີເຢີເຢີນ້ອຍກັບມາແຕ່ຕັກນ້ຳ ຊອກນູຕົງບໍ່ເຫັນເລີຍ ຟ້າວແລ່ນນຳຕາມຮອຍຕີນນູຕົງໄປ ນຳໄປນຳໄປ ກໍໄປຮອດຕູບນ້ອຍຫຼັງຫນຶ່ງທີ່ເກົ່າຮາງ ແຕ່ ບໍ່ເຫັນຮອຍຕີນໄປຕໍ່ອີກ ເຫັນແຕ່ຊາຍກ່ຳພາຫນ້າຫມອງ ເສື້ອຕາບຫນາຕາບຫຼັງ ນັ່ງເຫຼົາລູກຫມາຢູ່ ສອງສາວບໍ່ຄຶດວ່າ ຊາຍເປົ່າແຄນທີ່ພວກເຂົາຊອກຫານັ້ນ ແມ່ນຊາຍກ່ຳພາຫນ້າຫມອງຄົນນີ້ ຈຶ່ງພາກັນຖາມວ່າ :

- ນີ້ນະ ! ມຶງເຫັນບ່າວງາມຄົນຫນຶ່ງຫອບແຄນແລ່ນມາທາງນີ້ບໍ່ ?

ນູຕົງຕອບພວກເຂົາວ່າ:

- ບໍ່ ! ບໍ່ເຫັນໃຜຫມົດ

ສອງສາວຮ້າຍໃສ່ວ່າ :

- ຈັ່ງແມ່ນມຶງຫືກນໍ ນັ່ງຕາຍຢູ່ຫນີ້ໃຜຍ່າງກາຍໄປກໍບໍ່ເຫັນ

ກ່າວເຖິງນາງເກົ້າເນາະ ກໍຍັງຫໍ່ເອົາເຄື່ອງກິນມາຕ້ອນຊາຍກຳພ້າ ຄືກັນກັບມື້ວານນີ້ອີກ ຮອດມື້ທີສາມມາ ເຫດການກໍເປັນໄປຄືກັບສອງມື້ນັ້ນອີກ ຫຼັງຈາກສາມນາງໄປຫວິດ ນູຕົງກໍຟ້າວໄປອາບນ້ຳ ນຸ່ງເຄື່ອງສະອາດແລ້ວຫອບແຄນໄປນຸ່ນເພື່ອເປົ່າແຄນຄືມື້ຜ່ານໄປນັ້ນອີກ ພໍເມື່ອອີເຢີເຢີ ແລະອີເຢີເຢີນ້ອຍມາບເຫັນ ນັກເປົ່າແຄນ ກໍຟ້າວແລ່ນມາເກີເບິ່ງອີກ ຫຼັງຈາກເປົ່າແຄນແລ້ວ ນູຕົງກໍຫາສອງສາວໄປຊອກນ້ຳມາໃຫ້ກິນອີກ ແຕ່ເທື່ອນີ້ ມີແຕ່ອີເຢີເຢີຄົນດຽວໄປຕັກນ້ຳ ສ່ວນອີເຢີເຢີນ້ອຍ ນັ່ງເຝົ້ານູຕົງຢູ່ບໍ່ອາງ ເພາະຢ້ານຊອກຫາບໍ່ເຫັນຄືມື້ວານນີ້ອີກ ດັ່ງນັ້ນເທື່ອນີ້ ນູຕົງຫນີບໍ່ໄດ້ ສອງສາວຈຶ່ງນຳທ້າວເມືອຮອດເຮືອນ ແລ້ວຈຶ່ງຮູ້ວ່າ ຊາຍຄົນນີ້ແມ່ນກຳພ້າຂີ້ທຸກ ນັ່ງເຫຼົາລູກຫນ້າຢູ່ຫນ້າເຮືອນນັ້ນເອງ ແຕ່ຍອມມັກສຽງແຄນຂອງທ້າວຫຼາຍ ດັ່ງນັ້ນ ທັງສອງນາງ ໃຜກໍຍັງຢາກເປັນເມຍນູຕົງຢູ່

ໃນເວລານັ້ນ ນາງເກົ້າເນາະກໍກັບມາແຕ່ນຸ່ນ ແລະກໍຍັງເອົາຈີ້ນປາ ອາຫານມາຕ້ອນນູຕົງຄືທຸກມື້ ເກົ້າເນາະເປັນຍິງທີ່ງາມ ແລະ ຫນ້າຮັກທີ່ສຸດສຳລັບນູຕົງ ເພາະວ່າ ນາງເປັນຜູ້ມີຈິດໃຈເອື້ອເຟື້ອອາລີ ຮູ້ເມດຕາກາລຸນາເຫັນອົກ - ເຫັນໃຈຄົນອື່ນ ສ່ວນນາງເກົ້າເນາະກໍອີ່ດູຊີວິດກຳພອຍຍາກຈົນຂອງນູຕົງຫຼາຍຄືກັນ ຈຶ່ງຄິດຢາກເປັນເມຍເປັນເພື່ອນອົບອຸ່ນຊ່ວຍເຫຼືອນູຕົງແລະທຸກສິ່ງທຸກຢ່າງທີ່ນາງຄິດໃນໃຈນັ້ນ ນູຕົງສາມາດເຂົ້າໃຈໄດ້ຫມົດ ແຕ່ເພື່ອບໍ່ໃຫ້ອີເຢີເຢີ ແລະອີເຢີເຢີນ້ອຍເສຍໃຈ ທ້າວຈຶ່ງໄດ້ເວົ້າກັບສາມນາງວ່າ :

- ຖາຜູ້ໃດຫຸງເຂົ້າແຊບ ຈະເອົາຜູ້ນັ້ນມາເປັນເມຍ

ສາວອີເຢີເຢີຟ້າວຢາດຫຸງກ່ອນຫມູ່ ໃນຍາມອີເຢີເຢີພວມດັງໄຟໃສ່ຫມໍ້ເຂົ້າຢູ່ນັ້ນ ນູຕົງກໍ່ເອົາແຄນອອກມາເປົ່າ ສຽງແຄນມ່ວນຫຼາຍຈົນເຮັດໃຫ້ອີເຢີເຢີ ເມົາຟັງເລີຍລືມອ່ອນໄຟຫມໍ້ເຂົ້າ ຈົນຫມໍ້ເຂົ້າໄຫມ້ຂີວ ບາດຮອດພຽນອີເຢີເຢີນ້ອຍຫຸງ ນາງຢ້ານຫມໍ້ເຂົ້າໄຫມ້ ຄືອີເຢີເຢີໄດ້ເຮັດມາກ່ອນ ດັ່ງນັ້ນ ນາງຈຶ່ງເຮັດໄຟຄ່ອຍຄ່ອຍ ໄວ້ແຕ່ທີ່ວທີ ແຕ່ຕໍ່ມາ ກໍເມົາເພີນຟັງສຽງແຄນ ຈຶ່ງລືມຊຸກໄຟໃສ່ຕື່ມ ເລີຍເຮັດໃຫ້ເຂົ້າບໍ່ສຸກຊ້ຳ ສຸດທ້າຍຮອດພຽນນາງເກົ້າເນາະຫຸງ ເຖິງວ່າສຽງແຄນຈະມ່ວນປານໃດກໍຕາມ ນາງກໍຍັງຕັ້ງໃຈແປງໄຟໃສ່ຫມໍ້ເຂົ້າ ຢ່າງບໍ່ຂາດໄລຍະ ຈົນເຂົ້າສຸກດີກແລ້ວ ນາງຈຶ່ງເອົາໃຈໃສ່ຕໍ່ສຽງແຄນ ດັ່ງນັ້ນ ເຂົ້າທີ່ນາງຫຸງຈຶ່ງສຸກ ແລະ ແຊບກວ່າຫມູ່ຫມົດ ເຫັນດັ່ງນັ້ນ ອີເຢີເຢີແລະອີເຢີເຢີນ້ອຍຟ້າວຫນີເມືອບ້ານ

ຂອງຕົນຢ່າງອັບອາຍຂາຍໜ້າ

ຕັ້ງແຕ່ນັ້ນມາ ທ້າວນູຕົງແລະນາງເກົ້າເນາະ ຢູ່ເປັນຄູ່ຜົວເມຍ ຮັກແພງ-ກັນທີ່ສຸດຕະຫຼອດມາ ແລະ ສຽງແຄນຂອງນູຕົງນັບມື້ມ່ວນຍິ່ງກວ່າເດີມອີກ

■■■

ຜູ້ເລົ່າ : ເພົ້າຢາ

ຜູ້ຂຽນ : ດາລີວັນ





# ນົກເຄົ້າ ແລະ ຟານ

ລະດູແລ້ງໄດ້ນຳອາກາດເຢັນ ແລະ ລົມໜາວມາສູ່ປ່າດົງຕາມກົດເກນຂອງທຳມະຊາດ ໃນລຳເນົາແຫ່ງໜຶ່ງ ຟານແມ່ໂຕໜຶ່ງນອນໄຂ້ຢູ່ພື້ນດິນ ເຊິ່ງເດຽລະດາດປູດ້ວຍ ໃບໄມ້ແຫ້ງ ຟານອິດເມື່ອຍ ອິນຫິວ ຈາງສົບ ຈາງປາກ ບໍ່ຢາກກິນອາຫານຫຍັງໝົດ ບັງເອີນມີນົກເຄົ້າໂຕໜຶ່ງບິນມາຈັບກິ່ງໄມ້ ໃກ້ບ່ອນທີ່ຟານນອນໄຂ້ຢູ່ ມັນຮ້ອງໃສ່ຟານວ່າ :

- ກຸ໋,ກຸ໋ ປ້າຟານເປັນໄຂ້ບໍ່ ? ຢາກກິນສົ້ມບໍ່ ? ພໍໄດ້ຍິນຄຳວ່າສົ້ມ ນ້ຳລາຍຟານແມແຕກຍ່າວທັນທີ.

- ໂອ້ ອ້າຍນົກເຄົ້າເອີຍ ! ເວົ້າເລື່ອງສົ້ມຂອຍລະກືນນ້ຳລາຍຄິດຢາກຈະກິນເອົາແທ້ໆ ຄືຊິມີແຮງຂຶ້ນ

ເວົ້າແລ້ວນົກເຄົ້າກໍ່ບິນຂຶ້ນເມືອງອຍຢູ່ເທິງຕົ້ນໝາກກອກ ບິນຈັບງ່ານັ້ນງ່ານີ້ຢູ່ບໍ່ເຊົາ ຟານຖ້າເກັບໝາກກອກຢູ່ ແຕ່ບໍ່ເຫັນໝາກກອກຕົກລົງມາເລີຍ ຟານຖ້າຢູ່ອີກຄາວໜຶ່ງ ແລ້ວຈຶ່ງໄດ້ຍິນສຽງຕອບມາຈາກນົກເຄົ້າ ຢ່າງທີ່ບໍ່ນຶກບໍ່ຝັນໄວ້ກ່ອນວ່າ :

- ເກັບກອກ ເກັບກອກ ກອກສຸກຫອກແຫງ ກອກສຸກຫອກແຫງ

ຟານໄດ້ຍິນແລ້ວຕົກໃຈອາບ ຄິດໃນໃຈວ່າ :

"ໂທ ! ຈັ່ງໃດນໍຈຶ່ງວ່າຫອກແທງ !

ນົກເຄົ້າບໍ່ຫວັງເປັນເພື່ອນກັບເຮົາຈັກດີໃດນໍ " ຟານຄິດແລະເຂົ້າໃຈດັ່ງນັ້ນແລ້ວ ກໍຟ້າວແລ່ນປົບຫນີຢ່າງບໍ່ຮູ້ທິບ ຮູ້ແດນ ແລ່ນໄປຂອງເອົາເຄືອຫມາກຮົ້ງ, ຫມາກຮົ້ງຫຼິ້ນກົ້ງໄປຕຳຕົ້ນຫມາກກວາ ແກ່ນງາຟົ້ງໄປຖືກຕາໄກ່ປ່າ ໄກ່ປ່າດິ້ນ ຕີນຄວາດໄປຖືກຂວາຍມົດແດງ ມົດແດງຟົ້ງໄປກັດຫອຍງູ ງູເອົາຫາງປັດ ມົດແດງອອກຈາກຫອງຂອງຕົນ ແລວກໍຖາມມົດແດງຢ່າງບໍ່ພໍໃຈວ່າ :

- ຮວາຍ! ເຈົ້າເປັນຫຍັງຈຶ່ງມາກັດຫອງຂອຍ ?

ມົດເລີຍຕອບງູວ່າ :

- ຈັກວ່າເລື່ອງອັນໃດແລ້ວ ! ຂອຍກໍເມົາ ແນວວ່າໄກ່ປ່າມາເຂ່ຽຂວາຍຂ້ອຍແຕກຈະຫມົດ!

ງູ ຈຶ່ງໄປຖາມໄກ່ປ່າວ່າ :

- ເອະ ອາຍໄກ່ປ່າ ເປັນຫຍັງເຈົ້າຈຶ່ງໄປເຂ່ຽຂວາຍມົດແດງ ?

ໄກ່ປ່າຕອບວ່າ :

- ບໍ່ຈັກແລວ ແກ່ນຫມາກກວາຟົ້ງມາເຂົ້າຕາຂອຍ ແສບຕາຫຼາຍ ຂອຍຈຶ່ງດິ້ນລົ້ມ ດິ້ນຕາຍໄປ

- ເອີ້, ໄດ້ແລ້ວ ຊັ້ນຂ້ອຍຊິໄປຖາມຫມາກກວາເບິ່ງວ່າ ເລື່ອງລາວເປັນຈັ່ງໃດແທ້ ເວົ້າແລ້ວ ງູກໍໄປຖາມຕົ້ນຫມາກກວາ

- ຕົ້ນງາເອີຍ ! ເປັນຫຍັງເຈົ້າຈຶ່ງສັ່ນແກ່ນງາຟົ້ງໃສ່ຕາໄກ່ປ່າ ?

- ໂອຍ, ອາຍງູເອີຍ ຂອຍກໍຖືກຕຳຊ້ຳນອນບອນໂຕໄປຫມົດ ເພາະຖືກຫມາກຮົ້ງກົ້ງມາຕຳໃສ່ຫມົດແຮງ.

ຮູ້ວ່າ ຍອນຫມາກຮົ້ງ, ງູກໍເລີຍໄປສືບຖາມເຄືອຫມາກຮົ້ງວ່າ :

- ເຄືອຫມາກຮົ້ງ ! ເປັນຫຍັງຫມາກຂອງເຈົ້າຈຶ່ງຕົກຟົ້ງກົ້ງໄປແຮງແທ້? ຈົນກະທັ້ງວ່າ ໄປຕຳໃສ່ຕົ້ນຫມາກກວາຊ້ຳບອນຫມົດ ?

- ຂອຍບໍ່ຮູ້ຕົ້ນປາຍສາຍເຫດຫຍັງຫມົດຢູ່ບໍ່ຢ່າ ຟານໂຕຫນຶ່ງກໍແລ່ນ ກະຟູບກະຟາບມາຂອງເຄືອຂອຍ ແລວຟາວຖືກຕີນອອກຈາກເຄືອຂອຍຫມົດແຮງ ຈົນຫມາກຂອງຂອຍຕົກລົງດັງຊວາດໆ

ໄດ້ຍິນເຄືອໝາກຮົ້ງແຈ້ງເຫດການດັ່ງນັ້ນ, ງູຟ້າວເລືອໄປຖາມຟານວ່າ:

- ປາຟານເອີຍ ! ມີເລື່ອງຮ້ອນຫຍັງເກີດຂຶ້ນບໍ່ ເຈົ້າຈຶ່ງແລ່ນຟ້າວແລ່ນຟົ່ງຈົນໄປຂ້ອງເອົາເຄືອໝາກຮົ້ງ ແລະ ເຮັດໃຫ້ເຄືອໝາກຮົ້ງຖືກຫົນຈົນ ໝາກຫຼົ່ນຄືແນວນັ້ນ ?

- ໂອ້ ! ອາວງູເອີ້ຍ ຂ້ອຍເອງຢ້ານຈົນຕົບສົ້ນຂວັນຫາຍ ເລື່ອງເປັນແນວນີ້ ຂ້ອຍພວມນອນເປັນໄຂ້ ນົກເຄົ້າວ່າ ຈິເອົາໝາກກອກລົງມາໃຫ້ຂ້ອຍ ກິນສົ້ມ ຂ້ອຍກໍຖ້າຊອນເກັບໝາກກອກຢູ່ກ້ອງຕົ້ນໄມ້ ຕາມຄຳບອກຂອງນົກເຄົ້າ ແຕ່ບາດລາວບິນຂຶ້ນໄປຈັບເທິງຕົ້ນກອກແລ້ວພັດບໍ່ເປັນດັ່ງຂ້ອຍຄິດ ວ່າລາວຈະເປັນຜູ້ຮັກ ຜູ້ແພງເບິ່ງກັນໃນຍາມເຈັບ ຍາມເປັນ ແຕ່ກົງກັນຂ້າມລາວພັດຮ້ອງມາໃສ່ຂ້ອຍຜູ້ຢູ່ລຸ່ມວ່າ :

- ເກັບກອກ ເກັບກອກ ກອກສຸກຫອກແຫງ ກອກສຸກຫອກແຫງ! ຂ້ອຍຕົກໃຈຢ້ານ ຟ້າວປີບແລ່ນໜີຢ່າງບໍ່ຮູ້ທິບ ຮູ້ແດນ

ເມື່ອໄດ້ຍິນດັ່ງນັ້ນແລ້ວ ງູແລະສັດອື່ນໆ ຈຶ່ງເຂົ້າໃຈວ່າ ນົກເຄົ້າເປັນສັດທີ່ຮ້າຍກາດ ບໍ່ມີສິນທຳ ບໍ່ຮັກເພື່ອນຝູງ ສັດໃນດົງໃນປ່າເກືອບທຸກຕົວ ຈຶ່ງບໍ່ເປັນມິດກັບນົກເຄົ້າ ເຮັດໃຫ້ນົກເຄົ້າຕ້ອງລີ້ຊ່ອນຢູ່ຜູ້ດຽວໃນຕອນກາງເວັນ ແລະຈອບອອກຫາກິນແຕ່ໃນຕອນກາງຄືນ ບໍ່ມີສັດອື່ນເປັນໝູ່ເປັນເພື່ອນນັບແຕ່ນັ້ນມາ

●●

ຜູ່ເລົ່າ - ປ້າເພັດ

ຜູ່ຂຽນ - ດາລີວັນ ສິດພະໄຊ






ຕັ້ງແຕ່ໃດໆມາ ລິງຫາກຕັ້ງເປັນສັດກະຫຼອກ ກະແລັກ ມີນິໄສມັກຢອກໃຍລໍ້ຫຼອກກັນສະເຫມີ , ເມື່ອເຫັນຕັກແຕນເປັນສັດຈ່ອຍນ້ອຍ ແລະ ມີແຕ່ຂາຍາວໂຄ່ງເຄ່ງ ລິງພາກັນຫົວຂວັນແລະຢາກສະແດງກຳລັງຂອງຕົນ ອວດໃສ່ຕັກແຕນທີ່ສຸດ

ຢູ່ມາມື້ໜຶ່ງ ລິງຈຶ່ງພາກັນໄປຊວນຕັກແຕນວ່າ :

- ເອ ! ຕັກແຕນ ສອງຝ່າຍລິງ ແລະ ຕັກແຕນພວກເຮົາມາລອງແຮງຕີກັນເບິ່ງເທາະເວີ້ຍ !

ຕັກແຕນຫົວຂຶ້ນ :

- ໂທ່ ! ລອງແຮງຕີກັບພວກເຈົ້າມັນຫວໍ່ະ !

ຕັກແຕນຄິດຢູ່ຄາວໜຶ່ງ ແລ້ວຈຶ່ງເວົ້າຕໍ່ອີກວ່າ :

- ເອົ້າ ຕົກລົງ...ລອງສູ້ກັນເບິ່ງວ່າ ໃຜຈະເປັນຈັ່ງໃດແທ້ກໍດີໄດ້ເນາະ ໃຫ້ລິງພວກເຈົ້າກັບຄືນເມືອກຽມໄມ້ຄອນໄວ້ຜູ້ລະອັນກ່ອນເດີ ແລ້ວຈຶ່ງມາສູ້ກັບພວກຂອຍ

ເມື່ອໄດ້ຍິນຄຳເວົ້າຂອງຕັກແຕນ ລິງກໍຄິດອອກວ່າ "ໂອ້ແມ່ນໄດ້ເນາະໃຊ

ໄມ້ຄ້ອນທຸບ ຕັກແຕນຕ້ອງຫົວນຸ່ມແປແປ້ດ ຟາດລົງບາດໃດຕາຍພາບສິບ ພາບຊາວ ພູ້ນລະ" ຄິດແລ້ວລີງກໍດີໃຈຟ້າວກັບເມືອຊອກຫາໄມ້ຄ້ອນທີ່ຫນັກແຫນ້ນ ແລະແກ່ນ ທີ່ສຸດພູ້ລະອັນ

ເມື່ອກຽມໄມ້ຄ້ອນຄົບນີ້ແລ້ວ, ຕອນເຊົ້າມື້ຕໍ່ມາ ລີງມາຊວນຕັກແຕນ ອີກ ວ່າ

- ຈັ່ງໃດກຽມແລ້ວເບົ່າະເວີ້ຍ ?

ຕັກແຕນຕອບວ່າ

- ໂອ້ຍ ຍັງເຊົ້າໂພດຫາກໍ່ຕື່ນນອນ ຕາເວັນບໍ່ທັນກ້າ ຂາກໍ່ບໍ່ທັນແຂງ ແຮງບໍ່ທັນດີເທື່ອ ຕອນທ່ຽງແດດກ້າຫນ້າຊື່ນຕາບານກ່ອນແມ້ ຈຶ່ງເຂົ້າສູ່ສະຫນາມ ຮົບ ເຈົ້າຊິຟ້າວຫຍັງເອົາແທ້ !

ຕັກແຕນຕອບລີງແນວນັ້ນ ກໍເພາະວ່າ ຍາມເຊົ້າ ຕາມທຳມະຊາດເຊື້ອ ຂອງຮ່າງກາຍຕັກແຕນແລ້ວ ຈະແມ່ນຕັກແຕນໂຕນ້ອຍ ໃຫຍ່ ຢູ່ໃສກໍ່ບໍ່ທັນເຕັ້ນທັນ ຄືຕອນທ່ຽງ ສ່ວນລີງບໍ່ເຂົ້າໃຈຫຍັງຫມົດ ກ່ຽວກັບຈຸດພິເສດສຳຄັນດັ່ງກ່າວ ຂອງ ຕັກແຕນ ລີງພຽງແຕ່ຄິດວ່າ ໂຕເປັນສັດໃຫຍ່ ເມື່ອສູ້ກັບຕັກແຕນຍາມໃດ ກໍຕ້ອງ ຊະນະ ຍາມນັ້ນໂລດ ຊວນຕັກແຕນຕີກັບຕົນເພື່ອຢາກສະແດງໃຫ້ພວກຕັກແຕນຮູ້ ວ່າ ລີງນີ້ແມ່ນຜູ້ທີ່ໃຫຍ່ໂຕ ມີກຳລັງປາບແພ້ຜູ້ອື່ນໆ ດັ່ງນັ້ນ ເມື່ອໄປຊວນຕັກແຕນ ຕີກັນຕອນເຊົ້າ ຕັກແຕນວ່າ ຕອນສວາຍກ່ອນ ລີງກໍຕົກລົງວ່າ ຕອນສວາຍ ກໍຕອນ ສວາຍ ສຳລັບເຂົາບໍ່ມີບັນຫາຫຍັງຂ້ອງໃຈທັງຫມົດ " ຍາມໃດກໍຕ້ອງເປັນຜູ້ຊະ ນະ "

ເມື່ອຮອດຕອນທ່ຽງມາ ການສູ້ຮົບລະຫວ່າງລີງແລະຕັກແຕນ ໄດ້ເລີ່ມຕົ້ນ ຕັກແຕນພາກັນບິນໄປຈັບຫົວລີງໂຕນີ້ ແລ້ວໂຕນັ້ນຢ່າງສວ່ານສິ້ນ ແລະ ລ່ອງໄວ ສ່ວນຝ່າຍລີງກໍຟ້າວແລ່ນໄລ່ທຸບຕັກແຕນໂຕນີ້ໂຕນັ້ນຢ່າງສິ້ນລະອິນ ແຕ່ພໍເມື່ອລີງ ເງືອດໄມ້ຄ້ອນຂຶ້ນບາດໃດ ຕັກແຕນຜັດຮີບດີດພັບບິນຫນີໄປຈັບຫົວລີງໂຕອື່ນອີກແລ້ວ ກໍຫົວໂຕຕໍ່ໆໄປ ເລີຍບໍ່ຖືກຕັກແຕນຈັກໂຕ ກົງກັນຂ້າມໄມ້ຄ້ອນຟາດລົງບາດໃດຖືກ ແຕ່ຫົວຫມູ່ລີງຂອງພວກເຂົານັ້ນເອງ ລີງໂຕນີ້ທຸບຫົວລີງໂຕນັ້ນ ໂຕນັ້ນທຸບໂຕອື່ນໆ. ພວກມັນຕີກັນຈົນຫົວແຕກ ລົ້ມຕາຍຢ່າງຫລວງຫລາຍ ສ່ວນສອງສາມໂຕທີ່ເຫລືອ ລອດ ຕາຍກໍຢ້ານສັ່ນຂວັນຫາຍແລ່ນປົບຫນີເຂົ້າປ່າ

ຍ້ອນເຫດນັ້ນ ປັດຈຸບັນ ຈຶ່ງບໍ່ເຫັນລີງລົງຫຼິ້ນທົ່ງນາຈັກເທື່ອ ນີ້ກໍເພາະ
ວ່າ ລີງຫຼາບຕາຍ ແລະ ຢ້ານຕັກແຕນຕົວແຕນນັ້ນເປັນຕົ້ນມາ

●●

ຜູ່ເລົ່າ -

ຜູ່ຂຽນ - ດາລີວັນ ສີດພະໄຊ



# ກາ ແລະ ນົກຍູງ

ແຕ່ກ່ອນເຫິງນານມາແລ້ວແຕ່ປາງສັດສາວາສິ່ງຕົ້ນໄມ້ໃບຫຍ້າຍັງໃຊ້ພາສາ ແລະປາກເວົ້າ ເຂົ້າໃຈກັນພຸ້ນແລວ ໃນປ່າດົງພົງໄພອັນກວ້າງໃຫຍ່ແຫ່ງໜຶ່ງທີ່ອຸດົມສົມບູນໄປດ້ວຍຝູງສັດສາວາສິ່ງຕ່າງໆ ຍັງມີສັດປີກສອງຊະນິດເປັນສ່ຽວກັນອາໄສຢູ່ຄື ກາ ແລະ ນົກຍູງ

ສັດທັງສອງຮູ້ສຶກຖືກນິໄສກັນມາແຕ່ຄາວຍັງນ້ອຍພຸ້ນ ອາດຈະເປັນຍ້ອນພວກເຂົາມີສີສັນອັນດຽວກັນ ຫຼືວ່າຍ້ອນພໍ່ແມ່ເຂົາຮັກແພງກັນມາແຕ່ກ່ອນໆກໍ່ບໍ່ມີ ໃຜຮູ້ໄດ້ປາງນັ້ນພວກເຂົາທັງສອງຮວມທັງພໍ່ແມ່ຍາດຕິວົງວານຂອງພວກເຂົາລ້ວນແຕ່ມີຂົນສີຂາວປອດທົ່ວທັງຕົນຕົວ. ແຕ່ນ້ອຍເທົ່າໃຫຍ່ພວກເຂົາເຄີຍອອກຫາກິນ ແລະ ທ່ຽວຫຼິ້ນນຳກັນບໍ່ເວັ້ນແຕ່ລະວັນ. ທຸກມື້ໃດທັງກາ ແລະ ນົກຍູງໄດ້ພົບປະກັບເພື່ອນຝູງໝູ່ນົກ ແລະ ສັດປີກໂຕອື່ນໆທີ່ມີຂົນຫຼາຍຫຼາກສີສັນສວຍສົດງົດງາມ. ບາງໂຕມີຂົນສີແດງ,ບາງໂຕມີຂົນສີແສດ,ສີຂີ້ເຖົ່າ,ສີຟ້າ... ລວດລາຍອັນສະຫຼັບ ສັບຊ້ອນປະກອບດ້ວຍສີຕ່າງໆເໝືອນເປັນເຄື່ອງເອ້ຢ້ອງໃຫ້ສັດເຫຼົ່ານັ້ນມີຄວາມ ສະຫງ່າງາມເປັນຢ່າງຍິ່ງ

ດົນຕາມດົນ ຄວາມຮູ້ສຶກເພິ່ງພໍໃຈທີ່ກາ ແລະ ນົກຍູງເຄີຍມີ ຕໍ່ຂົນສີຂາວງາມຂອງຕົນໃນເມື່ອກ່ອນກໍຈາງຫາຍໄປຈົນເກີດເບື່ອໜ່າຍ,ໃນທີ່ສຸດຈຶ່ງມີແນວຄິດ



ໃໝ່ໆຂຶ້ນ

ວັນໜຶ່ງທ້ອງຟ້າສົດໃສອາກາດປອດໂປ່ງ ກາໄດ້ເປີກສານຳນົກຍູງວ່າ:

- ນີ້ນະສ່ຽວ ຕັ້ງແຕ່ເກີດມາຈົນຮອດດຽວນີ້ຂົນຂອງພວກເຮົາກໍ່ມີແຕ່ສີຂາວ ແນວດຽວ ຖ້າວ່າມີຂົນສີອື່ນມາສັບປົນກັນນຳຄືຊິງາມໄດ້ເນາະ

ນົກຍູງຕອບວ່າ:

- ເຮົາກໍ່ວ່າຄືໂຕທັ້ນລະ ເບິ່ງນົກແຂກນົກແກ້ວຍັງມີສີຂຽວສີຟ້າ ນົກກາງ ແກມີສີຂີ້ເຖົ່າ ສີຟ້າ ສີຕັບໝູ ເບິ່ງແລ້ວຄືວ່າງາມແດ່ ແລ້ວພວກເຮົາຊິເຮັດແນວ-ໃດຈຶ່ງຈະມີສີງາມໆຄືພວກນັ້ນ ?

ກາເຫັນໝູ່ເປັນໃຈ ເລີຍເວົ້າຂຶ້ນຢ່າງເປັນງານເປັນການວ່າ :

- ບໍ່ຍາກ ບໍ່ຍາກ ! ເຮົາຄິດອອກແລ້ວ ມີຢູ່ວິທີໜຶ່ງຮັບຮອງວ່າໄດ້ຜົນແນ່ ນອນ

- ເຮັດຈັ່ງໃດ ? - ສ່ຽວນົກຍູງສົນໃຈທັ້ງຖາມກະຈັ້ນກະຈີ້

- ເຮົາວ່າໄປຫາສີມາແຕ້ມແຕ່ງຂົນ ແຕ້ມໃຫ້ງາມໆເຕັມມັກແລ້ວພວກເຮົາ ຈະເປັນຜູ້ງາມທີ່ສຸດໃນປ່າດົງວົງກົດແຫ່ງນີ້

- ແຕ່ວ່າ ... ແມ່ນໃຜຊິເປັນຜູ້ແຕ້ມໃຫ້ພວກເຮົາ ?

- ກະແມ່ນໂຕກັບເຮົານີ້ລະປ່ຽນຟຽນແຕ້ມໃຫ້ກັນ

ພວກເຂົາຕົກລົງກັນຢ່າງພໍ່ຍາກຊາ ແລ້ວກໍ່ພາກັນໄປຊອກຫາສີນ້ຳດ້ວຍຄວາມ ມ່ວນຊື່ນ ມື້ນັ້ນກ່ອນຕາເວັນຕົກດິນກາແລະນົກຍູງກໍ່ໄດ້ສີຄົບຖ້ວນ ເປັນທີ່ພໍໃຈ - ເຊົ້າມື້ຕໍ່ມາ ການແຕ້ມສີໃຫ້ກັນກໍ່ເລີ່ມລົງມືໂດຍແມ່ນສ່ຽວກາເປັນຜູ້ແຕ້ມໃຫ້ນົກຍູງ-ກ່ອນ

ກາເປັນນັກແຕ້ມຝີມືດີແລະມີຊື່ສຽງໃນໝູ່ພວກຢ່າງກວ້າງຂວາງ ທຳອິດມັນ ປະສົມສີຢ່າງຊຳນິຊຳນານ ຕໍ່ມາກໍ່ວາດແຕ້ມລວດລາຍດ້ວຍສີຕ່າງໆເປັນຈຸດເປັນ - ເມັດຕາມຕົນໂຕຂອງນົກຍູງເຊິ່ງນັ່ງຢູ່ຢ່າງບໍ່ເໜັງຕີງ ກາສຸມຈິດສຸມໃຈພະຍາຍາມ ລະບາຍສີໃຫ້ນົກຍູງຢ່າງປານີດ ແລະບໍ່ຕ່າງຫຍັງກັບນົກຍູງທີ່ໃຊ້ຄວາມອົດທົນນັ່ງ ຢູ່ ດົນໆບໍ່ຖືກຂາແລະພີປີກຈັກເທື່ອ

ພໍຕາເວັນບ່າຍ ການແຕ້ມຂອງກາກໍ່ສຳເລັດລົງຢ່າງຈົບງາມ ບັດນີ້ນົກຍູງຜູ້ ເຄີຍມີແຕ່ສີຂາວລ້ວນກໍ່ກັບກາຍເປັນນົກຍູງທີ່ມີຫລາຍຫລາກສີອັນປະດັບດ້ວຍເມັດ ສີ

ຂາວສີແດງເປັນຈຸດເປັນຈ້ຳ ເບິ່ງແລ້ວງົດງາມຂຶ້ນກວ່າເກົ່າຫຼາຍອັນໄດ້ສ້າງຄວາມພໍໃຈໃຫ້ກັບນິກຍຸງແລະກາເປັນຢ່າງຍິ່ງ

ຈາກນັ້ນແມ່ນຝຽນຂອງນິກຍຸງແຕ້ມໃຫ້ກາ ນິກຍຸງກໍ່ແມ່ນຈິດຕະກອນຊັ້ນຍອດຄືກັນ ແລະມີຄວາມສາມາດທັງກັບກາ ເບື້ອງຕົ້ນການວາດແຕ້ມຂອງນິກຍຸງດຳເນີນໄປດ້ວຍດີ ນິກຍຸງເປັນສັດສະຫງ່ຽມຄ່ຽມຄົມແລະໃຊ້ຄວາມພະຍາຍາມຫລາຍ ຈຶ່ງເຮັດໃຫ້ການແຕ້ມເສຍເວລາຫລາຍກວ່າກາ ການທີ່ໄດ້ນັ່ງຢູ່ບ່ອນເກົ່າດົນໆເຮັດໃຫ້ກາຜູ້ຂາດຄວາມອົດທົນເກີດອິດເນື່ອຍ ພ້ອມນັ້ນຄວາມຫິວກໍ່ເລີ່ມລົບກວນ

ໃນຂະນະນັ້ນ ກາຜູ້ມີຫູໄວມັກກິນຂອງດິບຂອງແດງ ໄດ້ຍິນສຽງຫມູຮ້ອງອີກ ອີກ ໆ ໆ ໆ... ດັງກອງມາແຕ່ທາງບ້ານຄົນຢູ່ໄກງພູມ ເຮັດໃຫ້ມັນທັງນ້ຳລາຍເຫີຍທັງໃຈຮອນ ຈຶ່ງຂອຮ້ອງເຂັນນິກຍຸງແຕ້ມອົນໃຫ້ຕົນໄວຂຶ້ນ

- ສ່ຽວ ! ເລັ່ງມືແດ່ແມ່ ເຮົາແຮງຫິວເຕັມທີແລ້ວນີ້ນ່າ ! ໂຕໄດ້ຍິນບໍ່ສຽງຫມູຮ້ອງ ໄທບ້ານຂ້າຫມູໄດ້ ໂອກາດຊິໄດ້ກິນຂອງແຊບມາຮອດແລ້ວ ຊ້າບໍ່ໄດ້ຮີບເລັ່ງມືສ່ຽວ !

ນິກຍຸງຕອບວ່າ :

- ອົດທົນເອົາຈັກຫນ່ອຍກະຊິແລ້ວດອກ

ນິກຍຸງແຕ້ມຕໍ່ໄປດ້ວຍຄວາມຄ່ຽມຄົມ ແລະບໍ່ມີທ່າທີວ່າຊິແລ້ວທັນໃຈກາເລີຍ ໃນຂະນະນັ້ນ ສຽງຫມູຮ້ອງຍິ່ງຖີ່ແລະແຮງຂຶ້ນແຮງຂຶ້ນ ເຮັດໃຫ້ກາກະວົນກະວາຍ ແລະໃຈຮ້າຍຂຶ້ນທັນທີ ເມື່ອຄວາມຫິວໂຫຍແລະຄວາມມັກກິນຂອງກາບີບບັງຄັບຫຼາຍ ມັນກໍ່ອົດບໍ່ລົ້ນທົນຕໍ່ໄປບໍ່ໄດ້ ມັນຟ້າວໂດດລົງໃນຫມໍ້ນ້ຳສີທັງມຸດຫົວລົງສອງສາມບາດ ເພື່ອຈະໄດ້ຟ້າວໄປກິນຕັບໄຕໄສ້ພຸງຂອງຫມູທີ່ຊາວບ້ານຂ້າ ໂດຍບໍ່ຟັງສຽງຮ້ອງຫ້າມຂອງນິກຍຸງ

ເມື່ອຂຶ້ນຈາກຫມໍ້ນ້ຳສີ ປາກົດວ່າລວດລາຍອັນງົດງາມຕ່າງໆ ທີ່ນິກຍຸງແຕ້ມໃຫ້ຫວ່າງກໍ່ຖືກສີດຳລົບຫມົດ ຕົນໂຕຂອງກາມີແຕ່ສີດຳໄປທົ່ວເລີຍ

ນັບແຕ່ນັ້ນມາ ອັນສີຂາວບໍລິສຸດຂອງກາຈຶ່ງມີອັນເປັນສີດຳຈົນຮອດທຸກມື້ນີ້. ສ່ວນນິກຍຸງກໍ່ມີຂົນອັນສວຍສົດງົດງາມຕັ້ງແຕ່ບັດນັ້ນມາ

■■■

ຜູ້ຂຽນ : ສຸລິຍັນ

ຜູ້ເລົ່າ : ແລ່ຕູ້ໄຊ

# ກຳພ້າ ແລະ... ເຫັ້ນ

ເລົ່າໂດຍ ປ້າເພັດ

ຜູ້ຂຽນ - ດາລີວັນ ສິດພະໄຊ

ມີນິທານຂອງເຜົ່າໄທຂາວເລົ່າສືບມາ ເລື່ອງຫນຶ່ງວ່າ: ໃນບ້ານແຫ່ງຫນຶ່ງ ຍັງມີກຳພ້າຂີ້ຄ້ານ ຄົນຫນຶ່ງ ອາໄສຢູ່ແຕ່ລະມື້ບໍ່ເຮັດບໍ່ຫາຫຍັງ ມີແຕ່ຫຼັວໄປນອນອ້າປາກ ຢູ່ໃຕ້ຕົ້ນຫມາກເດື່ອ, ຄອງຖ້າຫມາກເດື່ອສຸກຕົກລົງໃສ່ປາກຍາມໃດ ຈຶ່ງກິນຍາມນັ້ນ.

ເທື່ອຫນຶ່ງ ຂະນະທີ່ຫມາກເດື່ອສຸກຕົກລົງໃສ່ປາກຂອງທ້າວກຳພ້ານັ້ນ ບັງເອີນ ເຫວັນໂຕຫນຶ່ງມາພໍ້ ມັນຮີບຟ້າວໂດດຊຸບຍາດເອົາຫມາກເດື່ອ ຈາກປາກກຳພ້າໄປ, ແຕ່ທັນໃດນັ້ນ ກຳພ້າຟ້າວລຸກປົບປັບໂດດຊຸບຂາເຫວັນໄວແຫນນໆ ເຫວັນຟິດຫມົດແຮງກໍບໍ່ອອກຈຶ່ງກ່າວຂໍວ່າ :

- ຢ່າຈັບຢ່າຂ້າຂ້ອຍທອນກຳພ້າເອີຍ, ຖ້າເຈົ້າຈົ່ງຊີວິດຂ້ອຍໄວ້, ຂ້ອຍຈະເປັນເພື່ອນ ແລະ ບໍ່ລືມບຸນຄຸນເຈົ້າຈັກເທື່ອ. ໄດ້ຍິນແນວນັ້ນ ກຳພ້າກໍຄ່ອຍໆປ່ອຍມືທີ່ກຳຂາ ເຫວັນໄວແຫນນໆນັ້ນອອກ ພ້ອມທັງຄິດດີໃຈວ່າ : ດີແລ້ວບາດນີ້ເຮົາຈະໄດ້ມີເພື່ອນຮ່ວມຢູ່ຮ່ວມໄປ.

ນັບແຕ່ນັ້ນມາ ກຳພ້າເຮັດຫຍັງ ໄປໃສ ຢູ່ໃສ ກໍມີເຫວັນໄປນຳຢູ່ນຳ.

ຢູ່ມາມື້ຫນຶ່ງກຳພ້າຄິດອອກວ່າຈະເດີນທາງໄກ ເພື່ອຊອກຫາຂອງຢູ່ຂອງກິນ



ຄິດແລ້ວ ທ້າວກໍ່ຈັກຊວນເຫງັນ ເຫງັນເຫັນດີໄປນຳ ພໍກະກຽມຫາງຫາແລ້ວກ່ຳພ້າ ແລະ ເຫງັນກໍ່ອອກເດີນທາງ; ເຂົາທັງສອງຍ່າງໄປ ຍ່າງໄປ..ໄປເລື້ອຍໆ,ໄປ ໄກແສນໄກຈຶ່ງໄປຮອດບ່ອນໜຶ່ງ ມີແມ່ນ້ຳໃຫຍ່ກັ້ນດານ ກ່ຳພ້າຊູນເຈ່ຍເອົາເຫງັນ ເພາະຢ້ານເຫງັນປຽກແລ້ວຈະເຈັບປ່ວຍ ເປັນໄຂ້ ຕົນເອງກໍຈະບໍ່ມີເພື່ອນ ເມື່ອເຫັນກ່ຳພ້າຮັກຫໍ່ຕົນ ເຫງັນເລີຍສະທ້ານໃຈ ຈຶ່ງຂັບລຳອອກມາດ້ວຍສຽງ ອອຍອິ່ນ ໜ້າສະອອນໃຈ ສ່ວນທ້າວກ່ຳພ້າຮູ້ສຶກດີໃຈຫຼາຍ ເພາະຄິດວ່າ ຕົນເອງມີເຫງັນວິເສດ ຮູ້ຮອງລຳທຳເພງເໝືອນກັບມະນຸດທີ່ມີພອນສະຫວັນ ເຂົາທັງສອງ ເດີນທາງຕໍ່ໄປອີກ ຈົນຮອດໝູ່ບ້ານແຫ່ງໜຶ່ງ ຊຶ່ງເວລານັ້ນ ຊາວບ້ານພວມຟາດເຂົ້າຢູ່ກາງທົ່ງນາ ກ່ຳພ້າເລີຍຮີບພາເຫງັນຍ່າງເຂົ້າໄປຫາພວກເຂົາເຈົ້າ ເມື່ອເຫັນດັ່ງນັ້ນ ພວກຄົນທັງຫຼາຍພອມກັນຈອງມາເບິ່ງ ທັງຮອງໃສ່ໂລດວ່າ :

- ເຮີຍ! ຮີບເອົາເຫງັນໜີແມ ຢູ່ນີ້ແມ່ນບ່ອນເຂົ້າບ່ອນນ້ຳໃດ !

ກ່ຳພ້າເລີຍຕອບທັນທີວ່າ :

- ຢ່າໄລ່ພວກຂ້ອຍຫ້ອນ; ເຫງັນຂອງຂ້ອຍລຳເປັນໄດ !
- ໂອ້ຍ, ຢູ່ໃສເດ ຊິເຄີຍມີເຫງັນຮູ້ລຳ ເຊົາງຢ່າມາຕົວະ !
- ຖ້າວ່າເຫງັນຂອງຂ້ອຍລຳເປັນແທ້ເດ ພວກເຈົ້າຊິເອົາຫຍັງໃຫ້ຂ້ອຍ?
- ຈະໃສ່ນອບເຂົ້າ ທັງໝົດນີ້ໃຫ້ເຈົ້າ

ເມື່ອໄດ້ຍິນວ່າ ຊາວບ້ານຈະເອົາເຂົ້າໃຫ້ຕົນ ໜ້າຕາກ່ຳພ້າຊື່ນບານຂຶ້ນທັນທີ ແລ້ວກໍ່ຟ້າວເວົ້າວ່າ :

- ເອີ້, ໃຫ້ພວກເຈົ້າຖ້າຟັງເອົາເດີ້ ,ເວົ້າສຸດຄວາມ ກ່ຳພ້າກໍ່ບອກ ໃຫ້ເຫງັນຂອງຕົນລຳໂລດ ເຫງັນເຫັນໃຈເພື່ອນກ່ຳພ້າຂອງຕົນ ຈຶ່ງໄດ້ເອີ້ຍລຳຂຶ້ນຢ່າງຫຼຽນໄຫຼ ແລະໜ້າອອນຊອນ ພໍໄດ້ຍິນສຽງລຳໃບໜ້າຊາວບ້ານຕ່າງກໍ ຊື່ນບານຂຶ້ນ ເໝືອນກັບມີສິ່ງໃດໜຶ່ງວິເສດ ທີ່ໄດ້ເຮັດໃຫ້ເຂົາເຈົ້າລືມ ຄວາມອິດເມື່ອຍທັງໝົດ ດົນດອນຕົ້ນໄມ້ໃບຫຍ້າໃນບໍລິເວນນັ້ນ ກໍ່ປະກົດວ່າ ມີຊີວິດ ຊີວາສົດຊື່ນຍິ່ງກວ່າເດີມ ເມື່ອສຽງເຫງັນຂອງກ່ຳພ້າຮອງລຳແລ້ວ ຊາວບ້ານໄດ້ມອບເຂົ້າຈຳນວນຫຼວງຫຼາຍໃຫ້ກ່ຳພ້າຕາມຄຳສັນຍາ

ແຕ່ນັ້ນມາ ກ່ຳພ້າມີເຂົ້າຫຼາຍ ມີຢູ່ມີກິນ ບໍ່ທຸກບໍ່ຈົນອີກ

ຢູ່ມາມື້ໜຶ່ງ ສ່ຽວເກົ່າຂອງກ່ຳພ້າມາເຫັນທ້າວຮັ່ງມີ ຈຶ່ງຄິດສົນໃຈ ແລະ

ອອກປາກຖາມກ່ຳພ້າວ່າ :

- ເຮັດແນວໃດໂຕຈຶ່ງມີເຂົ້າປາອາຫານອຸດົມສົມບູນແທ້ ?

- ໂອຍ ເຮົາເອົາເຫງັນໄປນຳ ເຫງັນເຮົາລຳສູ່ຊາວບ້ານຟັງ ຊາວບ້ານກໍ່ເລີຍມອບເຂົ້າທັງໝົດຂອງເຂົາເຈົ້າໃຫ້ເຮົາ

- ໂທ ! ຊັ້ນໃຫ້ເຮົາຢືມເຫງັນໂຕໄປແດ່ໄດ້ບໍ່ ?

- ເອີ້, ເອົາແມ້ ແຕ່ຕ້ອງຮັກສາມັນໃຫ້ດີ ແລ້ວເອົາມັນມາສົ່ງໃຫ້ເຮົາເດີ້.

- ເອີ້ ໆ ບໍ່ຍາກດອກ

ເວົ້າແລ້ວສ່ຽວກໍ່ຈູງເອົາເຫງັນໄປ ພາເດີນທາງຜ່ານປ່າໃຫຍ່ດົງໜາ , ຜ່ານຫ້ວຍຮ່ອງ ແມ່ນ້ຳລຳເຊ ບ່ອນຫຍຸງຍາກກັນດານ ແຕ່ເຂົາຊ້ຳພັດບໍ່ອູມບໍ່ຈ່ອຍ ບໍ່ແພງເອົາເຫງັນ ປ່ອຍໃຫ້ເຫງັນຕົກນ້ຳປຽກສັ່ນໜາວລຳບາກຕະຫຼອດທາງ. ໃນທີ່ສຸດກໍ່ໄປຮອດໝູ່ບ້ານແຫ່ງໜຶ່ງ ຊາວບ້ານນັ້ນກຳລັງຟາດເຂົ້າຢູ່ຄືກັນ ສ່ຽວຂອງກ່ຳພ້າພາເຫງັນຍ່າງເຂົ້າໄປຫາພວກເຂົາເຈົ້າ ຊາວບ້ານໄລ່ໜີ, ແຕ່ສ່ຽວຂອງກ່ຳພ້າ ກໍ່ບອກບໍ່ໃຫ້ເຂົາເຈົ້າໄລ່ ເພາະເຫງັນຊິລຳໃຫ້ຟັງ ເມື່ອໄດ້ຍິນ ຄຳວ່າ "ເຫງັນຮູ້ຈັກລຳ" ໃພງກໍ່ຕື່ນຕົກສະເງີ້ ແລ້ວເວົ້າກັບຜູ້ທີ່ເອົາເຫງັນມາວ່າ:

- ແທ້ວາ ! ບອກມັນລອງລຳເບິ່ງດູ

ຊາຍຜູ້ເປັນສ່ຽວເກົ່າຂອງກ່ຳພ້າກໍ່ຕອບຂຶ້ນວ່າ:

- ຖ້າມັນລຳໄດ້ເດ້ ພວກເຈົ້າຈະເອົາເຂົ້າທັງໝົດນີ້ໃຫ້ຂ້ອຍບໍ່ ?

- ເອີ້ ຊິເອົາໃຫ້ໝົດ ຈົນບໍ່ເຫຼືອໄວ້ຈັກໜ່ວຍພຸ້ນລະ ຖ້າເຫງັນເຈົ້າຫາກລຳເປັນແທ້ນາ...

ອາຍສ່ຽວຂອງກ່ຳພ້າໄດ້ຍິນດັ່ງນັ້ນ ກໍ່ຟ້າວງວາກໜ້າມາໃສ່ເຫງັນ ແລະ ຟ້າວບອກໃຫ້ເຫງັນວ່າ : ລຳແມ້, ລຳແມ້ ! ແຕ່ເຫງັນກໍ່ເຮັດທ່າທາງເສີຍໆ ຄືຫູບໍ່ໄດ້ຍິນ ແລ້ວກໍ່ບໍ່ປາກບໍ່ຕີ່ງຫຍັງຈັກດີ້ເລີຍ ຊາວບ້ານເຫັນແລ້ວພາກັນຫົວຂວັນ. ຊາຍສ່ຽວກ່ຳພ້າໜ້າແດງວູ່ງ ໃຈຮ້າຍຫຼາຍໂດດໄປລາກເອົາໄມ້ຄ້ອນມາຕີ ເຫງັນຈົນຕາຍ ແລ້ວແກ່ເນື້ອຄົວກິນຢູ່ເຮືອນຂອງຕົນ

ສ່ວນກ່ຳພ້າຄອງຖ້າຫຼາຍມື້ກໍ່ບໍ່ເຫັນສ່ຽວເອົາເຫງັນມາສົ່ງ ຈຶ່ງໄປຖາມສ່ຽວວ່າ :

- ສ່ຽວ ເປັນຫຍັງໂຕຈຶ່ງບໍ່ເອົາເຫງັນໄປສົ່ງເຮົາປານນີ້ ?

- ໂອຍມັນເຮັດຂາຍຫນ້າຂາຍຕາເຮົາຫຼາຍ ບອກລຳກໍ່ບໍ່ລຳ ເຮົາເລີຍຂ້າມັນກິນເສຍແລ້ວ ຍັງແຕ່ກະດູກກອງຢູ່ແຈຮົ້ວຫັ້ນເດ.

ເມື່ອຮູ້ວ່າເຫງັນຕາຍ ກ່ຳພ້າຮູ້ສຶກເສຍໃຈ ຊຸກອັ່ງ ຫວ່ວນເຫງົາ ຫາອັນປຽບບໍ່ໄດ້ ທາວໄປເກັບເອົາກະດູກເຫງັນທີ່ຍັງເສດເຫຼືອຢູ່ນັ້ນມາເຮັດຫວີ ແຕ່ຫນ້າອັດສະຈັນທີ່ສຸດ ເມື່ອທາວກ່ຳພ້າເອົາຫວີທີ່ເຮັດດ້ວຍກະດູກເຫງັນນັ້ນ ມາຫວີຜົມຍາມໃດ ກໍ່ລ່ວນແຕ່ມີກ້ອນຄຳ ກ້ອນເງິນ ຕົກອອກມາຈາກຫົວ ກົ້ງຫຼົ່ນລົງ ພື້ນເຮືອນເປັນກອງກອງ...

ສ່ຽວໂລພາສອດຮູ້ສອດເຫັນວ່າ ກ່ຳພ້າຮັ່ງມີ ຈຶ່ງມາສໍ້ຖາມອີກວ່າ:

- ກ່ຳພ້າ ເປັນຫຍັງດຽວນີ້ໂຕຈຶ່ງມີເງິນ ຄຳ ຫຼາຍແທ້ ?

ກ່ຳພ້າກໍ່ບອກຄວາມຈິງໃຫ້ຫມູ່ຮູ້ອີກວ່າ: ຍ້ອນເຮົາມີຫວີທີ່ເຮັດດ້ວຍ ດູກເຫງັນໂຕນັ້ນແຫຼະ ເອົາມາຫວີຜົມຍາມໃດ ແມ່ນໄດ້ເງິນໄດ້ຄຳຍາມນັ້ນ . ຜູ້ເປັນສ່ຽວໄດ້ຍິນດັ່ງນັ້ນກໍ່ຂໍຢືມຫວີນັ້ນ ເພື່ອຫວັງຈະເອົາໄປຫວີໃຫ້ໄດ້ເງິນຄຳເຕັມເຮືອນເຕັມຊານ

ສ່ວນທ້າວກ່ຳພ້າຂືນໃຈຫມູ່ບໍ່ໄດ້ ກໍ່ເອົາຫວີໃຫ້ຫມູ່ຢືມ, ພໍໄດ້ຫວີສ່ຽວຂອງ-ກ່ຳພ້າດີໃຈຫຼາຍຟ້າວແລ່ນເມືອເຮືອນ ແຕ່ບາດລາວຫວີຜົມມັນພັດກົງກັນຂ້າມ; ຫວີບາດໃດ ຜົມຂອງລາວຫຼົ່ນອອກບາດນັ້ນ ຫຼົ່ນອອກຫຼາຍເປັນປຸ້ນເປັນປຸ້ນ ລາວຫວີຢູ່ບໍ່ເຊົາ ຈົນບໍ່ມີຜົມຊິຫວີອີກຈັກເສັ້ນ ແຕ່ກໍ່ຍັງບໍ່ເຫັນມີເງິນມີຄຳຈັກເມັດເລີຍ ສ່ຽວກ່ຳພ້າໃຈຮ້າຍວູ່ວີ້ຂຶ້ນ ພ້ອມທັງປ່ອຍທັງດ່າ ທັງເອົາຕີນຢຽບຫວີຫັກແລ້ວ ໂຍນເຂົ້າເຕົາໄຟ

ຫຼາຍມື້ຜ່ານໄປບໍ່ເຫັນສ່ຽວເອົາຫວີມາສົ່ງ ກ່ຳພ້າຈຶ່ງຈຳຕ້ອງໄດ້ໄປນຳເອົາຢູ່ເຮືອນສ່ຽວ ພໍຫຼຽວເຫັນກ່ຳພ້າຍ່າງຂຶ້ນເຮືອນຕົນ ສ່ຽວກໍ່ຟ້າວເວົ້າເປັນ ສຽງຮ້າຍໆຂຶ້ນວ່າ

- ຮີບມາເບິ່ງດູ! ນີ້ບໍ່ຫວີວິເສດໂຕນ່າ ? ຫວີຈົນຫົວຫຼ້ອນຫມົດ ແຕ່ເງິນຄຳຍັງບໍ່ເຫັນຕົກມາຈັກເມັດເລີຍ

ເມື່ອແນມເຫັນສ່ຽວບໍ່ມີຜົມຈັກເສັ້ນ ກ່ຳພ້າຢືນຕົກສະເງີ້ ຊິງຢູ່ຄາວຫນຶ່ງ ແລະ ຄິດວ່າ: ເອ ຍ້ອນຫຍັງຈຶ່ງເປັນແນວນີ້ ? ແລ້ວທາວຈຶ່ງຖາມສ່ຽວວ່າ:

- ຂຶ້ນຫວີຂອງຂ້ອຍເດ ? ຂໍເຈົ້າຈົ່ງສົ່ງໃຫ້ຂ້ອຍຊາ

- ໂຍນຖິ້ມເຂົ້າເຕົາໄຟຕັ້ງແຕ່ວານນີ້ພຸ້ນແລ້ວເດ

ກ່ຳພ້າໄດ້ຍິນແນວນັ້ນແລ້ວ, ນຶກໃນໃຈວ່າ ຫວີຄົງຈະຖືກໄຫມ້ຫມົດເສຍແລ້ວ ແຕ່ທາວພັດຍັງຄິດເສຍດາຍຫວີຢູ່ບໍ່ແລ້ວບໍ່ລືມ ຈຶ່ງໄປຊອກເອົາໄມ້ ມາເຂ່ຍຂີ້ເຖົ່າຊອກຫາຫວີ ບ່ອນທີ່ຫວີຖືກໄຫມ້ ເພາະລາວຍັງມີຄວາມຫວັງນ້ອຍໆ ຢູ່ວ່າ: ຫວີອາດຈະບໍ່ຖືກໄຟໄຫມ້ຫມົດ ກ່ຳພ້າເຂ່ຍໄປມາຫຼາຍຄັ້ງ ກໍ່ເລີຍ ພົບເຫັນແຂ້ວຫວີເຫຼັ້ມຫນຶ່ງທີ່ຖືກໄຟໄຫມ້ບໍ່ຫມົດ ທາວຟ້າວເກັບເອົາເມືອເຮືອນຂອງຕົນ

ກ່ຳພ້າໃຊ້ແຂ້ວຫວີເຫຼັ້ມນັ້ນ ເຮັດໄມ້ຈີ້ມແຂ້ວ ເມື່ອລາວເອົາມາຈີ້ມ ແຂ້ວບາດໃດ ກ້ອນຄຳຕິດອອກມາເປັນກ້ອນໆ ຈີ້ມບາດໃດແມ່ນໄດ້ຄຳບາດນັ້ນ

ສ່ຽວຫົວຫຼ້ອນລັກຈອບເບິ່ງ ເຫັນເຫດການດັ່ງນັ້ນ ຈຶ່ງຕີຍ່າງເຂົ້າໄປ ຖາມກ່ຳພ້າວ່າ :

- ໂຫ້ສ່ຽວ ໂຕໄດ້ເງິນຄຳມາຈາກໃສ ເບິ່ງຄືວ່າມີຫຼາຍຂຶ້ນຕື່ມອີກ? ໂຕບອກວິທີໃຫ້ເຮົາໄດ້ເງິນຄຳນຳແດ່ແນ້ເວີຍ !

- ໂອຍ ເຮົາມີແຂ້ວຫວີດູກເຫງັນເຫຼືອຈາກຫວີທີ່ໂຕຖິ້ມເຂົ້າໄຟຫັ້ນເດ້ , ເຮົາເອົາມັນມາເຮັດໄມ້ຈີ້ມແຂ້ວ ຈີ້ມບາດໃດແມ່ນໄດ້ຄຳບາດນັ້ນໄດສ່ຽວ

ສ່ຽວຫົວຫຼ້ອນພໍໄດ້ຍິນກໍ່ຫູຕັ້ງຕາກໍ່ຂຶ້ນ ແລ້ວຟ້າວເວົ້າໂລດວ່າ :

- ໂຫ ! ຄືມາຄັກແທ້ ໃສ່ໄມ້ຈີ້ມແຂ້ວນັ້ນຢູ່ໃສ ເອົາມາໃຫ້ເຮົາຢືມ ໄປຈີ້ມແດ່ຕີ້ !

ກ່ຳພ້າໄຂເອົາໄມ້ຈີ້ມແຂ້ວ ຊຶ່ງເອົາຜ້າຫໍ່ໄວ້ຈົບດີ ແລ້ວເອົາມ້ຽນໄວ້ໃນຖົງສົ້ງຂອງຕົນນັ້ນອອກມາໃຫ້ສ່ຽວຢືມ ພ້ອມທັງເຕືອນສ່ຽວວ່າ: ຈົ່ງແພງຮັກສາໄວ້ໃຫ້ດີໆເດີ້!

ທາວສ່ຽວຟ້າວເອົາໄມ້ຈີ້ມແຂ້ວດູກເຫງັນໄປຈີ້ມແຂ້ວຂອງຕົນ ຫວັງຈະໄດ້-ເງິນຄຳ, ແຕ່ກົງກັນຂ້າມບໍ່ພຽງແຕ່ບໍ່ມີເງິນຄຳຫຼົ່ນອອກມາເທົ່ານັ້ນ ແຂ້ວຂອງລາວພັດຫຼົ່ນອອກຫມົດຈົນກ້ຽງ ບໍ່ຍັງເຫຼືອຈັກເຫຼັ້ມ

ຕັ້ງແຕ່ນັ້ນມາ ສ່ຽວຜູ້ໂລພາຈຶ່ງກາຍເປັນຄົນຫົວຫຼ້ອນ ແຂ້ວບໍ່ມີຈັກເຫຼັ້ມ , ໄປໃສຜູ້ເຖົ້າຜູ້ແກ່ຜູ້ເລັກດ້ກນ້ອຍ ຊາວບ້ານ ຊາວເມືອງກໍ່ພາກັນຫົວຂວັນ

# ທ້າວ ກໍ່ ພອຍ "ຂໍ"

ມື້ນັ້ນຍາມໜາວ ຢູ່ທີ່ບ້ານແຫ່ງໜຶ່ງແຄມນ້ຳມາ ມີຍ່າຊະລາເຜົ່າໄທຂາວຄົນໜຶ່ງ ນັ່ງເລົ່ານິທານໃຫ້ຫຼານໆ ທີ່ນັ່ງຜິງໄຟຟັງວ່າ

ແຕ່ກ່ອນນັ້ນ ຍັງມີຄອບຄົວທຸກຈົນຄອບຄົວໜຶ່ງ ທຸກຢູ່ແລ້ວ ພະຍາດເຈັບໄຂ້ຊ້ຳພັດມາບີບບີ້ບໍ່ເຊົາ ຍ້ອນເຈັບໄຂ້ໄດ້ປ່ວຍ ແມ່ແລະເອື້ອຍອ້າຍ ສີ່ຫ້າຄົນກໍໄດ້ລົ້ມຫາຍຕາຍຈາກ ເຫຼືອໄວ້ແຕ່ພໍ່ກັບລູກຊາຍຫຼ້າ ຄືທ້າວຂໍຄົນດຽວ

ຜູ້ເປັນພໍ່ອາຍຸກໍນັບມື້ນັບຫຼາຍຂຶ້ນ ຢູ່ມາໄດ້ໄລຍະໜຶ່ງ ກໍຕາຍຈາກລູກໄປ. ແຕ່ກ່ອນຈະໝົດລົມຫາຍໃຈ ພໍ່ໄດ້ມອບທະນູອັນໜຶ່ງໃຫ້ລູກ ພ້ອມທັງສັ່ງວ່າ: ລູກຈົ່ງຮັກສາທະນູໄວ້ໃຊ້ໃນຍາມຈຳເປັນ ເພື່ອປ້ອງກັນຕົນ ແລະ ພີ່ນ້ອງບ້ານເມືອງ ແລະ ເມື່ອພໍ່ຕາຍ ລູກຢ່າບອກໃຫ້ບ້ານເດີ ຊິເຮັດຍາກໃຫ້ພວກເພິ່ນໄດ້ ລູກຈົ່ງອົດທົນເອົາພໍ່ໄປຝັງຢູ່ປ່າຫົວນາຫັ້ນເດີ້ລູກ

ທ້າວຂໍປະຕິບັດຕາມຄວາມທີ່ພໍ່ສັ່ງໄວ້ໝົດທຸກຢ່າງ

ເມື່ອພໍ່ຕາຍໄປແລ້ວ ຂໍຈຳຕ້ອງໄດ້ດຳລົງຊີວິດປ່ຽວພອຍ ປາດສະຈາກຄວາມອົບອຸ່ນຂອງພໍ່ແມ່ອ້າຍເອື້ອຍທັງໝົດ ແຕ່ທ້າວພັດມີຈິດໃຈແຂງກ້າ ດຸໝັ່ນ



ຂະຫຍັນພຽນ ແລະ ຍານໃດ ທ້າວກໍ່ຮູ້ບຸນຄຸນພໍ່ແມ່ອ້າຍເອື້ອຍ ຊາວບ້ານ ຊາວເມືອງ ທີ່ໄດ້ຮັກຮໍ່ຊ່ວຍເຫຼືອທ້າວຕະຫຼອດເວລາທີ່ຜ່ານມາ

ທຸກວັນນີ້ ຫຼັງຈາກແລ້ວວຽກໄຮ່ງານສວນ ທ້າວຂໍໄດ້ແບ່ງເວລາໄປນົບໄຫວ້ບູຊາແລະ ບົວລະບັດບໍລິເວນບ່ອນ ຝັງສົບພໍ່ຂອງຕົນ ດ້ວຍຄວາມທະນຸຖະຫນອມ.

ມື້ຫນຶ່ງ ຂະນະທີ່ທ້າວຂໍພວນເສຍຫຍ້າ ທຳຄວາມສະອາດຢູ່ອ້ອມແອ້ມ ຂຸມຝັງພໍ່ຢູ່ນັ້ນ ກໍໄດ້ພົບເຫັນຄາບລວງ(໔) ໃຫຍ່ ຄາບຫນຶ່ງ ທ້າວດີໃຈຫຼາຍ ຫອບຂຸມເອົາມາໃສ່ເອິກ ແລ້ວແລ່ນເມືອເຮືອນ

ທ້າວກ່ຳພາຂໍເອົາຄາບລວງ ມາຄຽນໃສ່ຕົນຕົວເຮັດຕາງສົ້ງເສື້ອ ເພາະຕົນເອງກໍ່ບໍ່ມີເສື້ອສົ້ງນຸ່ງຢູ່ແລ້ວ

ຂ່າວຊ່າລືໄປຮອດຫູພະຍາວ່າ "ບັກກ່ຳພອຍຂໍ ມີຄາບລວງ" ພະຍາຢາກເຫັນ ແລະ ຢາກໄດ້ຄາບລວງຫຼາຍ ຈຶ່ງແຕ່ງໃຫ້ເສນາມາເຊີນເອົາກ່ຳພອຍຂໍເຂົ້າໄປໃນວັງ ມື້ນັ້ນ ພະຍາແຕ່ງພາເຂົ້າຕ້ອນຮັບທ້າວຂໍຢ່າງດີ ເພາະຫວັງຈະຈອບຍອຍເອົາຄາບລວງ ຂອງຂໍ ມາເປັນຂອງຕົນ ແຕ່ຂໍກໍ່ບໍ່ຍອມໃຫ້ຢ່າງ ເດັດຂາດ ພະຍາເອົາແຜ່ນແພງາມ ສົ້ງເສື້ອເງິນຄຳໃຫ້ ຂໍກໍ່ປະຕິເສດບໍ່ເອົາ ຫຍັງທັງຫມົດ ແລ້ວສົ່ງລາພະຍາກັບເມືອເຮືອນຖູບຂອງຕົນ

ຫຼັງຈາກນັ້ນ ຢູ່ມາອີກບໍ່ດົນ ທ້າວກ່ຳພອຍຂໍ ກໍ່ອອກຈາກບ້ານໄປຊອກຮຽນວິຊາຄວາມຮູ້

ທ້າວຜ່ານໄປຫຼາຍບ້ານຫຼາຍເມືອງ ໄດ້ພົບໄດ້ເຫັນຫຼາຍສິ່ງຫຼາຍຢ່າງ ໃນຊີວິດ ຈາກນັ້ນ ທ້າວຈຶ່ງນັບມື້ນັບມີຄວາມຮູ້ ແລະ ວິຊາອາຄົມຫຼາຍຂຶ້ນກວ່າເດີມ

ເຫັນທ້າວຂໍມີຄາບລວງ ຫຼາຍຄົນບໍ່ເຄີຍໄດ້ເຫັນ ກໍ່ຄຶດຢາກໄດ້ທີ່ສຸດ ຈຶ່ງໂສເອົາຮອດ ເງິນຄຳມາປ່ຽນເອົາ ແຕ່ທ້າວກໍ່ບໍ່ຍອມປ່ຽນ ແລະ ມີແຕ່ຕອບວ່າ : "ນີ້ແມ່ນສົ້ງເສື້ອຮົ່ມບົງຂອງຂອຍ ໃຫ້ບໍ່ໄດ້ແລ້ວ"

ຢູ່ມາມື້ຫນຶ່ງ ມີຊາວໄຮ່ຄົນຫນຶ່ງມາຖາມເອົາປີ່ປ່ຽນ, ທ້າວຂໍພັດຕົກລົງແບ່ງເອົາຄາບລວງສ່ວນຫນຶ່ງປ່ຽນເອົາ ຕໍ່ມາມີຊາວນາຄົນຫນຶ່ງອີກ ເອົາເຂົາຄວາຍມາຖາມປ່ຽນ ຂໍກໍ່ຕົກລົງປ່ຽນເຫມືອນກັນ. ໄປຮອດເມືອງຫນຶ່ງອີກ ພັດມີຍິງຊະລາອາຍຸປະມານເກົ້າສິບກວ່າປີ ຊຶ່ງຕັ້ງແຕ່ເກີດມາບໍ່ເຄີຍໄດ້ຍິນວ່າ ໃຜມີຄາບລວງຈັກເທື່ອ ລາວຈຶ່ງຢາກໄດ້ທີ່ສຸດ ດັ່ງນັ້ນ ຈຶ່ງຕັດສິນໃຈເອົາຄັນຮົ່ມທີ່ລາວເອງ

ກໍແພງສຸດຫົວໃຈນັ້ນ ໄປຖາມປ່ຽນເອົາຄາບລວງ ສ່ວນທ້າວກ່ຳພອຍຂໍ ພໍເມື່ອໄດ້ຍິນວ່າ "ຄັນຮົ່ມ" ກໍພໍໃຈຕົກລົງປ່ຽນເອົາທັນທີ

ເມື່ອທ້າວ "ຂໍ" ໄດ້ປີ່, ເອົາຄວາຍ, ຄັນຮົ່ມ ແລະ ທະນູ ທີ່ພໍ່ມອບໃຫ້ນັ້ນແລ້ວ ລາວຮູ້ສຶກວ່າ ໃນຊີວິດທີ່ຜ່ານມາຂອງຕົນນັ້ນ ບໍ່ທັນມີເທື່ອໃດທີ່ຕົນຈະດີໃຈທໍ່ເທື່ອນີ້

ໃນປີດຽວກັນນີ້ເອງ ຍັງມີເມືອງໜຶ່ງ ຕົກຢູ່ໃນສະພາບເດືອດຮ້ອນ ເພາະຖືກຍຸງໃຫຍ່ຫຼວງມາກິນຄົນຢູ່ໃນເມືອງ ເກືອບຈະດັບມອດໝົດແລ້ວ ແຕ່ລະມື້ຊາວເມືອງຈຳຕ້ອງໄດ້ຈັດແບ່ງຜຽນກັນ : ມື້ນີ້ ຄົນໃນເຮືອນນີ້, ມື້ອື່ນຄົນໃນເຮືອນນັ້ນ ແລະ ເຮືອນຕໍ່ໆໄປ... ທີ່ຕ້ອງໄດ້ໃຫ້ໃຜຜູ້ໜຶ່ງໄປມອບຊີວິດໃຫ້ຍຸງໃຫຍ່ໂຕນັ້ນກິນເປັນອາຫານ

ຂ່າວເສົ້າໃຈດັ່ງກ່າວ ໄດ້ຊ່າໄປຮອດເມືອງທີ່ທ້າວກ່ຳພອຍຂໍກຳລັງອາໄສຢູ່ ພວກຜູ້ເຖົ້າໄດ້ຍິນພາກັນນ້ຳຕາຕົກ ຜູ້ໜຸ່ມໄດ້ຍິນພາກັນໂສກັນວ່າ ຈະເຮັດແນວໃດຈຶ່ງຈະຂ້າຍຸງໃຫຍ່ນັ້ນໄດ້ ? ພວກໜຶ່ງອີກ ຜັດວ່າ ຍອມ ມີແຕ່ຖ້າຕາຍເທົ່ານັ້ນແລ້ວ ມັນກິນໝົດຄົນເມືອງນັ້ນແລ້ວ ກໍຈະມາກິນຄົນຢູ່ເມືອງນີ້ ບໍ່ມີທາງຈະສູ້ມັນໄດ້ດອກ... ບາງຈຳນວນຂີ້ຢ້ານ ແລະ ໄຮ້ປັນຍາກໍຟ້າວແລ່ນຂຶ້ນເຮືອນ ແລ້ວອັດປະຕູແຈບງລີ້ຢູ່ໃນ

ກ່າວເຖິງທ້າວກ່ຳພອຍ ຂໍ ຫຼັງຈາກໄດ້ຍິນກໍຟ້າວຕ້າງເອົາເຄື່ອງ ສຳຄັນຂອງຕົນ ແລ້ວມຸ່ງໜ້າອອກໄປຫາເມືອງດັ່ງກ່າວ

ທ້າວຂໍ ເດີນທາງຢູ່ເຈັດມື້ ເຈັດຄືນ ຈຶ່ງໄປຮອດເມືອງທີ່ກຳລັງຖືກຍຸງຍັກມາຮາວີ

ມື້ນັ້ນ ຖືກຜຽນເຮືອນຂອງສອງຍ່າຫຼານທຸກຈົນຄອບຄົວໜຶ່ງ ທີ່ຈະຕ້ອງ ໄດ້ໃຫ້ໃຜຜູ້ໜຶ່ງໄປເປັນອາຫານຂອງຍຸງຍັກ ດ້ວຍເຫດນັ້ນ ຜູ້ເປັນຍ່າ ຈຶ່ງເວົ້າກັບຫຼານສາວຂອງຕົນວ່າ : ຍ່າເຖົ້າແລ້ວ ຍ່າຈະໄປໃຫ້ຍຸງກິນຍັງຈະດີກວ່າຊິໃຫ້ຫຼານ ຜູ້ຍັງໜຸ່ມຍັງສາວໄປ ຊີວິດ-ອະນາຄົດພວກຫຼານຍັງຍາວໄກ... ສ່ວນຜູ້ເປັນຫຼານສາວກໍບໍ່ຍອມປ່ອຍໃຫ້ຍ່າຂອງຕົນໄປເປັນເດັດຂາດ ເພາະນາງຮັກແລະສົງສານຍ່າທີ່ສຸດ ສຳລັບຕົວແລ້ວ ຖ້າຊິໃຫ້ຍ່າຕາຍ ຕົນເອງຂໍໄປຕາຍຕາງຍັງດີກວ່າ ຍ່າກໍບໍ່ຍອມໃຫ້ຫຼານໄປ ຫຼານກໍບໍ່ຍອມໃຫ້ຍ່າໄປ ແຕ່ພັດຈຳຕ້ອງໃຫ້ໃຜ ຜູ້

ໜຶ່ງໃນສອງນັ້ນໄປ ດັ່ງນັ້ນ ຜູ່ເປັນຫຼານສາວຈຶ່ງຕັດສິນໃຈເອົາເອງ : ນາງຟ້າວແລ່ນໜີອອກຈາກເຮືອນ ມຸ່ງໜ້າໄປຫາບ່ອນທີ່ຍຸງຖ້າກິນ ນາງທັງຮ້ອງໄຫ້ທັງແລ່ນ ເພາະບໍ່ຢາກຕາຍ ແລະ ຄິດດູຕົນຍ່າເຖົ້າທີ່ສຸດ ແຕ່ນີ້ນີ້ຕໍ່ໄປຈະໄດ້ວິ້ນລຳບາກຢູ່ຄົນດຽວ ບໍ່ມີຫຼານຊ່ວຍເບິ່ງແຍງຄືດາວກ່ອນທີ່ຕົນຢູ່ນຳ...

ເມື່ອນາງໄປຮອດໃກ້ບ່ອນຍຸງຢູ່ນັ້ນ ພໍດີທ້າວຂໍ່ມາຮອດ ພໍເມື່ອທ້າວຫຼຽວເຫັນນາງ, ທ້າວກໍຟ້າວແລ່ນມາລັດໜ້າ ແລະ ຖາມວ່າ ນາງຈະໄປໃສ ແລະເປັນຫຍັງຈຶ່ງຮ້ອງໄຫ້ຄືແນວນີ້ ? ນາງເລົ່າເລື່ອງເປັນມາທັງໝົດໃນເມືອງ ຂອງຕົນໃຫ້ທ້າວຟັງຕາມຄວາມຈິງ ແລະ ກໍໄດ້ເວົ້າວ່າ ນາງເອງກໍຈະຖືກຍຸງກິນໃນມື້ນີ້ເສຽແລ້ວ ເມື່ອແຈງເລື່ອງລາວທັງໝົດແລ້ວ ທ້າວໄດ້ບອກໃຫ້ນາງເຊົາໄຫ້ - ແລະ ເວົ້າວ່າ ຕົນຈະເປັນຜູ່ໄປຂ້າຍຸງຍັກນັ້ນໃຫ້ໄດ້ ຂໍແຕ່ໃຫ້ນາງຊ່ວຍພາທາງໄປບ່ອນທີ່ຍຸງຢູ່ ແລະ ເມື່ອຮອດບ່ອນນັ້ນແລ້ວໃຫ້ນາງຢືນຢູ່ເບື້ອງຫຼັງ ສ່ວນ ຕົນເອງຈະປະເຊີນໜ້າກັບຍຸງ ຫຼັງຈາກຕົກລົງກັນແລ້ວ ພວກເຂົາເຈົ້າກໍມຸ່ງ ໜ້າໄປຫາຈຸດທີ່ໝາຍ

ພໍເມື່ອພວກເຂົາທັງສອງໄປຮອດບ່ອນດັ່ງກ່າວແລ້ວ ຍຸງຫອມກິ່ນຄົນ ຈຶ່ງຟ້າວປາກົດຕົວອອກມາທັນທີ ແລ້ວມຸ່ງໜ້າມາສູ່ ສອງຄົນທີ່ກຳລັງຢືນຖາມັນຢູ່ ທັນໃດ ທ້າວຂໍ່ ໄດ້ຮ້ອງໃສ່ມັນດ້ວຍນ້ຳສຽງແຂງກ້າວ່າ :

- ຢຸດ, ມຶງຈະເຮັດຫຍັງ ?

ຍຸງຍັກຕົວນັ້ນຕົກໃຈຢ້ານສັ່ນ ແລະ ທັງແປກປະຫຼາດໃຈວ່າ: ນີ້ແມ່ນ ຄົນແນວໃດແທ້ ຈຶ່ງມາກ້າອອກຄຳສັ່ງໃສ່ກູຄືຈັ່ງຊີ້ ແຕ່ຮູບນອກ ມັນກໍຍັງພະຍາຍາມເວົ້າໃຫ້ດັງໆ ເພື່ອນາບຂູ່ວ່າ :

- ໂຫ້ !... ມຶງມີລິດເດດດີຫຍັງ ຈຶ່ງມາກ້າສັ່ງຮອດກູໃຫ້ຢຸດ ?

ທ້າວຂໍ່ຍິ້ມຢ່າງສະຫງ່າຜ່າເຜີຍ ແລ້ວຕອບວ່າ :

- ໂອ້ ມິລະບໍ້ ຖ້າເມື່ອໃດຈຳເປັນກໍຈະສະແດງອອກມາໂລດດອກ

ຍຸງໂມໂຫແລ້ວເວົ້າດູຖູກທ້າວຂໍ່ອີກວ່າ :

- ຫື ຫົວທໍ່ໝາກກອກນີ້ກໍວ່າຕົນມີລິດເດດ ! ລອງສະແດງໃຫ້ກູເບິ່ງດູອັນວ່າລິດນຶງຫັ້ນນ່າ

ພໍຍຸງເວົ້າສຸດຄວາມ ທ້າວຂໍ່ກໍເອົາປີ່ອອກມາເປົ່າ ເອົາເຂົາຄວາຍສອງ

ອັນມາອັດໃສ່ສອງບ່າໄລ່ຂອງຕົນ ແລະ ກົ້ງຄັນຮົ່ມຂຶ້ນ ແລ້ວເວົ້າກັບຍຸງວ່າ :

– ນີ້ລະລິດຂອງກູ ! ມຶງເຄີຍມີລິດທິຫຍັງ ສະແດງອອກໃຫ້ກູເບິ່ງໂລດຕີ້

ຍຸງຫົວຮ່າງແລ້ວໃຊ້ສຽງດັງງູຕອບວ່າ :

– ນີ້ ເບິ່ງເດີ້ ! ເວົ້າແລ້ວຍຸງອ້າປາກຂຶ້ນກວ້າງໆ ກຽມວ່າຈະສວາບກືນກິນທ້າວອໍ່ໃຫ້ສິ້ນໃຈເໝືອນຂອງມັນ

ແຕ່ທ້າວອໍ່ ຜູ້ກຽມຕົວຢູ່ແລ້ວ ຟ້າວວາແຂນໂດດຂຶ້ນສູງໆ ກົ່ງຄັນທະນູຍິງໃສ່ປາກຂອງມັນ ທີ່ພວມກຳລັງອ້າກວ້າງໆ ລູກສອນວິເສດຂອງທ້າວ ຫລຸດຈາກຄັນຢ່າງຮຸນແຮງ ແລະ ວ່ອງໄວ ກົງເຂົ້າສຽບປາກຂອງຍຸງທັນທີ

ກ່າວເຖິງນາງສາວຄົນນັ້ນ ເມື່ອເຫັນຊາຍແປກໜ້າ ຜາບແພ້ຍຸງຍັກແລ້ວ ກໍຮີບແລ່ນກັບເມືອຫາຍ່າ ແລະ ປ່າວຂ່າວໂຊກໄຊດັ່ງກ່າວໃຫ້ທົ່ວເມືອງຮູ້

ຊາວເມືອງດີໃຈ ພ້ອມກັນເຮັດບຸນສະເຫຼີມສະຫຼອງນະຫາໄຊຄັ້ງນີ້ຢ່າງມ່ວນຊື່ນ ຟັງສຽງຂັບສຽງແຄນສຽງຮ້ອງ ຟ້ອນທີ່ງຽບສະຫງັດໄປໄດ້ຫລາຍປີມາແລ້ວນັ້ນ ບາດນີ້ໄດ້ຟື້ນກັບຄືນມາອີກໃຫມ່ ເບິ່ງມັນກອງລະງົມ ແລະ ມີສີສັນລີລາສວຍງາມຫຼາຍຂຶ້ນກວ່າເກົ່າ

ຕັ້ງແຕ່ນັ້ນມາ ຊາວເມືອງຈຶ່ງພົ້ນຈາກຄວາມເດືອດຮ້ອນ ຈາກການຮາວີຂອງຍຸງຍັກ ທົ່ວເມືອງໄດ້ຢູ່ເຢັນເປັນສຸກ

ສ່ວນທ້າວອໍ່ ກໍໄດ້ແຕ່ງງານກັບຫຼານສາວຂອງຍ່າເຖົ້າ ແລ້ວພ້ອມກັບ ຊາວບ້ານຊາວເມືອງທັງປວງ ເສີມສ້າງ ແລະ ຮັກສາ ບ້ານເມືອງຂອງຕົນ ສືບຕໍ່ມາຢ່າງມີຄວາມສຸກຈົນເທົ້າທຸກວັນນີ້

ຜູ້ເລົ່າ – ປ້າເພັດ

ຜູ້ຂຽນ – ດາລີວັນ ສິດພະໄຊ

■■■

---

໑. "ອໍ່" ພາສາທ້ອງຖິ່ນໄທຂາວ ແປວ່າ ທຸກຈົນ

໔. ລາວ ສັດປະເພດງູໃຫຍ່ ໃນເທບນິຍາຍ

# ໝາກັບແມວ

## ໄປເອົາແກ້ວ

ຜູ້ເລົ່າ - ສີລາ ວີລະວົງ
ຜູ້ຂຽນ - ດວງເດືອນ ວີລະວົງ

ພໍ່ນາຄົນໜຶ່ງມີສັດລ້ຽງຢູ່ສາມໂຕ ຄືງົວ ໝາ ແລະແມວ ງົວຂອງລາວເປັນງົວເຖິກ ແຂງ ແຮງ ມີເຂົາກົ່ງກອນພໍດີງາມ ພໍ່ນາຮັກງົວ ຕົວນີ້ຫລາຍເພາະມັນດຸໝັ່ນ ຮູ້ຈັກວຽກ ໄຮ່ການນາດີ ບໍ່ລັງ ບໍ່ຮາຍຈັກເທື່ອ ຢູ່ມາໄດ້ຫລາຍຟ້າຫລາຍປີ ງົວລົ້ມປ່ວຍແລະຕາຍລົງຢ່າງກະທັນຫັນ ພໍ່ນາເສຍໃຈຫລາຍ ຮອງໄຫ້ນຳງົວພໍປານວ່າມັນແມ່ນຍາດ ພີ່ນ້ອງຜູ້ໜຶ່ງ ລາວຈັດພິທີສົ່ງສະການງົວຄືກັບວ່າມັນແມ່ນມະນຸດຜູ້ໜຶ່ງ ຫລັງຈາກເຜົາສົບງົວແລ້ວພໍ່ນາຈຶ່ງໄປເກັບດູກຄິດວ່າຈະເອົາດູກງົວມາກໍ່ໃສ່ທາດໄວ້ເປັນທີ່ລະລຶກ ເມື່ອຄວັດເຄ່ຍຂີ້ຝຸ່ນຢູ່ເທິງກອງຟອນລາວເຫັນແກ້ວສີຂຽວໃສງາມດີໜ່ວຍໜຶ່ງ ພໍ່ນາດີໃຈຫລາຍຄິດວ່າງົວຂອງຕົນໄດ້ປະເຄື່ອງຄ້ຳຂອງຄູນໄວ້ໃຫ້ ລາວຈຶ່ງເກັບຮັກສາບູຊາໄວ້ເທິງຮ້ານພະຢູ່ເຮືອນ ເມື່ອເວລາລາວອອກໄປເຮັດໄຮ່ໄຖນາຈຶ່ງສັ່ງໃຫ້ໝາແລະແມວຢູ່ເຝົ້າເຮືອນໃຫ້ດີ ເປັນໜ້າອັດສະຈັນຢູ່ວ່ານັບແຕ່ໄດ້ແກ້ວໜ່ວຍນີ້ມາໄວ້ໃນເຮືອນ ເຂົ້າໃນນາ ປາໃນໜອງຂອງພໍ່ນາລ້ວນແຕ່ອຸດົມສົມບູນຂຶ້ນພໍ່ນາມີຖານະດີຂຶ້ນເລື້ອຍໆ ໃນທີ່ສຸດກໍ່ເປັນທີ່ຊາລືກັນວ່າ ພໍ່ນາມີແກ້ວວິເສດຢູ່ໃນ ເຮືອນ ຂີ້ຂະໂມຍຄົນໜຶ່ງໄດ້ຍິນຄຳຊາລືດັ່ງກ່າວຈຶ່ງມາພີ່ປອງລັກເອົາແກ້ວ ໃນມື້ໜຶ່ງຂະນະທີ່ແມວກັບໝາຢູ່ເຝົ້າເຮືອນ ແຕ່ຫາກພວກມັນຢອກໄລ່ກັນຫລິ້ນ (ແຕ່ກ່ອນໆໝາ



ກັບແມວຖືກກັນດີ) ຢູ່ເດີ່ນໜ້າບ້ານ ຂະໂມຍຈອບມາທາງຫລັງບ້ານ ປີນຂຶ້ນປ່ອງຢ້ຽມແລ້ວເຂົ້າໄປຢິບເອົາໜ່ວຍແກ້ວເທິງຮ້ານພະໄປໂດຍບໍ່ມີໃຜຮູ້ເຫັນນຳ

ເມື່ອພໍ່ນາກັບມາເຮືອນໃນຕອນຄ່ຳບໍ່ເຫັນແກ້ວ ຈຶ່ງຮ້າຍດ່າໝາກັບແມວຢ່າງໃຫຍ່ ຈາໄລ່ສັດທັງສອງໜີ ແມວກັບໝາພາກັນຮ້ອງໄຫ້ອອນວອນຂໍຢູ່ນຳຄືນຕໍ່ ແລະອາສາວ່າຈະໄປນຳເອົາແກ້ວຄືນມາໃຫ້ໄດ້

- ເອີ ກູໃຫ້ເວລາສູສາມມື້ ຜູ້ໃດໄດ້ແກ້ວຄືນມາກູຈະໃຫ້ຢູ່ໃຫ້ກິນ ຢູ່ເທິງເຮືອນນຳ ! ພໍ່ນາສັ່ງຄວາມກ່ອນທີ່ສັດທັງສອງຈະອອກເດີນທາງ

ແມວຮູ້ວ່າໝາມີດັງດີພິເສດສຳລັບສືບກິ່ນ ຈຶ່ງໂອ້ລົມເຈລະຈາກັບໝາດ້ວຍຄວາມອ່ອນຫວານວ່າ :

- ພວກເຮົາໄປນຳກັນເນາະ ! ມີໄພອັນຕະລາຍແນວໃດຈຶ່ງຈະໄດ້ຊ່ວຍເຫຼືອກັນທ່ວງທັນ ເຮັດແນວນີ້ພວກເຮົາຈຶ່ງຈະໄດ້ແກ້ວມາສົ່ງນາຍ ແລະໄດ້ຢູ່ຮ່ວມເຮືອນດຽວກັນຕໍ່ໄປ

ໝາເຫັນດີນຳແມວ ເພາະມັນເອງມີນິໄສຂີ້ຢ້ານມັກຮ້ອງແຮງໆອອກມາໃນເວລາຕື່ນຕົກໃຈ ຈຶ່ງຊັ້ນສັດທັງສອງຈຶ່ງຕົກລົງຮ່ວມທາງກັນ ໝາເລີ່ມຕົ້ນສືບດົມກິ່ນຢູ່ອ້ອມເຮືອນ ຈາກນັ້ນມັນຈຶ່ງຮູ້ວ່າຂີ້ຂະໂມຍໄດ້ເຂົ້າມາທາງປ່ອງຢ້ຽມ ແລະກັບໄປທາງສວນຫລັງບ້ານ ໝາກັບແມວແລ່ນໄປຕາມກິ່ນທີ່ໝາສືບໄດ້ ຮອດເວລາບ່າຍສັດທັງສອງມາເຖິງໜອງໃຫຍ່ບ່ອນໜຶ່ງ ມີແຂ້ເຈົ້າວັງນ້ຳນອນຂວາງໜ້າຢູ່ ໝາເຫັນແຂ້ໄດ້ກິ່ນຄອວກູຍກໍ່ຢ້ານສັ່ນ ຫລົງຮອງເຫົ້ງງອອກມາ ສ່ວນແມວມີສະຕິດີຈຶ່ງເຂົ້າໄປຖາມແຂ້ດ້ວຍທ່າທີນອບນ້ອມວ່າ :

- ພະຍາແຂ້ເຫັນຂີ້ຂະໂມຍຜູ້ໜຶ່ງມາຂ້າມນ້ຳໄປຟາກພຸ້ນແດ່ບໍ ? ມັນໄດ້ໄປລັກເອົາແກ້ວວິເສດຂອງນາຍເຮົາໄປ ນາຍເຮົາໃຈຮ້າຍຫລາຍ ຖ້າບໍ່ໄດ້ແກ້ວຄືນມາພວກເຮົາຕ້ອງຖືກນາຍໄລ່ໜີບໍ່ມີບ່ອນຢູ່

ແຂ້ຖືກແມວຍົກຍ້ອງໃຫ້ເປັນພະຍາກໍ່ຂຶ້ນເອີກ ອ້າປາກອ້າງແຂ້ວໝູນຫົວໃສ່ແມວດ້ວຍຄວາມດີໃຈ :

- ເອີ... ເອີແມວນ້ອຍເຈົ້າກາຫານດີຫລາຍ ກ້າຖາມຮອດເຮົາຜູ້ເປັນພະຍາແຂ້ ເຮົາຈະບອກຄວາມຈິງກັບເຈົ້າທຸກຢ່າງ ຂີ້ຂະໂມຍທີ່ວ່ານັ້ນມັນຂ້າມນ້ຳໄປຟາກພຸ້ນແຕ່ວານນີ້ພຸ້ນແລ້ວ !

- ຂອບໃຈຫລາຍໆທ່ານພະຍາແຂ້... ແຕ່ເອ໊ ຂະໂມຍມັນຂ້າມໄປແນວໃດລະ ? ມັນຂີ່ເຮືອໄປບໍ ?

- ມັນມີເຮືອຂອງມັນລະບໍ ! ຂີ່ຂ້າມໄປແລ້ວມັນເອົາຂຶ້ນ ຝັ່ງໄວ້ພ້ອມ

- ໂອ... ຊັ້ນພວກເຮົາຈະຂ້າມໄປໄດ້ແນວໃດເນາະ ? ແມວຫັນມາ-ປຶກສາກັບຫມາ ເຊິ່ງໄດ້ແຕ່ແກວ່ງຫົວເຮັດທາງເຕືອຍຍ້ອນຢ້ານແຂ້ ແມວຈຶ່ງເປັນຜູ້ຄິດອອກເວົ້າກັບແຂ້ວ່າ :

- ພະຍາແຂ້ເຮີ້ຍ ! ຫລັງຂອງທ່ານກໍ່ກວ້າງໃຫຍ່ພໍປານແຜ່ນແປ້ນ ຂໍໃຫ້ພວກເຮົາຂີ່ຫລັງທ່ານຂ້າມນ້ຳນີ້ໄປໄດ້ບໍ່ ? ພວກເຮົາຈະບໍ່ລືມບຸນລືມຄຸນຂອງທ່ານພະຍາເລີຍ

- ເອີ... ພວກສູຕ້ອງການຈັ່ງຊັ້ນກະໄດ້ ເພາະກູກໍ່ພວມວ່າຈະຂ້າມໄປຟາກພຸ້ນຢູ່ ຫລັງຂອງກູພົ້ນນ້ຳຈະເປັນບ່ອນນັ່ງໃຫ້ສູທັງສອງໄດ້ຢ່າງສຳບາຍ... ເອົາລະມາ... ມາຂີ່ເລີຍ !

ຫມານັ້ນຢ້ານແຂ້ກໍຢ້ານ ແລະຢ້ານບໍ່ໄດ້ແກ້ວໄປສິ່ງນາຍທ່ງກັນ ເມື່ອເຫັນແມວບໍ່ຢ້ານກົວອັນຕະລາຍໃດໆຈຶ່ງຕັດສິນໃຈໂດດຂຶ້ນຫລັງແຂ້ນຳແມວ

ແຂ້ໃຫຍ່ຟາດຫາງໃສ່ນ້ຳເປັນຟອງຍວກແຕກກະຈາຍອອນຂ້າງ ແລ້ວຈຶ່ງພຸ່ງຫົວອອກກາງວັງນ້ຳດ້ວຍຈິດໃຈເບີກບານອອນຊອນ ບາງເທື່ອແຜ່ນຫລັງກວ້າງຂະຫນາດແຜ່ນແປ້ນປູເຮືອນຂອງມັນກໍ່ຈົມປູດລົງໃນນ້ຳ ສັດທັງສອງທີ່ອາໄສຢູ່ເທິງຫລັງຈຶ່ງຖອຍຫຍັບຂຶ້ນໄປທາງຫົວເລື້ອຍໆ ເຮັດໃຫ້ຫມາເຊິ່ງຢ້ານສັ່ນເຊັ້ນ ຢູ່ແຕ່ເກີດຮູ້ສຶກເຈັບທ້ອງຢາກຖ່າຍຫນັກຂຶ້ນມາທັນທີ ມັນຄາງຫງິງໆອິດທົນຍຸມກັ້ນໄວ້

ແມວເຫັນອາການຕ່າງຂອງຫມາຈຶ່ງຖາມວ່າ :

- ໂຕເປັນຫຍັງລະຫັ້ນ ?

- ເຮົາເຈັບທ້ອງແຮງ ຢາກຖ່າຍຫນັກ ! ຫມາຕອບຫນ້າບິດຫນ້າບ້ຽວ

- ອົດໄດ້ສ່ຽວ... ຢ່າຂີ້ໃສ່ແຂ້ເປັນເດັດຂາດເດີ ! ແມວຊື່ນບອກດ້ວຍຄວາມຫວັງດີ - ບໍ່ຊັ້ນເກີດເລື່ອງໃຫຍ່ຄັກໆຕອ່າ !

- ໂອ້ຍ ເຮົາໃຈຊິຂາດແລ້ວເດີ້ ! ຫມາຄາງໂອ່ຍຢ່າງທໍລະມານ

- ພະຍາແຂ້ເອີຍ ! ຟັດແຕ່ໄດ້ເດີນທາງມາກໍ່ຫລາຍແບບ ຫລາຍແນວແລ້ວພວກເຮົາບໍ່ເຄີຍໄດ້ໄປໄວປານນີ້ຈັກເທື່ອ ທ່ານລອຍມານີ້ຄືຈະແມ່ນໄວສຸດຂີດ

ແລ້ວເນາະ ! ແມວໂອ້ລົມກັບແຂ້

- ເຮີຍ ! ຊ່ຳນີ້ມັນຊິໄວຫຍັງ ກູໄປໄວກວ່ານຶກກະຍັງໄດ້ນ່າ ວ່າແລ້ວແຂ້ຜູ້ນັກສະແດງກໍ່ຝາດຫາງຕາມໆ ເຄິ່ງໂຕດານຫາງຈົນປູດລົງໃນນ້ຳ ເພື່ອເປັ່ງກຳລັງດັນພຸ່ງໂຕໄປທາງໜ້າພໍປານບັ້ງໄຟຫລູດອອກຈາກຄາງ ໝາແລະແມວຖອຍແຫຍ້ຂຶ້ນໄປຢູ່ຮອດການຄໍແລ້ວ ບໍ່ດົນແຂ້ກໍ່ພາສັດທັງສອງເຂົ້າມາໃກ້ຕາຝັ່ງ ໝາເຈັບທອງຫລາຍຂຶ້ນເປັນລຳດັບ ລໍຄອຍເວລາຈະໂດດອອກຈາກຫົວແຂ້ດ້ວຍໃຈຈົດຈໍ່ຈົ່ງຊຸ້ນພໍແຂ້ຫຍັບເຂົ້າໃກ້ຕາຝັ່ງກະວ່າຈະໂດດເຖິງດິນ ມັນກໍ່ໂຍ້ໂຕລຸກຂຶ້ນໂດດທັນທີບໍ່ເປັນຈັ່ງບຸນ ການເຄື່ອນເໜັງແບບກະທັນຫັນເຮັດໃຫ້ມັນບໍ່ສາມາດບັນຊາເສັ້ນປະສາດທັງໝົດໄດ້ ຈຶ່ງຂໍ້ຢອດປອດອອກໃສ່ປາຍດັງແຂ້ພໍດີ ແຂ້ໃຈຮ້າຍຝາດຫາງໃສ່ນ້ຳ ອາປາກຊິສວາບແຕ່ບໍ່ທັນເສຍແລ້ວ ໝາແລ່ນເຂົ້າໄປລີ້ໃນພຸ່ມໄມ້ເທິງຝັ່ງສູງຮອງເຫງົ້າງໆແລະປ່ອຍໜັກອອກດ້ວຍຄວາມສະຫວ່າງໃຈ ແມວເອງກໍ່ຕົກໃຈຄືກັນ-ຈຶ່ງໂດດຂຶ້ນຝັ່ງ ແຕ່ມັນບໍ່ລືມຮອງຂອບອົກຂອບໃຈແຂ້ ແຕ່ແຂ້ບໍ່ຟັງສຽງ ຮອງດ່າຂຶ້ນໄປໃສ່ໝາວ່າ :

- ມຶງເດີ້ ບັກໝາເອີ້ຍ ນັບແຕ່ນີ້ໄປມຶງຢ່າໄດ້ໃຫ້ກູເຫັນໜ້າອີກກູຂໍຈອງກຳຈອງເວນກັບມຶງບໍ່ວ່າຊາດນີ້ຫລືຊາດໃດ ຂໍເປັນສັດຕູກັບມຶງຕະຫລອດໄປ . ຍອນແນວນີ້ແລ້ວ ໝາກັບແຂ້ຈຶ່ງບໍ່ຖືກຕອງປອງດອງກັນ ແລະແຂ້ກໍ່ມີກ້ອນຂີ້ໝາຕິດ ຢູ່ປາຍດັງມາຈົນເທົ້າທຸກວັນນີ້ ເອີ້ນວ່າຂີ້ໝາກາຍ

ຫລັງຈາກພັກເຊົາເອົາແຮງແລ້ວ ໝາແລະແມວຈຶ່ງອອກເດີນທາງຕໍ່ ຈົນຮອດເຮືອນຂະໂມຍ ເວລານັ້ນພໍດີຄ່ອຍຄ່ຳແລ້ວ ແສງແດດເລົາສຸດທ້າຍມອດມ້ວຍລົງ ບໍລິເວນອ້ອມເຮືອນຂະໂມຍຕົກຢູ່ໃນຄວາມມືດມິດ ໝາແລະແມວຄ່ອຍໆ ຈອບເຂົ້າໄປ ຮູ້ວ່າບໍ່ມີຄົນຢູ່ເຮືອນແລ້ວຈຶ່ງຕົກລົງໃຫ້ແມວຂຶ້ນໄປຊອກຄົ້ນຢູ່ເທິງເຮືອນ - ສ່ວນໝາຈອບເຝົ້າຢູ່ຕະລ່າງ ແມວຂຶ້ນໄປຊອກຄົ້ນຢູ່ຕັ້ງດົນກໍ່ບໍ່ເຫັນແກວຈົນເດິກດື່ນເກືອບທ່ຽງຄືນ ໝາເລັ່ງແມວເພາະຢ້ານເຈົ້າຂອງເຮືອນກັບມາ ແມວກັບໝາເລີ່ມຜິດຖຽງກັນ ພໍດີມີໜູໂຕໜຶ່ງອອກມາຫາກິນ ແມວຈຶ່ງໂດດຈັບໄວ້ແລ້ວຖາມວ່າ

- ມຶງມາຢູ່ເຮືອນນີ້ດົນແລ້ວບໍ ?

- ຢູ່ມາແຕ່ເກີດພຸ້ນແລ້ວ ພໍ່ແມ່ອ້າຍນ້ອງຂ້ອຍຢູ່ນີ້ໝົດ ເຈົ້າມາແຕ່ໃສ ? ແຕ່ກ່ອນມາຫລັງຂ້ອຍຄືບໍ່ເຫັນເຈົ້າຈັກເທື່ອ ? - ໜູຖາມຄືນຢ່າງບໍ່ຢ້ານກົວພໍເທົ່າ

ໃດ ເພາະມັນຍັງບໍ່ຮູ້ຈັກລິດເດດຂອງແມວ ຈັ່ງຊັ້ນແມວຈຶ່ງກາງເລັບຂິ່ນຄໍຫນູລົງອີກ ແຮງໆ ທັງຍິ່ງແຂວຮອງພູ່ງໃສ່ຫນູ

- ໂອຍ ໆ ໆ ເຈັບແລວ ! ຫນູຮອງທັງດີ້ນດິ່ນໆ ແຕ່ຍິ່ງມັນດີ້ນເທົ່າໃດກໍ່ ປາກົດວ່າເລັບແຫຼມຄົມຂອງແມວຈິກຫົວມັນແຫນ້ນເທົ່ານັ້ນ

- ຍອມແລວ ຍອມແລວ ທ່ານຢາກໄດ້ຫຍັງ ? ຢາກຮູ້ຫຍັງຖາມມາໂລດ ! ຫນູຂໍອ່ອນຂໍຍອມຈັ່ງຊັ້ນ ແມວຈຶ່ງຫລຸດຜ່ອນຄວາມແຮງຈາກຊຸງເລັບມືລົງພໍຫນູ ເຫນັງ ໄປມາໄດ້

- ເອີ... ກູມີແມວຊິຖາມ ຖ້າມຶງບອກຄວາມຈິງກູຈະປ່ອຍໃຫ້ມຶງ ເປັນອິດ ສະຫລະ ຖ້າມຶງຕົວະບໍ່ແມ່ນແຕ່ມຶງຕົວດຽວດອກຊິຕາຍ ແຕ່ຫມົດໂຄດຫມົດເຊື້ອມຶງກະ ຊິຈິບຫາຍວາຍວອດໄປນຳ ແມວຂູ່ຍັງເຮັດໃຫ້ຫນູນ້ອຍຢ້ານສັ່ນເຊັນຂຶ້ນອີກ

- ໂດຍ... ຂ້ານ້ອຍ ມີຫຍັງຖາມມາໂລດ

- ມຶງຢູ່ເຮືອນນີ້ມາດົນ ມຶງຮູ້ຕິວ່ານາຍຂອງມຶງແມ່ນຍອດຂີ້ຂະໂມຍຜູ້ຫນຶ່ງ ! ຫວ່າງບໍ່ດົນມານີ້ມັນໄປລັກເອົາແກ້ວວິເສດຂອງນາຍກູມາ ມຶງຈົ່ງບອກກູມາ ຕາມ ຄວາມຈິງວ່າແກ້ວວິເສດຫນ່ວຍນັ້ນຢູ່ໃສ ?

ຫນູເອີ້ນຍາດພີ່ນ້ອງທັງຫມົດຂອງມັນມາໂຮມປະຊຸມ ແຈ້ງເຖິງໄພອັນຕະລາຍ ທີ່ຂົ່ມຂູ່ມັນໃຫ້ຫນູທຸກໂຕໄດ້ຮູ້ ຈັ່ງຊັ້ນພວກຫນູທັງຫລາຍຈຶ່ງຢ້ານກົວແມວນັບແຕ່ນັ້ນມາ ພວກມັນຊອກຫມົ້ນຕາມຮູຮອຍແຕກທຸກຢ່າງຢູ່ໃນແລະອ້ອມເສົາ ເພື່ອຊອກຫາແກ້ວໃຫ້ ແມວ ບ່ອນໃດເປື້ອນຮົກມືດດຳມັນກໍ່ລອດເຂົ້າໄປ ແມ່ນແຕ່ໃນໄຫເຂົ້າສານເຊິ່ງມີຝາ ອັດດີ ດ້ວຍຄວາມຮັກຕົວກົວຕາຍພວກຫນູຈຶ່ງຕ້ອງເຮັດວຽກຢ່າງຫນັກ ຈັ່ງຊັ້ນຫນູ ຕົວ ຫນຶ່ງຈຶ່ງໄປພົບແກ້ວເຊື່ອງຢູ່ໃນໄຫເຂົ້າ ມັນຟ້າວມາບອກແມວ ແມວໄດ້ແກ້ວຕາມປະ ສົງປ່ອຍຫນູເປັນອິດສະຫລະ ແລ້ວກໍ່ລົງເຮືອນຫນີຢ່າງມິດງຽບປ່ອຍຄວາມສະທ້ານ - ຢ້ານກົວໃນຈິດວິນຍານຂອງຫນູນັບແຕ່ນັ້ນມາ

ຫມາເຊິ່ງຈອບລີ້ຢູ່ຕະລ່າງໄດ້ຍິນສຽງແມວຊິດດລົງມາ ປາກຄາບແກ້ວໃສ່ນົ້ງ ນົ້ງ ຈຶ່ງຖາມຂຶ້ນດ້ວຍຄວາມອັດສະຈັນວ່າ :

- ເຮັດແມວໃດໂຕຈຶ່ງຫາພໍ້ລະ ? ແມວບໍ່ຕອບເພາະປາກຄາບແກ້ວຢູ່ ມັນ ອອກແລ່ນມຸ່ງຫນ້າກັບຄືນທາງເກົ່າ ເຮັດໃຫ້ຫມາຟ້າວສັກກະໂຍງຮອງເຕົ່າວົ້ງໆ ຕິດ ຕາມແມວໄປທັນທີຈົນຮອດຫນອງໃຫຍ່ບ່ອນເກົ່າແມວຈຶ່ງວາງແກ້ວ ທັນໃຈຫອບຢ່າງ

ເມື່ອຍ່ອນແລ້ວປຶກສາກັບຫມາວ່າ :

- ບັດນີ້ພວກເຮົາຈະເຮັດແນວໃດຈຶ່ງຈະຂ້າມນ້ຳໄດ້ ? ນົກເດີກດື່ນແລ້ວພະຍາແຂ້ຄົງນອນຫລັບພັກຜ່ອນ ເຮົາບໍ່ຫານໄປລົບກວນອີກດອກ ອີກຢ່າງຫນຶ່ງໂຕກໍ່ ຂີ້ຢອດໃສ່ຫົວແຂ້ໄວ້ ເພິ່ນຄົງບໍ່ໃຫ້ຂີ່ຫລັງອີກແລ້ວ

- ເອີ້... ເຮົາກໍ່ຄິດຢູ່ດອກວ່າເປັນຕາຍຮ້າຍດີແນວໃດກໍ່ຈະບໍ່ຂໍຂີ່ຫລັງ ແຂ້ອີກແລ້ວ ຄວາມຈິງເຮົາເອງກໍ່ມີຄວາມສາມາດສ່ວນຕົວແດ່ຢູ່ດອກ ! ຫມາສະແດງຄວາມໃນໃຈອອກມາ

- ຄວາມສາມາດອັນໃດ ?

- ກະເອົາສາມາດລອຍນ້ຳໄດ້ຢູ່... ພຽງແຕ່ບໍ່ໃຫ້ມີແຂ້ຢູ່ໃນນ້ຳເທົ່ານັ້ນລະ

- ຈັ່ງຊັ້ນໂຕເລາະໄປຂ້າມທາງໃຕ້ພຸ້ນ ຍາມນີ້ແຂ້ນອນພໍດີ ແລ້ວນັ້ອີນເຊົ້າພົບກັນຢູ່ຕົ້ນຂ້າມໃຫຍ່ແຄມທາງເມືອບ້ານ ! ແມວແນະນຳ - ສ່ວນເຮົາຂອນແຈງຈຶ່ງຈະຂໍຂີ່ຫລັງແຂ້ຂ້າມເມືອ

- ແລ້ວແກ້ວນັ້ນເດ ໂຕຄາບຂີ່ຫລັງແຂ້ມັນຈະປອດໄພບໍ ? ແຂ້ແຮງປາກກ້ວາງມັກກິນກ້ອນຫີນຢູ່ແລ້ວ ຈັກຫນ່ອຍມັນຄິດວ່າແມ່ນອາຫານມັນຈະຂໍກິນໂຕຈະເຮັດແນວໃດ ? ຫມາສະແດງຄວາມເປັນຫ່ວງເປັນໃຍເຊິ່ງກໍ່ແມ່ນຄວາມຈິງ ເພາະແຂ້-ມັກກິນກ້ອນຫີນຂອງຫນັກໆເຂົ້າໄປໃນທ້ອງ ເພື່ອຖ່ວງນ້ຳຫນັກເວລາມັນຢາກມຸດນ້ຳ

- ເອີ້ ແມ່ນຄວາມໂຕ ຊັ້ນຈະເຮັດແນວໃດ ?

- ເຮົາຈະຄາບແກ້ວລອຍຂ້າມນ້ຳເອງ... ແບບນີ້ຄິດວ່າຄົງປອດໄພດີກ່ວາຫມູ່ເນາະ ! ແມວຕົກລົງຕາມຫມາສະເຫນີ ເພາະບໍ່ເຫັນມີວິທີໃດອື່ນ

ຫມາຄາບເອົາແກ້ວແລ້ວແລ່ນເລາະໄປທາງໃຕ້ ເຫັນວ່າຫ່າງຈາກແຂ້ຫລາຍແລ້ວຈຶ່ງໂຕນລົງນ້ຳລອຍມຸ່ງຫນ້າຂ້າມໄປຍັງອີກຟາກຝັ່ງເບື້ອງຫນຶ່ງ ພໍລອຍມາຮອດເຄິ່ງກາງວັງ ຫມາກໍ່ຈ້ອງພະຈິນກັບຫມູ່ປາໂດທີ່ລອຍເລາະຫາສວາບເຫຍື່ອ ໂຊກຮ້າຍແທ້ງ ເມື່ອປາໂດຮອງຖາມຫມາກັບສາມາດອ້າປາກຕອບ ເຮັດໃຫ້ຫມູ່ປາໂດຄຶດຢາກຢອກພາໂລ ຈຶ່ງລອຍເຂົ້າມາຫຸ້ມລ້ອມຫມາເອົາຫາງຟາດນ້ຳເປັນຟອງ ຍອກທັ່ງໃສ່ຫມາບາດແຮງໆທັງພາກັນຫົວ ບາງຕົວໃຈກ້າດຶ່ງເຂົ້າມາຫາສວາບຂາງສວາບແອວ ຄາບຫາງດຶງ ເຮັດໃຫ້ຫມາຂີ້ກະດຽມອ້າປາກ ແກ້ວຈຶ່ງຫລຸດອອກຈາກປາກພວກປາໂດນາບເຫັນແກ້ວຫນ່ວຍໃສງາມຈຶ່ງລີ້ວເຂົ້າໃສ່ ໂຕອ່າວໃຫຍ່ອ່ອງໄວກວ່າ

ໝູ່ສວາບໄດ້ອິ່ມລົງທ້ອງ ແລ້ວລອຍລັບມະຫັບມະຫາຍໄປໃນກະແສນ້ຳທີ່ຊຸ່ມມືວເຢັນ ຈອຍໆນັ້ນເສຍ ໝາອົດທົນລອຍເລື້ອເຂົ້າຫາຝັ່ງແລ້ວປີນຂຶ້ນມາຢືນເທິງໂຄກ ເຖົ່າຫອນອອນວອນຂໍໃຫ້ປາເອົາແກ້ວມາສົ່ງຢູ່ຕະຫລອດຄືນ ແຕ່ອະນິຈາປາໂຕໃດຈະມາໄດ້ຍິນສຽງໝາຮ້ອງ ໃນເມື່ອພວກມັນບໍ່ມີຮອດຫູແລະລອຍຈົມຢູ່ໃນພື້ນນ້ຳເລິກບ່ອນກະແສສຽງໃດໆບົນພື້ນດິນຢັ່ງບໍ່ເຖິງພຸ້ນ

ຝ່າຍແມວ ເມື່ອຂ້າມນ້ຳມາໄດ້ແລ້ວກໍ່ແລ່ນກົງໄປຍັງຕົ້ນຂາມໃຫຍ່ ບ່ອນນັດໝາຍກັບໝາ ແຕ່ບໍ່ເຫັນໝາໄປຮອດຈັກເທື່ອ ໄດ້ຍິນສຽງຫອນຂອງໝາດັງວ່ອນມາຕາມສາຍລົມຕອນຂອນແຈ້ງ ຈຶ່ງຄິດເປັນຫ່ວງວ່າໝາອາດໄດ້ຮັບອັນຕະລາຍຈຶ່ງແລ່ນນຳຫາສຽງ ເຫັນໝາຢືນຮ້ອງຫອຍຢູ່ແຄມຫນອງນ້ຳຕາໄຫລອາບໜ້າ ເບິ່ງແລ້ວເປັນຕາສົງສານ ຈຶ່ງຖາມຂຶ້ນດ້ວຍຄວາມສົງໄສວ່າ :

- ແມ່ນໂຕຮ້ອງໂຕຫອນເຮັດຫຍັງ ?

- ເຮົາຂໍແກ້ວນຳປານ່າສ່ຽວ ໂຕຮູ້ບໍ່ວ່າແກ້ວ... ແກ້ວ... ເອີ້ພວກປາໂດມັນມາກອນເຮົາເອົາຫາງຟາດນ້ຳ ຟາດເຮົາຈົມແກ້ວຫລຸດແລ້ວມັນກໍ່ອີນກິນເລີຍ ... ຮື ໆ ໆ ເຮົາບໍ່ຮູ້ຈະເຮັດແນວໃດແລ້ວ .

ແມວໄດ້ຍິນແນວນັ້ນກໍ່ປາກບໍ່ອອກ ຄິດຢາກຮ້າຍໃຫ້ໝາເປັນທີ່ສຸດ

- ໂທ້ ! ເປັນແນວນີ້ນໍ ໂຕຮັກສາແກ້ວບໍ່ຫລ້ອນ... ເຮົາຊິໄປຟ້ອງນາຍແມວເວົ້າຢ່າງໂມໂຫ

- ເຮົາຂໍຮັບຜິດທຸກຢ່າງສ່ອວເອີ້ຍ ໂຕຢ່າຟ້າວໄປຟ້ອງນາຍເລີຍພວກເຮົາມີເວລາອີກຕັ້ງນີ້ ຈຶ່ງມາຄິດຫາອຸບາຍເອົາແກ້ວນຳປານີ້ກ່ອນ ລໍຮອດມື້ອື່ນເຊົ້າໃຫ້ຫູແຈ້ງຕາໃສເຫັນຮຸ່ງກ່ອນເນາະສ່ຽວ! ຄຳເວົ້າທີ່ມີເຫດຜົນຂອງໝາເຮັດໃຫ້ແມວ-ໃຈອ່ອນນຳ ສັດທັງສອງຈຶ່ງພາກັນນອນຟັກເຊົາເອົາແຮງລໍຖ້າວັນໃຫມ່

ຢູ່ແຄມຫນອງໃຫຍ່ໃກ້ໆກັບບ່ອນໝາແລະແມວນອນຢູ່ນັ້ນ ມີຕົ້ນງີ້ວໃຫຍ່ ຂຶ້ນລຽນກັນຢູ່ຫລາຍຕົ້ນ ເມື່ອດວງຕາເວັນຂອງວັນໃຫມ່ສ່ອງແສງສີເຫລືອງຈັບຂອບຟ້າໝູ່ນົກກາທີ່ເຮັດຮັງຢູ່ເທິງງ່າງີ້ວກໍ່ບິນເຈີດເຊີນອອກຫາກິນ ທັງສົ່ງສຽງຮ້ອງຈິບໆດັງແຊວງຄືກັບວ່າຢາກປຸກໃຫ້ປ່າຕື່ນຂຶ້ນມາຊົມກັບຄວາມສວຍງາມຂອງອະລຸນໂນໄທ

ແມວໄດ້ຍິນສຽງຈິບຈອດເຫລົ່ານັ້ນຈຶ່ງຊວາດຕື່ນ ແນມເບິ່ງໝູ່ນົກທີ່ບິນອອກ-ຈາກຕົ້ນໄມ້ມຸ່ງໜ້າສູ່ຫນອງປາຢ່າງເອົາໃຈໃສ່ ບໍ່ດົນຫົວສະຫມອງນ້ອຍໆຂອງມັນກໍ່

ແຈ່ມໃສຂຶ້ນ ໄວປານຟ້າແມບແມວແລ່ນບັກຫນ້າໄປຫາຕົ້ນງິ້ວໃຫຍ່ຕົ້ນຫນຶ່ງ ແລ້ວປີນໄຕ່ຂຶ້ນຢ່າງຄ່ອງແຄ້ວ ຈົນຮອດບ່ອນງ່າງິ້ວແຕກອອກເປັນຫລາຍງ່າມ ຢູ່ທີ່ນັ້ນມັນເຫັນຮັງນົກຂະຫນາດໃຫຍ່ຮັງຫນຶ່ງມີລູກນົກນ້ອຍຢູ່ແປດໂຕ ຂົນປີກຂອງພວກມັນຍັງອ່ອນບິນບໍ່ໄດ້ ນົກນ້ອຍພາກັນຮ້ອງແຊວໆເມື່ອເຫັນສັດປະຫລາດມີຂົນປົກຫນ້າຕາໃສໂນ້ງໆປີນຂຶ້ນໄປຢ່າງບໍ່ໄດ້ເຊື້ອເຊີນ

- ສູມີດູດຮວນເດີ ບໍ່ຊັ້ນກູຊິຈົກກິນສູຫມົດໄດ໋ ! ແມວຮ້ອງຂູ່ແຕ່ບໍ່ເປັນຜົນ-ນົກນ້ອຍບໍ່ຮູ້ຈັກຢ້ານເທື່ອ

- ເຈົ້າແມ່ນໃຜ ? ຂຶ້ນມາເທິງຕົ້ນໄມ້ຂອງພວກເຮົາເຮັດຫຍັງ ? ຖ້າພໍ່ແມ່ພວກເຮົາມາພໍ້ເພິ່ນຊິຕອດຕາເຈົ້າແຕກລະ ຣິບຫນີສາ !

- ສູຍັງບໍ່ຮູ້ວ່າກູແມ່ນໃຜຊື່ງດອກ ! ແມວເວົ້າແລ້ວກາງເລັບຍິ່ງແຂ້ວຂູ່ຟັ້ງຂຶ້ນ ໂດດສັກຂະໂຍງເຂົ້າໃກ້ຮັງນົກຢ່າງວ່ອງໄວ ເຮັດໃຫ້ພວກນົກນ້ອຍນິດລົງ

- ພໍ່ພວກເຮົາເປັນພະຍານົກກະສາ ມີບໍລິວານຫລາຍຮ້ອຍຫລາຍພັນ.... ນົກນ້ອຍຕົວໃຫຍ່ກວ່າຫມູ່ເວົ້າໂອ້ອວດຫວັງຈະໃຫ້ແມວຢ້ານ

- ພໍ່ສູເປັນພະຍາຫວ່ຍ ດີແລ້ວກູຊິເອົາພວກສູໄປເປັນໂຕປະກັນເວີ້ຍ !ວ່າແລ້ວແມວກໍ່ຈັດແຈງຄາບເອົາລູກນົກອອກຈາກຮັງມາເຊື່ອງໄວ້ໃນພຸ່ມໄມ້ຈົນຫມົດທຸກໂຕ ມັນນາບຊູບໍ່ໃຫ້ນົກນ້ອຍຮ້ອງ ແລ້ວມັນເອງກໍໄປຈອບລີ້ຢູ່ກອງຕົ້ນງິ້ວລໍຄອຍການກັບມາຂອງພໍ່ແມ່ນົກນ້ອຍ

ພໍ່ບ່າຍຄ້ອຍແສງຕາເວັນອ່ອນລົງ ພວກຫມູ່ນົກກາກໍ່ພາກັນບິນກັບຮວງຮັງເປັນຄູ່ໆ ສອງຜົວເມຍນົກກະສາຄາບເຫຍື່ອມາເຕັມປາກ ເພື່ອຈະເອົາມາປ້ອນລູກຂອງພວກມັນ ແຕ່ອະນິຈາ... ຮັງຂອງມັນຫວ່າງເປົ່າ ເຫັນແຕ່ປີກຂົນອ່ອນ ຂອງລູກເກາະຕິດປົນຢູ່ນຳເສັ້ນຫຍ້າ ເຮັດໃຫ້ນົກກະສາຕົວເມຍຮ້ອງໄຫ້ຮ່ຳໄຮຂຶ້ນທັນທີ-ນົກກະສາຕົວຜູ້ຈຶ່ງຮ້າຍວ່າ :

- ເຊົາເທາະ ! ເຈົ້າຮ້ອງໄຫ້ແນວນີ້ມັນໄດ້ຫຍັງດີຂຶ້ນ ? ຂ້ອຍບອກເຈົ້າແລ້ວວ່າໃຫ້ຢູ່ກັບລູກ ແຕ່ເຈົ້າບໍ່ຟັງ !

- ອ້າຍເອີຍ... ອ້າຍພູດຮວຫາລ້ຽງຮອດເຈັດແປດປາກ ເຮັດແນວໃດຈຶ່ງຈະກຸ້ມ ? ອ້າຍເອງກໍ່ເມື່ອຍເປັນຄືກັນ ນ້ອງຈຶ່ງຂໍອອກໄປຫາເຫຍື່ອຊ່ອຍອ້າຍ ! ບໍ່ຄິດວ່າຈະມີໄພອັນຕະລາຍແນວນີ້

- ບັດນີ້ຈະເຮັດແນວໃດລະ ? ລູກຂອງພວກເຮົາຍັງບໍ່ປີກກ້າຂາແຂງ ພໍບິນໄປໃສໄດ້ເອົາເອງ ແມ່ນພວກມັນພາກັນໄປໃສ ?

ທັນໃດນັ້ນ ນົກສອງຜົວເມຍກໍໄດ້ຍິນສຽງຮ້ອງແມວຢູ່ເບື້ອງລຸ່ມ ນົກທັງສອງບໍ່ເຄີຍເຫັນແມວມາກ່ອນຈຶ່ງຮູ້ສຶກຕ່າງໃຈ ຊວນກັນບິນລົງມາຈັບຢູ່ງ່າຕ່ຳ

- ເຈົ້າແມ່ນໃຜ ? ມາເຮັດຫຍັງຢູ່ນີ້ໃນຍາມຄ່ອຍຄ່ຳ ? ຕົ້ນງິ້ວນີ້ ແມ່ນອາ ນາຈັກຂອງພວກເຮົາ ເຈົ້າມີກິດທຸລະອັນໃດຈຶ່ງເວົ້າມາ - ນົກຕົວຜູ້ເວົ້າຂຶ້ນຮ້າຍໆ

- ເຮົາຊື່ວ່າແມວ ຢູ່ກັບຄົນໃນບ້ານພຸ້ນ ພວກເຈົ້າເປັນຊາວປ່າຊາວດົງ ບໍຮູ້ຈັກເຮົາ ທີ່ມາຫາພວກເຈົ້າກໍ່ຍ້ອນວ່າມີວຽກຫນ້ອຍຫນຶ່ງ ! ແມວວາງທ່າສຳຄັນທັງໆທີ່ວ່າມັນເອງກໍ່ຄິດຢ້ານນົກຕອດຕາຢູ່ ແລະທັງຢ້ານວ່າວຽກຂອງຕົນຈະບໍ່ແລວ

- ມີວຽກອັນໃດເອົາໄວ້ເວົ້າມື້ອື່ນ ດຽວນີ້ຄ່ຳແລ້ວແລະພວກເຮົາພວມຊຸກໃຈນຳລູກຢູ່ ພວກເຮົາຈະພາກັນໄປຊອກລູກກ່ອນ

- ເຮົາຮູ້ເລື່ອງເດືອດຮ້ອນຂອງພວກເຈົ້າແລ້ວ ທັງຮູ້ອີກວ່າລູກທັງແປດໂຕຂອງພວກເຈົ້າຢູ່ໃສ

ນົກສອງຜົວເມຍຟ້າວສັ່ງແມວຈົນເຂົ້າໃຈເລື່ອງທັງປວງ ແລະຮັບເອົາຂໍ້ສະເຫນີຂອງແມວ

- ຕົກລົງ ມື້ອື່ນເຊົ້າແຕ່ເດິກພວກເຮົາຈະເອີ້ນປະຊຸມຫມູ່ນົກທັງຫມົດທີ່ຢູ່ໃນປ່ານີ້ ມາຫຍຸມປາຫາແກວໃຫ້ເຈົ້າ ! ນົກກະສາຕົວຜູ້ໃຫ້ຄຳຫມັ້ນສັນຍາ ຈາກນັ້ນສັດທັງສາມຈຶ່ງແຍກຍ້າຍກັນໄປລໍຄອຍໃຫ້ຕາເວັນຂຶ້ນ

ທຸກຢ່າງເປັນໄປຕາມແຜນການຂອງແມວ ດ້ວຍຄວາມຮັກຄວາມຫ່ວງໃນເຊື້ອຊາດອັນດຽວກັນ ຝູງນົກກາຈະນິດຕ່າງໆໃນປ່າໄດ້ມາຕູມໂຮມກັນ ຕາມຄຳຮຽກເອີ້ນຂອງນົກກະສາສອງຜົວເມຍ ບໍລິເວນປ່າແຄມຫນອງມືອມືດໄປດ້ວຍຫມູ່ນົກ ອຶກອືວັນນອງໄປດ້ວຍສຽງຮ້ອງຖາມຂ່າວຄາວກັນຂອງພວກມັນ

ພໍຮຸ່ງແຈ້ງ ຫມູ່ນົກກໍ່ຈັດແບ່ງກັນເປັນຫມວດເປັນຫມູ່ ທຳອິດນົກຫມູ່ຫນຶ່ງ ບິນເຊຶ່ນເທິງຫນາຫນອງຂີ້ຍອດຢ້າຍອ່ອຍປາແລ້ວຫາຍລັບຕາໄປ ເຮັດໃຫ້ຫມູ່ປາຕາຍໃຈແນມເຫັນອາຫານອຸດົມສົມບູນຕົກມາຫາ ຈຶ່ງບ່ອນຂຶ້ນມາສວາບກິນແລ້ວສົ່ງຂ່າວ ຄາວບອກກັນຕໍ່ໆໄປ ພວກຫມູ່ນົກປະເພດນົກເຕັນແລະແຫລວທີ່ຈອບຢູ່ແຄມປ່າ ໃກ້ໆຫນອງໄດ້ໂອກາດດີກໍ່ບິນຈວາດອອກມາແຊວລົງຫຍຸມເອົາປາຄໍ່ປາໂດ ແລະປາທຸກຊະນິດ

ເຊິ່ງໂປໂລຂຶ້ນມາສວາຍຂີ້ນົກນັ້ນຢ່າງວ່ອງໄວພໍປານສາຍຟ້າແມບ ສະພາບການອັນນີ້ເກີດຂຶ້ນຊ້ຳແລ້ວຊ້ຳອີກຈົນເວລາລ່ວງໄປຮອດບ່າຍຄ້ອຍ ການສືບຄວາມຫາແກ້ວວິເສດນຳປາດຳເນີນໄປຢ່າງເຄັ່ງຮ້ອນ ມັນເປັນການແລກປ່ຽນຊີວິດລະຫວ່າງສັດ ຕໍ່ສັດ ໃນທີ່ສຸດປາໂດໃຫຍ່ໂຕສວາບອົມແກ້ວກໍ່ຖືກຫຍຸມຂຶ້ນມາ ເມື່ອເຫັນຊາດເຊື້ອວົງວານນອນຕາຍໃຈແວບໆ ລໍຖ້າມັດຈຸລາດຈະລາກເອົາຊີວິດໄປມັນຈຶ່ງຍອມຄາຍແກ້ວວິເສດຄືນໃຫ້ນົກ ຈາກນັ້ນພວກປາອື່ນຈຶ່ງຖືກໂຍນລົງນ້ຳກັບຄືນສູ່ຊີວິດອັນຊຸ່ມເຢັນໃນວັງນ້ຳເລິກສືບຕໍ່ມາ ນັບແຕ່ວັນນັ້ນເປັນຕົ້ນມາ ພວກປາທັງຫລາຍຈຶ່ງລະມັດລະວັງບໍ່ເຂົ້າໃກ້ນົກທຸກຊະນິດ

ສ່ວນນົກກະສາສອງຜົວເມັຍໄດ້ແກ້ວແລ້ວ ກໍ່ເອົາໄປສົ່ງແມວ ແມວກໍ່ຈຶ່ງ - ຄາບລູກນົກອອກມາສົ່ງເທື່ອລະໂຕຈົນຄົບຈຳນວນຄືດັ່ງສັນຍາກັນໄວ້ ນັບແຕ່ນັ້ນມາ- ນົກຈຶ່ງຢ້ານແມວມາກິນລູກນ້ອຍຂອງຕົນ ມັກຫລົບຫລີກແມວຢູ່ເປັນນິດແລະໄປລີ້ເຮັດຮັງຢູ່ເທິງຕົ້ນໄມ້ຢູ່ໃນປ່າໄກບ້ານຄົນ

ແມວຄາບແກ້ວແລ່ນມຸ້ງຫນ້າເມືອເຮືອນນາຍ ເພາະບັດນີ້ເປັນເວລາມືດຄ່ຳກໍ່ຫຍັບໃກ້ເຂົ້າມາແລ້ວ ແຕ່ຫມາດັ່ງດີໄດ້ສືບກິ່ນຕາມຮອຍມາ ເມື່ອເຫັນແມວ ໄດ້ແກ້ວມາຕາມຈຸດປະສົງ ຫມາຈຶ່ງອິດສາຢ້ານບໍ່ໄດ້ຢູ່ເຮືອນນຳຄົນຕໍ່ໄປ ຈຶ່ງໄລ່ຄຸບແມວທັງຮ້ອງທັງວອນ ແຕ່ແມວຫລາບຈື່ແລະເບື່ອຫນ່າຍການກະທຳຕ່າງໆທີ່ຜ່ານມາຂອງຫມາຫລາຍແລ້ວ ມັນຈຶ່ງບໍ່ຍອມປ່ອຍແກ້ວໃຫ້ຫມາ ຫາກໄດ້ແຕ່ຕົ້ວຫມາ ແລ່ນລີ້ຫລົບຫລີກຫມາ ຈົນມາຮອດເຮືອນນາຍ

- ໂອ້... ມາແລ້ວຫວ່ະ ! ແມວນ້ອຍຂອງພໍ່ ເຈົ້າເກັ່ງແທ້ ! ພໍ່ນາພວມກິນເຂົ້າເຫັນແມວຄາບແກ້ວມາວາງໄວ້ຕໍ່ຫນ້າຈຶ່ງດີໃຈຫລາຍ ອູ້ມເອົາແມວນ້ອຍໄວ້ໃນວົງແຂນເຮັດໃຫ້ຫມາເຊິ່ງໂດດຂຶ້ນເຮືອນມາທັງຮ້ອງເຫົ່າວົ້ງໆ ແຕ່ກໍ່ຕ້ອງຢຸດເຫົ່າທັນທີ

- ສ່ວນມຶງນັ້ນດີແຕ່ເຫົ່າມີສຽງດັງລ້າງໆ ! ພໍ່ນາຫັນມາຊີ້ຫນ້າຫມາ ແລ້ວປະກາສິດຕໍ່ວ່າ :

- ນັບແຕ່ນີ້ເປັນຕົ້ນໄປ ແມວຈິ່ງຂຶ້ນມາຢູ່ເທິງເຮືອນນຳພໍ່ ກິນເຂົ້ານຳຄົນ ສ່ວນຫມາ ມຶງຈົ່ງນອນເຝົ້າຢູ່ຕີນຂັ້ນໄດຫັ້ນ ຍາມໃດຄົນກິນເຂົ້າແລ້ວມຶງຈຶ່ງຈະໄດ້- ກິນດູກກິນເຂົ້າເຫລືອຈາກຄົນ ຈື່ໄວ້ !

ນີ້ແລ້ວຄຳປະກາສິດຂອງຄົນ ເຊິ່ງຍັງຄົງຄວາມສັກສິດມາຮອດປະຈຸບັນ ແມວໄດ້ຢູ່ໃກ້ຊິດກັບຄົນເທິງເຮືອນ ເວລາຫິວມາຮ້ອງແມວງຄົນກໍ່ຫາເຂົ້າຫາປາໃຫ້ກິນ ບາງເທື່ອກໍ່ໄດ້ກິນພ້ອມໆຄົນ ສ່ວນໝານັ້ນໄດ້ຢູ່ກ້ອງຕະລ່າງ ແລະອາຫານກໍ່ລໍຖ້າໃຫ້ຄົນກິນອີ່ມກ່ອນ ທັງນີ້ຍ້ອນວ່າໝາໄປເອົາແກ້ວວິເສດມາສົ່ງຄົນບໍ່ໄດ້ດີກັບແມວນັ້ນເອງ ແລະ ໝາກໍ່ຍັງມີຄວາມອາຄາດຕໍ່ແມວທີ່ລືມການປະກອບສ່ວນຂອງຕົນ ເຫັນໜ້າຍາມໃດຈຶ່ງຕໍ່ວ່າຕໍ່ຂານ ແລະແມວກໍ່ມັກຈະເປັນຝ່າຍຖອຍໜີສະເໝີ







ປາງກ່ອນປາງພໍ່ເຖົ້າຫມ່ອນຍັງບໍ່ຄານ ປາງພາລານຍັງສູງທີ່ຕົ້ນເຂົ້າກາ ດິນກັບຟ້າຍັງຢັ້ມເຖິງ ຄາວນັ້ນຢູ່ປ່າຄົງວົງກິດ ເຂດເມືອງໄຕເມືອງຕັງ ຍັງມີຍ່າອ່ອນເປັນເຈົ້າມາໄດ້ນານປີແລ້ວ ຍ່າອ່ອນອາໄສຢູ່ດ້ວຍການຈັບສັດສາວາສິ່ງແລະຜູ້ຄົນທີ່ເຂົ້າ ມາໃນຄົງນີ້ກິນເປັນອາຫານ.

ຕໍ່ມາມື້ຫນຶ່ງ ໄດ້ມີສອງເອື້ອຍນ້ອງກໍາພອຍໄປຫາກິນດັ້ນດົງເດີນປ່າ ໄປຕາມໄປເລີຍເຖິງຄົງຍ່າອ່ອນ ພໍແຕ່ເຂົ້າເຖິງແຄມຄົງຍ່າອ່ອນກໍເຮັດໂພມໂອມເພມເວນມາໃສ່ພ້ອມທັງຫົວແລະເວົ້າວ່າ: ເຣ ໆ ໆ ແມ່ນໃຜບອກພວກສູ່ມາ ລ່ວງລ້ຳຖິ່ນປ່າເມືອງຄົງຂອງກູ ເຣ ໆ ໆ ! ຢູ່ຕາມຢູ່ຊົ້ນແລ່ນມາຫາ ປາແລ່ນມາສູ່ຢູ່ຕາມຢູ່ບຸນປາກຫາກມີ ຂອງກິນດີແມ່ນສອງເອື້ອຍນ້ອງເຣ ໆ ໆ ໆ ກູຊິຫັກແຄ່ງຫັກຂາ-ພວກສູ່ໃສ່ຊຸມເຫລັກຊຸມທອງໄວ້ດອງເຫລົ້າດື່ມຄາບເຊົ້າເພື່ອມີແຮງຍໍແຄ່ງຂາ ໄປຊອກຫາຊົ້ນເນື້ອມາກູ້ນເກືອລູກເຕົ້າຂອງກູ ເຣ ເຣ ເຣ !

ຜູ້ເປັນເອື້ອຍຕັ້ງໃຈພ້ອມທັງກອດເອົານ້ອງສາວໄວ້ແລ້ວຈຶ່ງອ້ອນວອນ ນຳຍ່າອ່ອນວ່າ: ພວກຂອຍແມ່ນລູກກໍາພອຍ ແຕ່ລະວັນຕ້ອງໄດ້ດັ້ນດອນຊອນປ່າ ເພື່ອຊອກຫາຫົວມັນຫົວກອຍມາກິນຕາງເຂົ້າ ຍ່າອ່ອນຜູ້ເປັນເຈົ້າຄົງວົງກິດຢາກກິນຊີ້ນໆ

ກໍ່ແລ່ນມາຫາ ຢາກກິນປາງກໍ່ແລ່ນເຕົ້າ ເຂົ້າຕົນເລົ້າຕະຫລອດປີຂໍຄວາມເມດຕາ ປານີໂຜດຊີວິດອິນຊີໃຫ້ພູ້ຂ້າແດ່ຖ້ອນ

ຍ່າວ່ອນເມື່ອຟັງຄຳເວົ້ານັ້ນແລ້ວກໍເຮັດຕາງຕິຊິງຢູ່ແລະຄິດວ່າ: ບ໊ະ ກິນແຕ່ສອງເອື້ອຍນ້ອງນັ້ນນີ້ອີ່ມກູມແຕ່ມົດຮວ ວາງວິທີໄປຈັບເອົາຄົນໝົດເມືອງ ມາກິນຊິບໍ່ດີກວ່າຫວະ ! ພໍຄິດອອກແລ້ວກໍ່ມີຊຸບາຍວ່າ: ເອີ! ຍ່າບໍ່ຮູ້ວ່າພວກເຈົ້າ - ແມ່ນຄົນກ່ຳພອຍ ຍ່າຮູ້ແນວນັ້ນແລ້ວກໍເກີດຄວາມສົງສານພວກຫລານແທ້ງ ມັນທັງເວົ້າທັງເຊັດນ້ຳຕາສະແດງຄວາມອີ່ດູສົງສານສອງເອື້ອຍນ້ອງ ຍ່າບໍ່ເຮັດຫຍັງໃຫ້ພວກຫລານດອກ ພວກຫລານຄືຈະຫິວເຂົ້າຫລາຍແມ່ນບໍ່ ? ນີ້ຍ່າບໍ່ມີຊຸ້ມມີປາໃຫ້-ພວກຫລານກິນ ມີແຕ່ອ້ອຍສຸມຫນຶ່ງ ເວົ້າແລ້ວຍ່າວ່ອນກໍຍ່າງໄປຫັກເອົາອ້ອຍມາຍື່ນໃຫ້ສອງເອື້ອຍນ້ອງຜູ້ລະລຳ ແລ້ວເວົ້າວ່າ: ໃຫ້ພວກຫລານກັບເມືອເຮືອນສາເດີ! ເອົາອ້ອຍນີ້ກິນເພື່ອມີແຮງຍ່າງ ແລ້ວກໍສັ່ງຕື່ມ:

ເມື່ອຫລານຍ່າງກັບບ້ານ ເຫັນທາງປີກໃຫ້ເຈົ້າໝາຍ
ຫຍ້ຳຂີ້ອ້ອຍຄາຍປະ ຢ່ຳທາງເປັນຮອຍໄວ້
ຍາມຫລານຈົ່ມຫລົງເຈັບໄຂ້ ຍ່າຈະໄປຢາມແວ່
ມີຫຍັງແດ່ຢາກໄດ້ ຍາມນັ້ນຫາກຊິເອົາເມືອຕ້ອນເດີ

ຈາກນັ້ນ ສອງເອື້ອຍນ້ອງກໍກັບເມືອບ້ານແລະໄດ້ປະຕິບັດ ຕາມຄຳທີ່ຍ່າວ່ອນບອກ

ນັບແຕ່ນັ້ນມາຍ່າວ່ອນໄດ້ອອກຈາກຖ້ຳ ໂດຍນຳໄປ ຕາມຂີ້ອ້ອຍທີ່ສອງເອື້ອຍນ້ອງຄາຍຖີ້ມຢາຍຕາມທາງ ພໍ່ນຳເມືອກໍໄປເຖິງເມືອງໄຕເມືອງຕັງນີ້ແລ ຍ່າວ່ອນທ່ຽວຫາອາລະວາດຈັບຄົນເມືອງນັ້ນກິນທັງດິບທັງແດງ ຄົນວ່າກິນອີ່ມແລ້ວກໍ່ຫັກແຄ່ງ ຫັກຂາໃສ່ກວຍໄດ້ຫມື່ນເປ້ ເທໃສ່ໄຫຕົ້ນພັນຫນ່ວຍ ທາງປາກຫຍ້ຳບ່ອຍໆກິນພາບ - ຊາວພາບຮ້ອຍ ບໍ່ຈັກໃຫຍ່ຈັກນ້ອຍຄືນນີ້ບໍ່ເຊົາ ຈົນວ່າຄົນເມືອງນັ້ນເຂີນຫ່າງ ບາງເບົາ ເມືອງໄຕເມືອງຕັງເຫງົາງຽບງອຍເຢັນຈອຍ ຄອຍແຕ່ຍາມໂມງນີ້ຄວາມຕາຍຊິມາຮອດ ຊີວານຸດມອດມ້ວຍເມືອງກໍຮ້າງເປົ່າແປນ

ຄາວນັ້ນ ຍັງເຫລືອແຕ່ສອງເອື້ອຍນ້ອງກ່ຳພອຍວ່າຈະເອົາຕົວຫລົບ ໜີຈາກເຮືອນ ຍ່າວ່ອນກໍແລ່ນໂຄ່ງໂຢ່ງມາໃສ່ ຜູ້ເປັນເອື້ອຍຮີບດຶງຂັ້ນໄດຂຶ້ນມາເທິງ

ເຮືອນ ຍ່າວ່ອນມາຮອດກໍ່ຮ້ອງຖາມວ່າ: ຫລານເຮີຍ ຍັງຢູ່ດີມີແຮງບໍ ? ຍ່າມາຢາມຫລານ ໃຫ້ຢ່ອນຂັ້ນໄດລົງເອົາແດ່ ຜູ້ເປັນນ້ອງຕອບວ່າ: ເຮືອນນີ້ບໍ່ມີຂັ້ນໄດ ຖ້າຢາກຂຶ້ນໃຫ້ເອົາຫາງກົ້ນແຍ່ຂຶ້ນມາກ່ອນຕາມຮູແຄມເຕົາໄຟ ດັ່ງນັ້ນຍ່າວ່ອນ ຈຶ່ງປ່ອນກົ້ນຂຶ້ນມາ ສອງເອື້ອຍນ້ອງຮີບເອົາຫມາກເຜັດ ດົ້ນຟືນ ຖ່ານໄຟ ພ້າມີດສຽມ ຂວານ ຖູ້ມລົງໃສ່ຮູກົ້ນຂອງຍ່າວ່ອນ ບໍ່ນານຍ່າວ່ອນກໍ່ຮ້ອງໂອຍວາຍຂຶ້ນ: ໂອຍ ! ເຈັບທ້ອງ ຕາຍແລວ ຊ່ວຍແດ່ ໆ ໆ ໆ ! ຜູ້ເປັນນ້ອງສາວບອກວ່າ: ຄັນເຈັບທ້ອງໃຫ້ໄປຖ່າຍຢູ່ປ່າຫລັງຄິງສົມນ້ຳປີ່ນຮູປູ່ພຸ່ມ ຍ່າວ່ອນກໍ່ແລ່ນໄປຫາທີ່ນັ້ນ ຈາກນັ້ນສອງເອື້ອຍນ້ອງຮີບພາກັນລົງຈາກເຮືອນແລ່ນຫນີໄປຫາທີ່ລີ້ຊ່ອນ ພໍ່ແຕ່ອອກໄປຫວິດແຄມບານ ຍ່າວ່ອນກໍ່ໄປຖ່າຍກັບມາແລວ ສອງເອື້ອຍນ້ອງຈຶ່ງຮີບພາກັນຂຶ້ນລີ້ຢູ່ປາຍຕົ້ນຫມາກຫູມ ຝ່າຍຍ່າວ່ອນຄັນວ່າຊອກສອງເອື້ອຍນ້ອງຢູ່ເຮືອນນັ້ນບໍ່ເຫັນແລວ ກໍ່ດົມກິ່ນແລະນຳຮອຍຕີນໄປ ສຸດທ້າຍກໍ່ໄປເຖິງຕົ້ນຫມາກຫູມທີ່ສອງເອື້ອຍນ້ອງຂຶ້ນລີ້ຢູ່ນັ້ນ ຍ່າວ່ອນເອີ້ນໃສ່ວ່າ: ລູກເຮີຍຫລານເຮີຍ ຢ່ອນຂັ້ນໄດລົງເອົາຍ່າແດ່ ຜູ້ເປັນນ້ອງຕອບວ່າ: ບໍ່ມີຂັ້ນໄດ ຍ່າວ່ອນສໍ່ສືນວ່າ: ຊັ້ນພວກຫລານເຮັດແນວໃດຂຶ້ນ? ຜູ້ເປັນເອື້ອຍຕອບ: ພວກຂ້ອຍເອົາຫາງກົ້ນຂຶ້ນກ່ອນ ຍ່າວ່ອນກໍ່ປະຕິບັດຕາມ ເວລາຍ່າວ່ອນເອົາຫາງກົ້ນຈັດຂຶ້ນນຳຕົ້ນໄມ້ ກົ້ນຂອງມັນເປັນພຶງວະພຶງວະ ເຫັນແນວນັ້ນສອງເອື້ອຍນ້ອງກໍ່ຫັກເອົາງ່າໄມ້ ຫມາກຫູມ ຮັງມີດສົ້ນ ໂຍນໂພະໃສ່ຈົ້ນເຕັນ ບິດຫນຶ່ງ ຍ່າວ່ອນກໍ່ຄາງຂຶ້ນ: ໂອຍ ! ເຈັບທ້ອງ ໆ ໆ ໆ ຜູ້ເປັນເອື້ອຍບອກວ່າ : ຖ້າເຈັບທ້ອງໃຫ້ໄປຖ່າຍຢູ່ປ່າຫລັງປ່າຫລອຍງອຍປ່າຜານໍ້ພຸ່ມ ! ເມື່ອຍ່າວ່ອນອອກໄປຖ່າຍສອງເອື້ອຍນ້ອງຮີບລົງຈາກຕົ້ນໄມ້ນັ້ນໄປຂຶ້ນຕົ້ນອື່ນທີ່ມີຫມາກຫູມ ດີກຫນາຍ່າວ່ອນກັບມາອີກມັນກໍ່ຖາມແບບເກົ່າ ສອງເອື້ອຍນ້ອງກໍເວົ້າແບບເກົ່າເຮັດ ແບບເກົ່າ ຫລາຍມື້ຕໍ່ຫລາຍວັນຫມາກຫູມກໍ່ຮ່ວຍລົງຈັກໄຊ ບັດນັ້ນຜູ້ເປັນນ້ອງແຫງນ ຂຶ້ນຟ້າເຫັນພໍ່ແມ່ກຳລັງລາງຖ້ອຍບ່ວງຢູ່ ຈຶ່ງຮ້ອງໃຫ້ເພິ່ນຢ່ອນເຊືອກລົງມາເອົາ ຮ້ອງເທື່ອທຳອິດພໍ່ແມ່ຕອບວ່າ: ຍັງກຽມພ້າມີດຈະໄປລ່າວໄຮ່(ຖາງໄຮ່) ຮ້ອງຂຶ້ນເທື່ອທີສອງຕອບວ່າ: ຍັງລ່າວໄຮ່ ເທື່ອທີສາມວ່າ: ກຳລັງຈູດໄຮ່ ເທື່ອທີສີ່ທີຫ້າ ຕອບວ່າ: ກຳລັງປູກຝ້າຍ ຜູ້ເປັນເອື້ອຍຈຶ່ງຮ້ອງຂຶ້ນ ຢ່ອນເຊືອກມາໄວໄວແດ່ ຍ່າວ່ອນຈະຈີກພວກລູກກິນແລວ ເທື່ອນີ້ພໍ່ແມ່ຕອບວ່າ: ປູກຝ້າຍໄດຝ້າຍພວມເຂັນເປັນເສັ້ນແລວຟັ້ນເປັນສາຍເຊືອກກ່ອນຈະຢ່ອນລົງມາເອົາ ດົນເຕີບຈຶ່ງເຫັນເຊືອກຢ່ອນ ລົງ

ນາ ຜູ້ເປັນເອື້ອຍ ໃຫ້ນ້ອງສາວຂຶ້ນກ່ອນ ເທື່ອລຸນມາຜູ້ເປັນເອື້ອຍຈຶ່ງຂຶ້ນ ເທື່ອນີ້ພໍແຕ່ເຫັນເຊືອກຢ່ອນລົງມາຍ່າວ່ອນປີນປັບຮ່ອຍຕົ້ນໄມ້ຂຶ້ນມາ ນາງນັ້ນກໍ່ຣີບໂດດຈັບສາຍເຊືອກແລ້ວສັ່ງໃຫ້ດຶງຂຶ້ນໄວໆ ຝ່າຍຍ່າວ່ອນກໍ່ໂດດຈັບແຕ່ບໍ່ທັນ ພຽງແຕ່ເລັບມືຂອງມັນທັນຫຍຸມພື້ນ ຕີນທັງສອງເບື້ອງຂອງນາງນັ້ນ

ຍ່າວ່ອນເຫັນແນວນີ້ ກໍ່ວາງເລ່ກິນເຫລືອມຕີນເປັນຄີນແລ້ວໄຫ້ເຫລີ ໄຫ້ເຫລີດ ຮ້ອງໃຫ້ພໍ່ແມ່ຂອງສອງເອື້ອຍນ້ອງຢ່ອນເຊືອກລົງໃຫ້ແດ່ ຜູ້ເປັນພໍ່ຄິດວ່າ–ແມ່ນຄືນກໍ່ຢ່ອນເຊືອກລົງມາ ສອງເອື້ອຍນ້ອງຮ້ອງຫ້າມພໍ່ວ່າບໍ່ໃຫ້ຢ່ອນລົງຄືນເມືອງໄຕເມືອງຕັ້ງຕາຍຫມົດ ຍັງແຕ່ຍ່າວ່ອນເທົ່ານັ້ນ ຄັນແມ່ນຍ່າວ່ອນຂຶ້ນມາມັນຊິມາກິນຄົນຢູ່ເມືອງຟ້າພີ້ຫມົດ ຜູ້ເປັນພໍ່ຍັງດື້ດຶງເຊືອກຂຶ້ນມາເສີຍໆ ເຫັນດັ່ງນັ້ນຜູ້ເປັນເອື້ອຍຈຶ່ງຈັບເອົາດາບມາຕັດເຊືອກໃຫ້ຂາດ

ຍ່າວ່ອນຕົກຈາກຊັ້ນຟ້າລົງມາຖືກຜາລົງຜາລານ ເຮັດໃຫ້ຈອມຜາລານພັງທະລາຍສະເດັນຟົ້ງ ບ່ອນຫລຸບໂກນເປັນຫລົ້າກາຍເປັນວັງຍ່າວ່ອນ ໄມ້ຈັນແດງຈັນໄດໄມ້ຍົມຂາວຕາວຕົ້ນກໍ່ຕາຍກຽງບໍ່ຫລໍ ຕົນໂຕຂອງຍ່າວ່ອນແຕກມູນມິນຊີ້ນເນື້ອເລືອດຢາງ ກະດູກກະດຸ້ງອຊະຟົ້ງໄປທົ່ວທິບແລ້ວກາຍເກີດເປັນຍຸງ ຮີ້ນແມງເຫຼືອກຕໍ່ແຕນ ຂີ້ເຂັບ ງູງຽວແຂວຄົນ... ແລະກໍ່ຍັງນຳຂົບ ກັດຄົນມາເຖິງທຸກວັນນີ້ ພື້ນຕີນບ່ອນທີ່ຖືກຍ່າວ່ອນຫຍຸມເອົານັ້ນກໍ່ກາຍເປັນຫລົ້ງຢູ່ທັງສອງເບື້ອງຈີນເທົ້າ ທຸກວັນນີ້

ສົມແສງ ເກສາວິລະ





# ກະຕ່າຍລອກພະຍານາກ

ຄັ້ງຫນຶ່ງ ພະຍານາກ (ພະຍາສັດນ້ຳ)ລົ້ມເຈັບ,ປົວຢາຫຍັງກໍ່ບໍ່ດີ ມີແຕ່ຕັບກະຕ່າຍທໍ່ນັ້ນ ຈຶ່ງຈະປົວດີ ດັ່ງນັ້ນ ພະຍາຈຶ່ງປ່າວໃຫ້ບັນດາສັດໃນນ້ຳທຸກໂຕ ວ່າ "ໃຜສາມາດໄປຊອກເອົາຕັບກະຕ່າຍມາໄດ້ ຈະໃຫ້ເປັນພະຍານ້ຳແທນ" ແຕ່ກໍ່ບໍ່ມີໃຜກ້າສະຫມັກໃຈໄປເອົາ ນອກຈາກເຕົ່າໂຕຫນຶ່ງ ທີ່ເປັນສ່ຽວກັບກະຕ່າຍ ເຄີຍໄດ້ພໍ້ໄດ້ເຫັນ ແລະ ທ່ຽວຫຼິ້ນກັບກະຕ່າຍເລື້ອຍໆ ເມື່ອຮູ້ວ່າ ຖ້າໄດ້ຕັບກະຕ່າຍມາໃຫ້ພະຍານາກ ຕົນຈະໄດ້ກາຍເປັນພະຍາ ກໍ່ຟ້າວເວົ້າຂຶ້ນວ່າ ຕົນຈະເປັນຜູ້ໄປນຳ ເອົາຕັບກະຕ່າຍມາໃຫ້ພະຍານາກຈົນໄດ້ ເວົ້າແລ້ວ ເຕົ່າກໍ່ລອຍຟູຂຶ້ນເທິງຫນ້າ ນ້ຳແຄມຝັ່ງ ບ່ອນທີ່ກະຕ່າຍເຄີຍມາກິນຫຍ້າ ລອຍຂຶ້ນຮອດແຄມຝັ່ງ ພໍມາບເຫັນກະຕ່າຍເຕົ່າກໍ່ຮ້ອງໃສ່ໂລດວ່າ :

- ນີ້ສ່ຽວ ໂຕຢາກເຫັນພະຍານາກບໍ່ ?
- ໂອ້ ຢາກເຫັນແທ້ ບໍ່ເຄີຍໄດ້ເຫັນຈັກເທື່ອ ຈັກວ່າເປັນຕົນເປັນໂຕຈັ່ງໃດກໍ່ຮອດບໍ່ຮູ້ຈ້ຳ
- ໄປເບາະເຮົາຊິພາໄປ ?
- ໄປ, ແຕ່ຈະໄປດ້ວຍວິທີໃດ ?

- ໃຫ້ໂຕນັ່ງເທິງຂອງເຮົາ ແລ້ວຫຼັບຕາໃຫ້ແຈບ ເຮົາຊິພາມູດນ້ຳລົງ ໄປຫາພະຍານາກ

ສອງສ່ຽວຕົກລົງກັນແລ້ວກໍ່ມູດລົງໄປໃຕ້ພື້ນນ້ຳ ເມື່ອໄປຮອດພື້ນນ້ຳ ບ່ອນພະຍານາກຢູ່. ເຕົ່າບອກໃຫ້ກະຕ່າຍນັ່ງຖ້າຢູ່ນອກ ສ່ວນຕົນຈະໄປຂ່າວໃຫ້ພະຍານາກຊາບເສຍກ່ອນ ກະຕ່າຍກໍ່ເຫັນດີ ເຕົ່າເຂົ້າໄປໃນຫໍຜາສາດແລ້ວແຈ້ງໃຫ້ພະຍານາກວ່າ ເອົາກະຕ່າຍມາໄດ້ແລ້ວ ພະຍານາກດີໃຈ ແລະ ສັ່ງໃຫ້ກະຕ່າຍ ເຂົ້າໄປຫາຕົນທັນທີ. ເມື່ອກະຕ່າຍເຂົ້າໄປຮອດບ່ອນພະຍານອນປ່ວຍ, ພະຍານາກ ກໍ່ກ່າວຂຶ້ນໂລດວ່າ :

- ດີໃຈຫຼາຍທີ່ເຈົ້າມາຮອດທັນເວລາ ດຽວນີ້ຂ້ອຍຕ້ອງການຕັບຂອງເຈົ້າທີ່ສຸດ ເພື່ອຈະກິນໃຫ້ຫາຍປ່ວຍ

ເມື່ອໄດ້ຍິນແນວນັ້ນ ກະຕ່າຍເລີຍຕອບໄປດ້ວຍຄວາມສຽມແຫຼມວ່າ :

- ດູລາ ພະລາຊາຜູ້ຊົງອຳນາດເອີຍ ຫນ້າເສຍດາຍທີ່ຂ້າພະບາດ ບໍ່ຮູ້ຈັກກ່ອນວ່າ ທ່ານຕ້ອງການກິນຕັບຂ້າພະບາດ ດັ່ງນັ້ນ ຈຶ່ງບໍ່ໄດ້ເອົາຕັບມານຳຊ້ຳ ຕັບມັນແມ່ນຂອງດີ ບໍ່ຈຳເປັນອື່ຫຼື ຂ້າພະບາດບໍ່ສູ້ເອົາມັນໄປນຳຈັກເທື່ອ ມີແຕ່ ເອົາມຽນໄວ້ດີໆ ຢູ່ເຮືອນພຸ້ນແລ້ວ

ໄດ້ຍິນແນວນັ້ນ ພະຍານາກຮີບບອກໃຫ້ເຕົ່າໄປສົ່ງກະຕ່າຍຂຶ້ນເທິງບົກເພື່ອຈະໃຫ້ກະຕ່າຍໄປເອົາຕັບມາໃຫ້ຕົນໄວໆ ສ່ວນເຕົ່າກໍ່ຟ້າວປະຕິບັດ ຕາມຄຳສັ່ງຂອງພະຍາ ເມື່ອເຕົ່າສົ່ງກະຕ່າຍຂຶ້ນຮອດບົກ ທັນໃດກະຕ່າຍກໍ່ເຕັ້ນອອກຈາກຂອງເຕົ່າ ແລ້ວທັງແລ່ນໄປໄກ ທັງຮ້ອງມາໃສ່ເຕົ່າວ່າ:

- ເອ ເອ ຈັ່ງແມ່ນມຶງໂງ່ ຕັບກະຢູ່ທ້ອງກູນີ້ແລ້ວໃຜຊິໃຫ້ສູງ່າຍໆ!

ເຕົ່າໄດ້ຍິນ ເຫຼືອໃຈຫຼາຍດົ້ນຊັກຈົນຕາຍ.

ຜູ້ເລົ່າ - ພໍ່ປ່ຽນ

ຜູ້ຂຽນ - ດາລັວັນ ສິດພະໄຊ






ພໍ່ເຖົ້າຂອງຂ້ອຍເຊິ່ງມີອາຍຸໄດ້ ໗໐ ກວ່າປີແລ້ວນັ້ນ ມັກເລົ່ານິທານເກົ່າແກ່ໃຫ້ລູກຫຼານຟັງເປັນທີ່ສຸດ ມື້ໜຶ່ງພວກຫລານໆຈັບກົບແກ້ໄດ້ໂຕໜຶ່ງພໍ່ເຖົ້າຈຶ່ງຖາມວ່າ " ຜູ້ໃດຮູ້ບໍ່ວ່າເປັນຫຍັງກົບແກ້ຈຶ່ງຕາໂປໂຫລາຍ ? "

ພວກເດັກນ້ອຍພາກັນແນມເບິ່ງກົບແກ້ ແລະພໍ່ເຖົ້າສັບກັນໄປມາດ້ວຍຄວາມສົງໄສ ບາງຄົນພະຍາຍາມຫາຄຳຕອບ ແຕ່ພໍ່ເຖົ້າແກວ່ງຫົວແລ້ວເວົ້າວ່າ :

ພໍ່ເຖົ້າເຄີຍໄດ້ຍິນ... ພໍ່ເຖົ້າຂອງພໍ່ເຖົ້າເລົ່າວ່າມັນມີສາ ເຫດ......
ພວກລູກຫລານເຂົ້າໃຈແລ້ວວ່າມັນແມ່ນບັ້ນເລີ່ມຕົ້ນການເລົ່ານິທານຂອງພໍ່ເຖົ້າ ຈຶ່ງພາກັນຫຍັບເຂົ້າມານັ່ງອ້ອມ ທັງມິດງຽບລົງ

ແຕ່ປາງກ່ອນ ດົນແລ້ວລະ ດົນຈົນພໍ່ເຖົ້າຂອງພໍ່ເຖົ້າເອງກໍ່ບໍ່ຮູ້ວ່າ ມັນດົນປານໃດ ແຕ່ເພິ່ນເລົ່າວ່າໃນສະໄໝນັ້ນ... ເມືອງສະຫວັນຊັ້ນຟ້າກັບເມືອງມະນຸດເຮົານັ້ນຫລວໄປມາຫາສູ່ກັນຄືບ້ານອ້າຍເມືອງນ້ອງ ມີຂັ້ນໄດເງິນຂັ້ນໄດຄຳ ກ່າຍຫາກັນ ແລະພະຍາແຖນແຕ່ລະອົງທີ່ຢູ່ເມືອງສະຫວັນທັງເຈັດຊັ້ນ ແຕ່ລະມື້ຕ້ອງປ່ຽນຟຽນກັນລົງມາຈອບເບິ່ງຄວາມສຸກສະບາຍຂອງມະນຸດ ເຫັນອັນໃດບໍ່ຈົບບໍ່ດີ ພະຍາແຖນກໍ່ສັ່ງສອນບອກມະນຸດດັດແປງແກ້ໄຂ ຈົນວ່າທັງເມືອງສະຫວັນ ທັງເມືອງມະ-

ມູດມີສະພາບມ່ວນຊື່ນເບີກບານບໍ່ຕ່າງຫຍັງກັນ ຕໍ່ມາພະຍາອິນໄດ້ສົ່ງສັດຕ່າງໆ ລົງມາເກີດຢູ່ເມືອງມະນຸດຫລາຍຂຶ້ນ ເຮັດໃຫ້ໂລກມີຊີວິດຊີວາຫນ້າຕື່ນເຕັ້ນມີເຫດການຫລາຍອັນເກີດຂຶ້ນ ສ່ວນຢູ່ເມືອງສະຫວັນພຸ້ນເຫດການຍັງຄົງປົກກະຕິດີ ມີແຕ່ຊາວສະຫວັນຢູ່ຮ່ວມກັນຢ່າງສັນຕິ ບໍ່ມີແນວແປກໃຫມ່ເກີດຂຶ້ນ ຈັ່ງຊັ້ນຫລາຍຕໍ່ຫລາຍປີມາຊາວສະຫວັນຈຶ່ງເບື່ອຫນ່າຍສະພາບການເປັນຢູ່ຂອງຕົນ ຮ້ອງຂໍໃຫ້ພະຍາແຖນລົງມາເມືອງມະນຸດຊອກເອົາສິ່ງແປກໃຫມ່ໄປໃຫ້ຊາວສະຫວັນຊົມ ພະຍາແຖນຈຳເປັນໄດ້ປະຕິບັດຕາມຄຳຮ້ອງຂໍຂອງຊາວສະຫວັນຕາມຫລັກການເທວາທິປະໄຕອັນສົມບູນ ພະອົງໄດ້ລົງມາເລາະລຽບເບິ່ງຄວາມຊຸມລະມຸນວຸ່ນວາຍຂອງມະນຸດ ເພື່ອເລືອກສັນເອົາອັນໃດອັນຫນຶ່ງຂຶ້ນເມືອຕອນຊາວສະຫວັນ ພະຍາແຖນເລາະລຽບໄປເຫັນມະນຸດຊຸມແຊວກັນກິນເຫລົ້າແລ້ວຮ້ອງລຳທຳເພງກັນກໍ່ຄຶດວ່າແນວນີ້ຢູ່ສະຫວັນກໍ່ມີຄືກັນບໍ່ຈຳເປັນເອົາໄປ ເຫັນຄົນຜິດຖຽງກັນຮ້າຍຕີກັນລັກຂອງກັນ ເປັນຄວາມຟ້ອງຮ້ອງກັນ ພະຍາແຖນເຫັນວ່າບໍ່ຄວນເອົາໄປເປັນແບບຢ່າງຈຶ່ງຍ່າງຫນີ ເລາະຢູ່ຫມົດນີ້ກໍ່ບໍ່ເຫັນຫຍັງເປັນຕາເອົາແບບເອົາຢ່າງ ພະຍາແຖນຈຶ່ງອອກຈາກບ້ານຈາກເມືອງຜູ້ຄົນເຂົ້າໄປເລາະຕາມແຄມປ່າ ທັນໃດນັ້ນ ພະຍາແຖນກໍ່ໄດ້ຍິນສຽງ ແມງງວງຮ້ອງ ແອັນ ແອ່ນ ໆ ໆ ໆ ໆ ແຕ່ພະຍາແຖນບໍ່ຮູ້ດອກວ່າແມ່ນແມງງວງຮ້ອງທາກຮູ້ສຶກອອນຊອນໃນສຽງນັ້ນຫລາຍຈຶ່ງຄຶດວ່າ " ນີ້ແມ່ນສຽງດົນຕີອັນມ່ວນອອຍອິ່ນ ຟັງແລ້ວສຳບາຍໃຈ ຄວນເອົາຂຶ້ນໄປໃຫ້ຊາວສະຫວັນຟັງ ພວກເຂົາຈຶ່ງຈະມີຈິດໃຈເບີກບານແຈ່ມໃສຂຶ້ນ "

ຄຶດດັ່ງນັ້ນແລ້ວ ພະຍາແຖນກໍ່ຫຍັບເຂົ້າໄປໃກ້ຕົ້ນໄມ້ໃຫຍ່ບ່ອນເພິ່ນຄຶດວ່າຜູ້ເປົ່າສຽງມ່ວນໆອັນນີ້ອອກມາຄົງດຳລົງຊີວິດຢູ່ຫັ້ນ ແຕ່ແມງງວງຮ້ອງແລ້ວຊ້ຳ ບິນເຈີດໄປທາງອື່ນ ຈັ່ງຊັ້ນເມື່ອພະຍາແຖນເຂົ້າໄປຮອດໂກນໄມ້ຈຶ່ງເຫັນແຕ່ສັດ ເລືອຄານຫົວໂປ ມີເກັດສີຫມົ່ນໂຕຫນຶ່ງນອນມີນຕາເນົ້າໆຢູ່ໃນຫັ້ນ

- ສະບາຍດີ ! ແມ່ນເຈົ້າບໍ່ຮ້ອງແອັນແອ່ນຫວ່າງຫນຶ່ງນີ້ ? ມ່ວນດີເວີຍ! ເຮົາແມ່ນພະຍາແຖນມາແຕ່ເມືອງສະຫວັນ ເຮົາຢາກເອົາເຈົ້າເມືອເມືອງສະຫວັນນຳ ຊິໄປບໍ່ ? ແນ່ນອນລະພະຍາແຖນບໍ່ເວົ້າວ່າຊິເອົາໄປຮ້ອງໃຫ້ເທວະດາຟັງແຕ່ຄຳວ່າຂຶ້ນໄປເມືອງສະຫວັນນັ້ນກໍເຮັດໃຫ້ສັດເລືອຄານມັກທ່ອງທ່ຽວໂຕນີ້ຟ້າວ ຮັບຄວາມພະຍາແຖນວ່າ :

- ໂດຍ ຂ້ານ້ອຍນີ້ແລ້ວຮ້ອງຫວ່າງໜຶ່ງນີ້ !

ພະຍາແຖນຈັບເອົາມັນໃສ່ຖົງຢ່າມວິເສດເຫາະຂຶ້ນເມືອເມືອງສະຫວັນຊັ້ນທີເຈັດໂລດ ພໍໄປຮອດກໍ່ປ່າວປະກາດຕິດປ້າຍໂຄສະນາ ແຕ້ມຮູບສັດປະຫລາດ ຈາກເມືອງມະນຸດໄປຕິດໄວ້ໂຮງມະໂຫລະສົບຫລວງວ່າແມ່ນນັກຮ້ອງຜູ້ມີສຽງມ່ວນອອນ-ຊອນຈຸຕິຈາກເມືອງມະນຸດ ພໍເຖິງວັນເວລານັດຫມາຍເທບພະບຸດເທບທິດາທັງຫຼາຍກໍ່ພາກັນມາຍັງໂຮງມະໂຫລະສົບເພື່ອຟັງສຽງສັດປະຫລາດ ພະຍາແຖນບອກມັນຮ້ອງໃຫ້ຟັງ ມັນກໍໄດ້ແຕ່ອະແຮມ ອະແຮມ ຫມາດຄໍສອງສາມບາດແລ້ວກໍ່ມິດໄປຊື່ໆ ພະຍາແຖນໂມໂຫບອກເຂົາເອົາໄມ້ແສ້ມາໃຫ້ ມັນຢ້ານກໍ່ອະແຮມຂຶ້ນອີກ ພະຍາແຖນເງື້ອແສ້ໃສ່ທັງຮ້າຍວ່າ :

- ຮ້ອງແມ້ ! ຮ້ອງຄືຕອນມຶງຢູ່ເມືອງມະນຸດຫັ້ນນ່າ... ແອ້ນ ແອ່ນ...

- ອະແຮມ... ອະແຮມ.... ມັນພະຍາຍາມເປັ່ງສຽງ ແຕ່ມັນກາຍເປັນສຽງຫມາດຄໍຊື່ໆ

- ໂຢ່ວ ! - ພະຍາແຖນໃຈຮ້າຍເພາະເຮັດໃຫ້ເພິ່ນເສຍຫນ້າ ເສຍຕາ ພວກເທວະດາທັງຫລາຍກໍ່ຮ້ອງໂຮຂຶ້ນວ່າພະຍາແຖນຂີ້ຕົວະ ເມື່ອເຫັນວ່າສັດປະຫລາດໂຕນີ້ຮ້ອງບອອກແທ້ແລ້ວ ພະຍາແຖນກໍ່ຟາດໄມ້ແສ້ໃສ່ຫົວມັນຈົນມັນຕາສອດໂຕລາຍທ່ຳທ່າຍ ແລະຮ້ອງຄາງວ່າ :

- ເຈັບແທ້ ເຈັບແທ້ ໆ ໆ ໆ ໆ ....

ພະຍາແຖນຕີມັນຈົນໂຕລາຍຟົກຊ້ຳຈ້ຳເປັນເມັດແດງດຳລາຍທົ່ວໂຕທາງຕາກໍ່ໂປລົກປົກ ແລ້ວຈຶ່ງໂຍນມັນລົງຈາກສະຫວັນ

- ເອົ້າ ! ມຶງເມື່ອຢູ່ນຳມະນຸດພຸ້ນ ໃຫ້ມຶງຮ້ອງເຈັບແທ້ ເຈັບແທ້ແລະໃຫ້ໂຕມຶງລາຍ ຕາໂປຈັ່ງຊີ້ຕະຫລອດໄປ ມຶງຈຶ່ງຊິຈື່ຈຳໂທດກຳຂອງມຶງວ່າອັນມາຕົວະຊາວສະຫວັນນັ້ນມັນເປັນແນວໃດ

ສັດປະຫລາດຕາໂປໂຕລາຍຕົກລົງມາເທິງພື້ນດິນໂລກມະນຸດ ທັງເຈັບທັງອາຍຈຶ່ງມຸດຫມົ້ນເຂົ້າໄປລີ້ໃນໂກນໄມ້ບ່ອນມືດໆ ລີ້ຢູ່ຫລາຍມື້ແລ້ວຈຶ່ງອອກມາ ມັນພະຍາຍາມປິນຂຶ້ນຂັ້ນໄດເງິນຂັ້ນໄດຄຳເພື່ອຄືນໄປເມືອງສະຫວັນອີກ ແຕ່ປິນຂຶ້ນໄປໄດ້ບໍ່ພໍເທົ່າໃດພວກນາງຟ້ານາງສະຫວັນກໍ່ພາກັນຮ້ອງສົບລະອົບແຕກຕື່ນ ເຮັດໃຫ້-ມັນຮ້ອງເຈັບແທ້ ໆ ໆ ໆ ຂຶ້ນ ພວກຊາວສະຫວັນໄປຟ້ອງພະຍາແຖນ ພະອົງມາ

ເທັນເທດການຈຶ່ງຕັດສິນໃຈໃນບັດນັ້ນວ່າ ຕ້ອງມ້າງຂັ້ນໄດເງິນຂັ້ນໄດຄຳທີ່ກ່າຍຈາກໂລກມະນຸດໄປເມືອງສະຫວັນທັງຫມົດອອກເສຍ ເພື່ອປ້ອງກັນບໍ່ໃຫ້ສັດປະຫຼາດໂຕນີ້ໄຕ່ຂຶ້ນໄປສົ່ງສຽງອັນບໍ່ມ່ວນຫນ້າລັກໄລນີ້ລົບກວນຄວາມສະຫງົບສຸກຂອງເມືອງສະຫວັນ

ເປັນແນວນີ້ແລ້ວ ນັບແຕ່ນັ້ນມາເມືອງມະນຸດກັບເມືອງສະຫວັນ ກໍ່ເລີຍຕັດຂາດຈາກກັນ ບໍ່ສາມາດຫອວໄປມາຫາສູ່ກັນໄດ້ ສ່ວນສັດປະຫຼາດໂຕນີ້ກໍ່ຮູ້ສຶກອັບອາຍຫລາຍຈຶ່ງມັກໄປລີ້ຊ່ອນຢູ່ແຕ່ໃນບ່ອນມືດໆເຊັ່ນ ໃນໂກນໄມ້ ຫລືຫລືບຝາ ກ່ອນຈະຮ້ອງອອກມາແຫງ ມັນອະແຮມຫມາດຄໍສອງສາມບາດແລ້ວຈຶ່ງເປັ່ງສຽງຮ້ອງຟັງຄ້າຍໆຄຳວ່າ ເຈັບແທ້ ໆ ໆ ໆ ... ຕາມພາສາຂອງມັນອອກມາ ສ່ວນມະນຸດເຊື້ອຊາດລາວເມື່ອຟັງສຽງຮ້ອງຂອງມັນແລ້ວຄືວ່າ ກັບແກ ໆ ໆ ໆ ສ່ວນເຊື້ອຊາດອື່ນໆແຖວຢູ່ໃກ້ໄດ້ຍິນເປັນ ແຈັກໂກ້ ໆ ໆ ໆ ຫລືອື່ນໆຄ້າຍໆຄືກັນນີ້ ຈຶ່ງຊື່ແລ້ວພວກຫລານເອີ້ນເລື້ອງສາ ເຫດທີ່ວ່າ ເປັນຫຍັງມັນຈຶ່ງມີຊື່ວ່າກັບແກແລະນີ້ຕາໄປໂຕລາຍ

ຜູ່ເລົ່າ - ສີລາ ວິລະວົງ

ຜູ່ຂຽນ - ດວງເດືອນ ວິລະວົງ

24/VII

ຫ້າມຈຳໜ່າຍ

# ທ້າວໝອນກື

ຜູ້ຂຽນ : ດາລີວັນ

ຜູ້ເລົ່າ : ລຸງນ້ອຍ

ມີຊາຍຄົນໜຶ່ງຂີ້ຄ້ານຫຼາຍ ມີແຕ່ກິນແລ້ວນອນ ນອນແລ້ວນອນອີກ ນອນຫຼາຍທີ່ສຸດ ຕັ້ງແຕ່ນ້ອຍຈົນຮອດໃຫຍ່ເປັນບ່າວ ລາວບໍ່ເຮັດຫຍັງ ບໍ່ໄປໃສຈັກເທື່ອ ມີແຕ່ກິນກັບນອນ ນອນ-ຫຼາຍຈົນໜນອນ ທີ່ລາວໝູນນອນທຸກວັນນັ້ນກື ຍ້ອນແນວນັ້ນ ພໍ່ແມ່ຈຶ່ງຕັ້ງຊື່ໃຫ້ລາວວ່າ "ຫຼ້າໝອນກື"

ເມື່ອໃຫຍ່ເປັນບ່າວ ເຫັນອ້າຍເອື້ອຍຂອງຕົນ ໃຜໆກໍ່ມີເມຍມີຜົວ ເປັນຄອບເປັນຄົວໝົດແລ້ວ ລາວກໍ່ຄິດຢາກມີເມຍ ມີຄອບຄົວເໝືອນກັນກັບ ເຂົາເຈົ້າ

ຢູ່ມາມື້ໜຶ່ງ ທ້າວຈຶ່ງເວົ້າກັບຜູ້ເປັນແມ່ວ່າ

- ແມ່ ອ້າຍເອື້ອຍ ເຂົາພາກັນມີຄອບມີຄົວໝົດທຸກຄົນ ລູກກໍ່ຄິດຢາກມີເມຍເໝືອນກັນນາແມ່

ຜູ່ເປັນແມ່ຍິ້ມຫົວແລ້ວຕອບລູກຊາຍຫຼ້າຂອງຕົນດ້ວຍສຳນຽງໄທດຳ ອັນອ່ອນຫວານວ່າ :

- ລູກແອ້[໑]ໄດ້ເມຍ ກໍໄປໃນບ້ານຊອກລົມສາວເບິ່ງແມ້ ມີເພີມັກກໍ ຈຶ່ງວ່າກັນບໍລູກເອີ້ຍ...

---

໑. ແອ້ໄດ້ເມຍ - ພາສາໄທດຳ = ຢາກໄດ້ເມຍ



ຄໍ່າຂອງມື້ນັ້ນ ຫຼັງຈາກກິນເຂົ້າແລງແລ້ວ ທ້າວຫນອມກື່ວ. ກໍລົງເຮືອນໄປ ຊອກລົມສາວໃນບ້ານ

ຫນອມກື່ວຍ່າງໄປກາຍເຮືອນຫຼັງຫນຶ່ງ ຊຶ່ງກຳລັງມີສຽງຟົດຟື ເວົ້າວ່າ ໂຕ້ຖຽງກັນຜິດປົກກະຕິ ທ້າວຢຸດຢືນຕັ້ງໃຈຟັງເປັນເວລາດົນສົມຄວນ ຫນອມກື່ວພະຍາຍາມຈື່ຈຳເອົາຄຳເວົ້າດັ່ງໆ ຂອງສອງພົວເມຍ ທີ່ພວມເວົ້າໃສ່ກັນຢ່າງຟົດນັ່ນຢູ່ໃນເຮືອນນັ້ນເກືອບທຸກຖ້ອຍທຸກຄວາມ

ນັ້ນແມ່ນພົວຫນຸ່ມເມຍສາວຄູ່ຫນຶ່ງ ທີ່ກຳລັງຜິດຖຽງດ່າກັນຢ່າງຮຸນແຮງ ແຕ່ຍ້ອນບໍ່ຮູ້ເຣື່ອງຫຍັງ ບໍ່ໄປໃສ ບໍ່ຮຽນບໍ່ອ່ານ ບໍ່ເຫັນຫຍັງຈັກເທື່ອ ມີແຕ່ນອນ ດັ່ງນັ້ນ ທ້າວຫນອມກື່ວ ຈຶ່ງບໍ່ຮູ້ຮອດວ່າ: ນັ້ນແມ່ນພົວເມຍຜິດກັນ ສິ່ງໃດດີສິ່ງໃດຊົ່ວ, ແນວໃດຈຶ່ງວ່າຄົນຜິດຖຽງກັນ ແນວໃດຈຶ່ງວ່າຄົນຮັກກັນ ... ທ້າວກໍບໍ່ຮູ້ ໄດ້ຍິນພົວເມຍດ່າກັນ ທ້າວກໍຮອດບໍ່ເຂົ້າໃຈຊ້ຳວ່າ ຄຳເວົ້າທີ່ກ່າວມານັ້ນມີຄວາມຫມາຍຈັ່ງໃດ ກົງກັນຂ້າມຫນອມກື່ວ ຄິດວ່າ ຜູ້ບ່າວກັບຜູ້ສາວ ຕ້ອງເວົ້າລົມ ກັນແນວນັ້ນ ທ້າວຈຶ່ງພະຍາຍາມຈຳເອົາຫຼາຍຄຳເວົ້າ ທີ່ຝ່າຍຊາຍເວົ້າໃຫ້ ຝ່າຍຍິງນັ້ນໃຫ້ໄດ້ດີ ເພື່ອຈະນຳເອົາໄປລົມກັບຜູ້ສາວທີ່ຕົນມັກ

ຫຼັງຈາກຈື່ຈຳເອົາສອງສາມປະໂຫຍກ ທີ່ສອງພົວເມຍນັ້ນເວົ້າໄດ້ຄັກ ແນ່ແລ້ວ ທ້າວຫນອມກື່ວຈຶ່ງຍ່າງໄປຕໍ່ເພື່ອຊອກຫາລົມສາວ

ຄືນມື້ນັ້ນເດືອນແຈ້ງ ບັນຍາກາດໃນບ້ານມີຊີວິດຊີວາ ເບີກບານ ສຳລານຍິ່ງນັກ ມີສຽງຂັບສຽງລຳທາງບ້ານໃຕ້ບ້ານເຫນືອດັງອ່ອນໆມາບໍ່ຂາດສາຍ

ຫນອມກື່ວຍ່າງໄປຮອດເຮືອນຫຼັງຫນຶ່ງ ທີ່ມີຜູ້ສາວກຳລັງນັ່ງເຂັນຝ້າຍຢູ່ຫນ້າບ້ານ ທ້າວເລີຍແວ່ເຂົ້າໄປຫານາງ ສ່ວນຜູ້ສາວເຫັນຜູ້ບ່າວມາເຮືອນຕົນ ກໍຍິ້ມແຍ້ມຕ້ອນຮັບ ພ້ອມທັງເວົ້າເປັນສີອາຍໆ ຄ່ຽມໆ ຕາມແບບສາວໄທດຳວ່າ :

– ສະລະສະຫຼົງ(໑) ຈຶ່ງຄ່ອຍມາເຕືອຫນຶ່ງ ເຊີນຂຶ້ນເມືອນັ່ງຫຼິ້ນ ເທິງເຮືອນແມ້ແອ່ງ(໒)

ທ້າວຫນອມກື່ວຫນ້າແດງ ຕົນໂຕສັ່ນໆ ບໍ່ຮູ້ວ່າຈະຕອບແນວໃດ ໄລຍະຫນຶ່ງ ລາວຈຶ່ງຄິດອອກວ່າ: ໂອ ແມ່ນແລ້ວ ເມື່ອຜູ້ຍິງເວົ້າມາ ຜູ້ຊາຍກໍຕ້ອງເວົ້າຕອບໄປຄວາມໃດຄວາມຫນຶ່ງ ຄືຈັ່ງຄູ່ຍິງຊາຍເວົ້າກັນແຮງໆ ຄືເຮົາໄດ້ຍິນ ຢູ່ເຮືອນທີ່ກາຍມານັ້ນ ຄິດແນວນັ້ນແລ້ວ ຫນອມກື່ວກໍຕອບໄປຄືຄວາມພົວດ່າເມຽ ທີ່

໑. ດົນໆຈຶ່ງມາເທື່ອຫນຶ່ງ. ໒. ແອ່ງ ແປວ່າ ອ້າຍ.

ລາວຈຳມາໄດ້ວ່າ:

- ແມ່ຕາຍດັບ ແມ່ຕາຍຮ່າມຶງເອີ້ຍ ໃຫ້ມຶງຕາຍນຳອ້າຍ[໑] ນຳເອັນ[໔]ມຶງເສຍ !

ໄດ້ຍິນຄຳບໍ່ດີເວົ້າໃສ່ຕົນຄືແນວນັ້ນ ຜູ້ສາວກໍຍັງອົດທົນ ບໍ່ຄຽດບໍ່ໜີໄປ ພຽງແຕ່ເວົ້າເຢາະເຍີ້ຍເບົາໆວ່າ :

- ອາຍມາຊ່າງປາກຊ່າງເວົ້າແທ້ເດ້

ທ້າວໝອນກືວຜັດຟ້າວຕອບຊ້ຳຕື່ມອີກວ່າ :

- ອີ່ແມ່ຕາຍດັບຕາຍຮ່າ ເກືອໝົ່ນແມ່ງໝົ່ນກ່າ[໕] ມຶງເອີ້ຍ !

ຍິງສາວຄົນນັ້ນ ຕັ້ງແຕ່ເກີດມາຮອດໃຫຍ່ເປັນສາວ ບໍ່ເຄີຍຖືກໃຜດ່າ ຮ້າຍແຮງ ເຖິງຂັ້ນນີ້ຈັກເທື່ອ ນາງຮູ້ສຶກເສັຽໃຈຫຼາຍ ຈົນອົດບໍ່ໄດ້ກໍເລີຍລຸກຍ່າງໜີປະໃຫ້ໝອນກືວນັ່ງເປົ້ເຈົ້ຢູ່ຄົນດຽວ

ໝອນກືວເຫັນຜູ້ສາວລຸກຍ່າງໜີກໍຮອດບໍ່ເຂົ້າໃຈຊ້ຳວ່າ ເຂົາຄຽດໃຫ້ຕົນ ລາວນັ່ງຖ້າຢູ່ດົນ ແຕ່ກໍບໍ່ເຫັນນາງອອກມາ ທ້າວໝອນກືວຈຶ່ງຈຳຕ້ອງໄດ້ກັບເມືອເຮືອນຂອງຕົນ

ເມື່ອຮອດເຮືອນ ຜູ້ເປັນແມ່ຖາມລູກດ້ວຍຄວາມເປັນຫ່ວງວ່າ:

- ເປັນຈັ່ງໃດລູກ ຖືກອົກຖືກໃຈກັບໃຜແດ່ບໍ່ ?

ໝອນກືວຕອບແມ່ວ່າ: ມີແຕ່ຕົນມັກສາວ ແຕ່ຜູ້ສາວຜັດບໍ່ມັກຕອບ ແມ່ຈຶ່ງຖາມວ່າ: ເປັນຫຍັງຈຶ່ງຮູ້ວ່າ ເຂົາບໍ່ມັກຕົນ ? ທ້າວກໍເລົ່າຄືນໃຫ້ແມ່ຟັງວ່າ : ຕົນເອງ "ພຽງແຕ່" ເວົ້າວ່າ "ອີ່ແມ່ຕາຍດັບຕາຍຮ່າ ເກືອໝົ່ນແມ່ງໝົ່ນກ່າ ມຶງເອີ້ຍ" ແລ້ວຜູ້ສາວຮີບລຸກປົດປັດໜີ ແລະ ບໍ່ກັບມາອີກ ປະໃຫ້ທ້າວນັ່ງເຫງົາ - ນອນຢູ່ຄົນດຽວ

ເມື່ອໄດ້ຍິນລູກເລົ່າສຸດ ແມ່ນ້ຳຕາຕົກ ຍ່າວຍ່າວ ເພາະເສັຽໃຈຫຼາຍ ທີ່ລ້ຽງລູກມາລຳບາກ ໄດ້ເກືອບເຂົ້າຊາວປີມາແລ້ວ ແຕ່ລູກກໍຍັງບໍ່ທັນຮູ້ຈັກຄວາມ..

ຊາວບ້ານຮູ້ຈັກເລື່ອງດັ່ງກ່າວ ພາກັນຫົວຂວັນ ແລະ ຈຳເລື່ອງນີ້ໄວ້ເລົ່າຕໍ່ເປັນນິທານສອນລູກຫຼານສືບຕໍ່ກັນມາ ຈົນຮອດທຸກວັນນີ້

---

໑. ອ້າຍ = ພໍ່ ໔. ເອັນ = ແມ່ ໕. ເກືອໝົ່ນ...



# ລີງ ນ້ອຍ

ມີນິທານເລື່ອງໜຶ່ງ ເວົ້າເຖິງຫອຍທີ່ເປັນສັດມັກຢູ່ຊຸ່ມກິນເຢັນຄ່ອຍໄຕ່ຄ່ອຍຍ້າຍ ກັບລີງ ເຊິ່ງເປັນສັດທີ່ມີນິໄສກົງກັນຂ້າມ ພວກລີງນີ້ ມີນິໄສກະລອກກະແລກ ມັກເຕັ້ນໂອ່ນໂຍນໂຕໄປຕາມຕົ້ນໄມ້ ເຄືອໄມ້ ແລະ ງ່າໄມ້ຢ່າງວ່ອງໄວທັງມັກອວດອີ່ງທະນົງຕົວໝິ່ນປະໝາດຜູ້ອື່ນນຳດອຍ.

ມື້ໜຶ່ງ ລີງລົງໄປກິນນ້ຳແຄມຫວຍເຫັນຫອຍກຳລັງໄຕ່ຊ້າງ ຢູ່ງ່າໄມ້ແຊ່ນ້ຳກໍເລີຍຫົວງວ່າ :

- ໂອ້ຫອຍເອີຍ ! ມຶງຄືໄປຊ້ານາຊ້າເອົາແທ້ງ, ໄປມາແນວນີ້ຊິໄດ້ຢູ່ໄດ້ກິນຫຍັງນຳເຂົາບໍ ? ຕາຍແລວ ມາເປັນຕາຢາກຫົວແທ ! ວ່າແລວ ລີງກໍຫົວແຄະໆໜັກແຮງ, ຫອຍໄດ້ຍິນຄຳເວົ້າສຽດສີຂອງລີງແນວນັ້ນ ກໍຕອບໄປເປັນສຽງສະໝ່ຳສະເໝີທຸ່ນທ່ຽງ ແລະ ຈະແຈ້ງວ່າ :

- ເອີ້ ! ລີງເອີຍ ທຳມະຊາດເຊື້ອພວກຂ້ອຍຕ້ອງຍ່າງຕ້ອງໄປແນວນີ້ ແຕ່ພວກຂ້ອຍຍ່າງຈັ່ງຊີ້ ເດີນຈັ່ງຊີ້ອາດຈະສາມາດໄປໄດ້ໄວກ່ອນເຈົ້າພຸ້ນກໍເປັນໄດ້ໄດ້

ໄດ້ຍິນແນວນັ້ນ ລີງເກີດໂມໂຫທັນທີ ເວົ້າໃສ່ຫອຍໜັກແຮງວ່າ :

- ໂທ! ເຈົ້າເກ່ງຫວະ, ມາແລ່ນແຂ່ງກັນເບິ່ງເບາະ ?

ຫອຍຕອບຂຶ້ນວ່າ :

- ເອົາໂລດແຫຼວ ແຂ່ງກໍ່ແຂ່ງລະບໍ ແຕ່ວ່າ ມື້ອື່ນພຸ້ນໄດ໋ຈຶ່ງເລີ່ມຕົ້ນເພາະມື້ນີ້ພວກຂ້ອຍຊິພັກເອົາແຮງໄວ້ກ່ອນ.

ລິງຕອບວ່າ :

- ໂອຍ ! ວັນເວລາສຳລັບຂ້ອຍບໍ່ສຳຄັນດອກ ມື້ໃດກໍ່ໄດ້ ລິງເວົ້າທັງຫົວ ແລ້ວຈຶ່ງເວົ້າຕໍ່ອີກວ່າ : ແຕ່ວ່າບາດພວກເຮົາແລ່ນເສັງກັນ ຂ້ອຍໄປທາງບົກເຈົ້າໄປທາງນ້ຳ ເຮັດແນວໃດຈຶ່ງຈະຮູ້ວ່າ ໃຜແລ່ນຮອດໃສ ?

ຫອຍຕອບວ່າ :

- ເມື່ອເຈົ້າແລ່ນໄປຮອດໃສແລ້ວ ຕ້ອງການຢາກຮູ້ວ່າຂ້ອຍຮອດໃສກໍ່ຮ້ອງຂ້ອຍ ຂ້ອຍຊິເປັນຜູ້ຂານ.

ລິງຕົກລົງເຫັນດີນຳຫອຍທຸກຢ່າງ ແຕ່ກໍ່ບໍ່ສິ້ນສຸດໃນຄວາມຄຶດຢາກຫົວໃນໃຈ ເພາະວ່າ ຫອຍເປັນສັດໄປຊ້ານາຊາທີ່ສຸດ ແລ່ນກໍ່ບໍ່ເປັນຊ້ຳ ປານນັ້ນ ຍັງກ້າຕົກລົງວ່າຊິແລ່ນແຂ່ງກັບເອົາຜູ້ມີແຂນຂາຍາວ. ເຖິງຫອຍຊິທ່ອນແຮງແລ່ນ ແລະເຖິງຊິແລ່ນດ້ວຍຄວາມໄວອະຫນາດສູງສຸດຂອງມັນກໍ່ຕາມ ກໍ່ບໍ່ຫ່ອນສາມາດເອົາຊະນະພວກລິງໄດ້ດອກ ! ຄຶດດັ່ງນັ້ນແລ້ວ ລິງກໍ່ແນ່ໃຈວ່າ ແນວໃດໂຕກໍ່ຈະແມ່ນຜູ້ຊະນະໃນຂັ້ນແຂ່ງຂັນແລ່ນທີ່ຈະຈັດຂຶ້ນໃນມື້ອື່ນນີ້ຢ່າງແນ່ນອນ.

ສ່ວນຫມູ່ຫອຍ ເມື່ອຮູ້ເລື່ອງດັ່ງກ່າວ ກໍ່ໄຕ່ມາຈາກທຸກຫ້ວຍຫນອງຄອງບຶງທີ່ຢູ່ຕາມປ່າແຫ່ງນີ້ ແລ້ວເຕົ້າໂຮມກັນຕົກລົງວ່າ ບາດຮອດຍາມເສັງແລ່ນມາ ຖ້າລິງແລ່ນໄປຮອດບ່ອນໃດ ແລະ ຖ້າລິງເອີ້ນຫາຫອຍພວກເຮົາຈຶ່ງໃຫ້ຫອຍໂຕທີ່ຢູ່ຫນອງຫຼືຫ້ວຍເບື້ອງຫນ້າລິງນັ້ນຂານຕອບໂລດ. ເຮັດແນວນັ້ນ ເພື່ອໃຫ້ລິງເຂົ້າໃຈ ວ່າ ຫອຍແລ່ນລ່ວງຫນ້າໄປກ່ອນແລ້ວ ພວກຫອຍຕົກລົງກັນແນວນັ້ນແລ້ວ ຕ່າງກໍ່ກັບຄືນທີ່ຢູ່ປະຈຳຂອງໃຜລາວ.

ຕົກມື້ໃຫມ່ມາ ການແລ່ນເສັງກັນລະຫວ່າງລິງກັບຫອຍໄດ້ເລີ່ມຕົ້ນ ລິງແລ່ນໄປໄດ້ຊົ່ວໄລຍະຫນຶ່ງ ແລ້ວກໍ່ທົດລອງເອີ້ນໃສ່ຫອຍວ່າ :

- ຮອດໃສແລ້ວຫອຍເອີຍ ?
- ເອີ້ຍ... ຂ້ອຍຢູ່ເຫນືອພີ້ນາ.

ສຽງດັງມາຈາກເບື້ອງຫນ້າຂອງລິງ ດັ່ງນັ້ນ ລິງຈຶ່ງເຂົ້າໃຈວ່າ : ໂອຍ

ຕາຍແລ້ວຫອຍມັນແລ່ນກາຍແລ້ວດູນີ້ ຄິດແລ້ວລີງກໍ່ຟ້າວແລ່ນຢ່າງເອົາເປັນ ເອົາ
ຕາຍ ແລ່ນຕໍ່ໄດ້ໄລຍະໄກເຕີບແລ້ວພູ້ດເອີ້ນຫາຫອຍຄືເກົ່າອີກວ່າ :

- ຫອຍເອີຍ ! ຮອດໃສແລ້ວ ?

ສຽງຕອບດັງມາຈາກໄກກວ່າເກົ່າອີກ ເປັນສຽງກ້ອງມາວ່າ :

- ເຮີຍ ! ຢູ່ພີ້ນູ້າ, ຂ້ອຍຮອດພີ້ແລ້ວດູ...

ເຫັນດັ່ງນັ້ນ ລີງຟ້າວແລ່ນຫິວປີກຫິວປ້າ ແລ້ວກໍ່ຮ້ອງໃສ່ຫອຍອີກຄືເກົ່າ ແຕ່
ຍາມໃດກໍ່ໄດ້ຍິນສຽງຮ້ອງຕອບຂອງຫອຍດັງມາຈາກເບື້ອງຫນ້າບ່ອນທີ່ຕົນກຳລັງ -
ແລ່ນໄປຢູ່ນັ້ນຕະຫຼອດ ລີງຮູ້ສຶກເມື່ອຍຫຼາຍຫມົດກຳລັງທີ່ຈະແລ່ນຕໍ່ອີກ ດັ່ງນັ້ນ ຈຶ່ງ
ຍອມເສຍໄຊໃຫ້ຫອຍທັ້ງທີ່ບໍ່ເຂົ້າໃຈເລີຍວ່າ ເປັນຫຍັງຫອຍໂຕນ້ອຍໆ ໄປຊ້ານາ
ຊ້າທີ່ສຸດນັ້ນ ພັດສາມາດແລ່ນເອົາຊະນະມັນໄດ້.

ຕັ້ງແຕ່ນັ້ນມາ ລີງບໍ່ກ້າທ້າທາຍຫມິ່ນປະຫມາດຫອຍອີກຈັກເທື່ອເລີຍ.



# ສາລະບານ


| ເລື່ອງ | ໜ້າ |
|---|---|
| ຄຳນຳ | ໑ |
| ໑. ທ້າວນູຕົງແລະນາງເກົ້າ | ໕ |
| ໒. ນົກເຄົ້າແລະຟານ | ໑໑ |
| ໓. ຕັກແຕນແລະລີງ | ໑໕ |
| ໔. ກາແລະນົກຍູງ | ໑໗ |
| ໕. ກ່ຳພາແລະເທວັນ | ໒໑ |
| ໖. ທາວກ່ຳພອຍ " ຂໍ " | ໒໗ |
| ໗. ໝາກັບແມວໄປເອົາແກ້ວ | ໓໓ |
| ໘. ຜີຍ່າວ່ອນ | ໔໕ |
| ໙. ກະຕ່າຍໄປຫາພະຍານາກ | ໕໐ |
| ໑໐. ກັບແກຕາໂປ | ໕໓ |
| ໑໑. ທາວໝອນກື້ວ | ໕໗ |
| ໑໒. ລີງແລະຫອຍ | ໖໒ |

ນິທານ ສິບສອງເລື່ອງ ທີ່ຈັດພິມ ໃນປື້ມເຫຼັ້ມນີ້ ແມ່ນ ໝາກຜົນ
ຂອງນັກວັນນະຄະດີ ຣຸ່ນໃໝ່ ຂຽນດ້ວຍ ສຳນວນທັນສະໄໝກໍ່ມີ ເປັນສຳ
ນວນແບບຜູ້ເຖົ້າກໍ່ມີ ນັບແມ່ນຄວາມພະຍາຍາມ ອັນທຳອິດ ໃນການສືບ
ທອດ ວັນນະກຳປາກເປົ່າ ຂອງແຕ່ລະທ້ອງຖິ່ນ ໄວ້ເປັນຮູບ ຕົວອັກສອນ
ເພື່ອໃຫ້ວັນນະກຳປະເພດນີ້ ຄົງຕົວຢ່າງຖາວອນ ແລະ ໝັກແໜ້ນກ່ວາເກົ່າ.